ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ມາດຕະຖານຂັ້ນຕອນການຄຸ້ມຄອງກໍລະນີ ກ່ຽວກັບການປົກປ້ອງເດັກ


KOICA
People Peace Prosperity Planet
IPCREA
Australian Aid
unicef
ເພື່ອເດັກທຸກໆຄົນ
United For Every Child: 50th Anniversary of UNICEF in Lao PDR

© 2022 ສະຫງວນລິຂະສິດ.

ມາດຕະຖານຂັ້ນຕອນ ການຄຸ້ມຄອງກໍລະນີກ່ຽວກັບການປົກປ້ອງເດັກສະບັບນີ້ ອາດຈະຖືກຈັດພິມຄືນໃໝ່ທັງໝົດ ຫຼື ບາງສ່ວນ ໂດຍມີເງື່ອນໄຂວ່າຕ້ອງສະແດງການຮັບຮູ້ແຫຼ່ງທີ່ມາຂອງການພິມເອກະສານສະບັບນີ້. ການຈັດພິມເອກະສານສະບັບນີ້ຕ້ອງໄດ້ຮັບການອະນຸຍາດກ່ອນ. ກະລຸນາຕິດຕໍ່: ກົມສັງຄົມສົງເຄາະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ທີ່ WEBSITE: WWW.MOLSW.GOV.LA ໂທ: 021 213005

ຈັດພິມໂດຍ: ພະແນກປົກປ້ອງເດັກ ອົງການ UNICEF ປະຈຳ ສປປ ລາວ ແລະ ກົມສັງຄົມສົງເຄາະ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

ທ່ານ ນາງ ຢອງ ຈູລີ, ຊ່ຽວຊານວຽກງານປົກປ້ອງເດັກ ອົງການຢູນິເຊັບປະຈຳ ສປປ ລາວ ເປັນເຈົ້າການໃນການນຳພາການສ້າງເອກະສານສະບັບນີ້. ຂໍສະແດງຄວາມຂອບໃຈມາຍັງ ກອງເລຂາຄະນະກຳມະການປົກປ້ອງ ແລະ ຊ່ວຍເຫຼືອເດັກຂັ້ນສູນກາງ ແລະ ທີມງານປົກປ້ອງເດັກຂອງອົງການ ຢູນິເຊັບປະຈຳ ສປປ ລາວ ໃນການກວດແກ້ ແລະ ຮຽບຮຽງເນື້ອໃນຂອງມາດຕະຖານຂັ້ນຕອນການຈັດຕັ້ງປະຕິບັດການຄຸ້ມຄອງກໍລະນີກ່ຽວກັບປົກປ້ອງເດັກ ສະບັບນີ້.

ໝາຍເຫດ: ບັນດາຮູບພາບຕ່າງໆ ແລະ ຮູບຂອງເດັກທີ່ຢູ່ໃນເອກະສານນີ້ ບໍ່ມີການກ່ຽວຂ້ອງກັບເລື່ອງ ຫຼື ບັນຫາຄວາມຮຸນແຮງ ແລະ ຄວາມສ່ຽງກ່ຽວກັບການປົກປ້ອງເດັກແຕ່ຢ່າງໃດ.

ການຈັດພິມໃນຄັ້ງນີ້ໄດ້ຮັບການສະໜັບສະໜູນໂດຍ ອົງການຮ່ວມມືສາກົນຂອງສາທາລະນະລັດເກົາຫຼີ (KOICA), ອົງການຢູນິເຊັບປະຈຳປະເທດ ອົດສະຕຣາລີ ແລະ ລັດຖະບານອົດສະຕຣາລີ ຜ່ານກະຊວງການຕ່າງປະເທດ ແລະ ການຄ້າຂອງອົດສະຕຣາລີ (DFAT). ເນື້ອໃນຂອງເອກະສານນີ້ ແມ່ນຄວາມຮັບຜິດຊອບຂອງລັດຖະບານແຫ່ງ ສປປ ລາວ ແລະ ບໍ່ຈຳເປັນແມ່ນທັດສະນະຂອງ ອົງການ KOICA, ລັດຖະບານແຫ່ງສາທາລະນະລັດເກົາຫຼີ, ກະຊວງການຕ່າງປະເທດ ແລະ ການຄ້າຂອງອົດສະຕຣາລີ ຫຼື ລັດຖະບານອົດສະຕຣາລີ

# ສາລະບານ


ຄຳນຳ ... 2

ຕົວຫຍໍ້ ... 3

ການອະທິບາຍຄຳສັບ ... 4

ພາກທີ I : ພາກສະເໜີ ... 9

1. ຄວາມເປັນມາ ... 9
2. ນິຕິກຳທີ່ກ່ຽວຂ້ອງກັບການປົກປ້ອງເດັກ ... 10
3. ຈຸດປະສົງ ... 10
4. ການຄຸ້ມຄອງກໍລະນີ ... 11
5. ການຈັດປະເພດຂອງກໍລະນີການປົກປ້ອງເດັກ ... 11
6. ຫຼັກການການຄຸ້ມຄອງກໍລະນີ ... 12
7. ພາລະບົດບາດ ແລະ ຄວາມຮັບຜິດຊອບ ... 13

ພາກທີ II : ຂະບວນການຄຸ້ມຄອງກໍລະນີ ... 19

1. ການລະບຸ ແລະ ການລົງທະບຽນ ... 19
2. ການປະເມີນ ... 21
3. ການວາງແຜນກໍລະນີ ... 24
4. ການຈັດຕັ້ງປະຕິບັດແຜນກໍລະນີ ... 24
5. ການຕິດຕາມກໍລະນີ ... 30
6. ການປິດກໍລະນີ ... 31

ພາກທີ III : ເຄື່ອງມືສຳລັບການຄຸ້ມຄອງກໍລະນີ ... 33

1. ແບບຟອມການລົງທະບຽນກໍລະນີ ... 34
2. ແບບຟອມການປະເມີນເດັກ ... 36
3. ແບບຟອມການປະເມີນຄອບຄົວ ... 39
4. ແບບຟອມການວາງແຜນກໍລະນີ ... 44
5. ແບບຟອມການສົ່ງຕໍ່ ... 47
6. ເສັ້ນທາງການສົ່ງຕໍ່ ... 48
7. ເຄື່ອງມືການວາງແຜນການບໍລິການ ... 49
8. ແບບຟອມກອງປະຊຸມກໍລະນີ ... 52
9. ແບບຟອມທົບທວນກໍລະນີ ... 54
10. ແບບຟອມການປິດກໍລະນີ ... 57
11. ຄຳແນະນຳສຳລັບການໄປຢ້ຽມຢາມເຮືອນ ... 60
12. ສິ່ງທີ່ຄວນເຮັດ ແລະ ສິ່ງທີ່ບໍ່ຄວນເຮັດ ... 61
13. ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງ ຕປດ ... 62
14. ຫຼັກຈັນຍາບັນ ... 63
15. ແບບຟອມເກັບກຳຂໍ້ມູນ ແລະ ການລາຍງານຂອງຂັ້ນເມືອງ ແລະ ແຂວງ ... 66
16. ແບບຟອມການເກັບຮັກສາບົດສະຫຼຸບຂອງບ້ານ ... 67

# ຄຳນຳ

ມາດຕະຖານຂັ້ນຕອນການຄຸ້ມຄອງກໍລະນີກ່ຽວກັບການປົກປ້ອງເດັກ ສະບັບນີ້ ສ້າງຂຶ້ນເພື່ອເປັນການຈັດຕັ້ງຜັນຂະຫຍາຍ ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ແນໃສ່ໃຫ້ເດັກທຸກຄົນໄດ້ຮັບການປົກປ້ອງຢ່າງເຕັມສ່ວນ. ການຊ່ວຍເຫຼືອເດັກທີ່ຕ້ອງການປົກປ້ອງພິເສດ ແລະ ເດັກທີ່ມີຄວາມສ່ຽງ ຈຳເປັນຕ້ອງມີກົນໄກການຄຸ້ມຄອງກໍລະນີທີ່ເຂັ້ມແຂງ ສາມາດເຮັດໜ້າທີ່ໃນການຄຸ້ມຄອງກໍລະນີທັງໃນສະພາບປົກກະຕິ ແລະ ໃນສະຖານະການສຸກເສີນ, ລວມສູນ ແລະ ຕໍ່ເນື່ອງ.

ການພັດທະນາມາດຕະຖານສະບັບນີ້ ໄດ້ມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ເປັນຕົ້ນ: ກະຊວງຍຸຕິທຳ, ກະຊວງສຶກສາທິການ ແລະ ກິລາ, ກະຊວງສາທາລະນະສຸກ, ກະຊວງປ້ອງກັນຄວາມສະຫງົບ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ສູນກາງສະຫະພັນແມ່ຍິງລາວ, ຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າແມ່ຍິງ, ແມ່ ແລະ ເດັກ, ອົງການ UNICEF ປະຈຳລາວ, ອົງການ Friend International ແລະ ອົງການຈັດຕັ້ງສາກົນອື່ນທີ່ກ່ຽວຂ້ອງ. ເພື່ອເຮັດໃຫ້ການຄຸ້ມຄອງກໍລະນີເປັນລະບົບຄົບຊຸດ ໄດ້ກຳນົດ ຫຼັກການ, ຈັນຍາບັນ, ຂະບວນການ, ເຄື່ອງມື, ພາລະບົດບາດ, ຄວາມຮັບຜິດຊອບຂອງແຕ່ລະຂະແໜງການໃນການຄຸ້ມຄອງກໍລະນີ.

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໃນນາມປະທານຄະນະກຳມະການປົກປ້ອງ ແລະ ຊ່ວຍເຫຼືອເດັກ ຂັ້ນສູນກາງ ຂໍສະແດງຄວາມຊົມເຊີຍມາຍັງພາກສ່ວນທີ່ກ່ຽວຂ້ອງ ທັງຂັ້ນສູນກາງ-ທ້ອງຖິ່ນ, ອົງການຈັດຕັ້ງສາກົນ, ຊ່ຽວຊານທີ່ໄດ້ທຸ້ມເທເຫື່ອແຮງສະຕິປັນຍາ ແລະ ພິເສດ ຂໍຂອບໃຈມາຍັງ ອົງການ UNICEF, ອົງການ KOICA ປະຈຳ ລາວ ແລະ ລັດຖະບານ ປະເທດ ອິດສະຕຣາລີ ທີ່ໄດ້ໃຫ້ການສະໜັບສະໜູນດ້ານງົບປະມານ ເຂົ້າໃນການສ້າງມາດຕະຖານຂັ້ນຕອນການຄຸ້ມຄອງກໍລະນີກ່ຽວກັບການປົກປ້ອງເດັກ ສະບັບນີ້.

ຫວັງຢ່າງຍິ່ງວ່າ, ມາດຕະຖານຂັ້ນຕອນການຄຸ້ມຄອງກໍລະນີ ກ່ຽວກັບການປົກປ້ອງເດັກ ສະບັບນີ້ ຈະຖືກນຳໃຊ້ໂດຍບຸກຄະລາກອນສັງຄົມສົງເຄາະ ເພື່ອໃຫ້ເດັກທີ່ຕ້ອງການໆຊ່ວຍເຫຼືອ ໄດ້ຮັບການບໍລິການຄຸ້ມຄອງກໍລະນີທີ່ມີການປະສານງານ ຢ່າງເປັນລະບົບສົມບູນຂຶ້ນ. ພວກເຮົາຈະສືບຕໍ່ຮ່ວມມືກັບທຸກພາກສ່ວນ ໃນການພັດທະນາລະບົບປົກປ້ອງເດັກໃຫ້ມີປະສິດທິພາບຫຼາຍຂຶ້ນ ເພື່ອປົກປ້ອງເດັກທຸກຄົນ.

**ຮອງລັດຖະມົນຕີ**

**ກະຊວງແຮງງານ ແລະ ສະຫວັດດີການສັງຄົມ**

**ປະທານຄະນະກຳມະການປົກປ້ອງ ແລະ ຊ່ວຍເຫຼືອເດັກ ຂັ້ນສູນກາງ**

ລີປາວ ປ່າງ

# ຄຳຫຍໍ້

| | |
|---|---|
| **ຄປດ** | ຄະນະກຳມະການປົກປ້ອງ ແລະ ຊ່ວຍເຫຼືອເດັກ |
| **ຕປດ** | ຕາໜ່າງປົກປ້ອງເດັກ |
| **ສສດ** | ສົນທິສັນຍາວ່າດ້ວຍສິດທິເດັກ ຂອງອົງການ ສປຊ |
| **HIV/AIDS** | ເຊື້ອເອັສໄອວີ/ເອດ |
| **ສປປ ລາວ** | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ |
| **ສຍລ** | ສູນກາງສະຫະພັນແມ່ຍິງລາວ |
| **ສຊລ** | ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ |
| **MHPSS** | ການສະໜັບສະໜູນດ້ານສຸຂະພາບຈິດ ແລະ ຈິດຕະ-ສັງຄົມ |
| **ກຊ ສສກ** | ກະຊວງສຶກສາທິການ ແລະ ກິລາ |
| **ກຊ ສທສ** | ກະຊວງ ສາທາລະນະສຸກ |
| **ກຊ ຮສສ** | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ |
| **ກຊ ຍຕທ** | ກະຊວງຍຸຕິທຳ |
| **ກຊ ປກສ** | ກະຊວງປ້ອງກັນຄວາມສະຫງົບ |
| **ສານ ປຊສ** | ສານປະຊາຊົນສູງສຸດ |
| **ອຍກ** | ອົງການໄອຍະການປະຊາຊົນສູງສຸດ |
| **SOP** | ມາດຕະຖານການຈັດຕັ້ງປະຕິບັດ |
| **UNICEF** | ອົງການສະຫະປະຊາຊາດກອງທຶນສຳລັບເດັກ |

# ການອະທິບາຍຄຳສັບ

**ຄວາມໝາຍຄຳສັບທີ່ໃຊ້ໃນມາດຕະຖານຂັ້ນຕອນການຄຸ້ມຄອງກໍລະນີກ່ຽວກັບການປົກປ້ອງເດັກ ສະບັບນີ້**

**ກໍລະນີ:** ແມ່ນບຸກຄົນ ຫຼື ຄອບຄົວທີ່ກຳລັງຮັບການຊ່ວຍເຫລືອເພື່ອແກ້ໄຂບັນຫາທີ່ກ່ຽວຂ້ອງກັບການປົກປ້ອງເດັກ.

**ການຄຸ້ມຄອງກໍລະນີ:** ແມ່ນຂະບວນການໃຫ້ການຊ່ວຍເຫຼືອເດັກແຕ່ລະຄົນ ແລະ (ຄອບຄົວເດັກ)ໂດຍການຊ່ວຍເຫຼືອໂດຍກົງ ແລະ ການສົ່ງຕໍ່ເພື່ອຮັບການຊ່ວຍເຫຼືອທີ່ຈຳເປັນ ແລະ ແມ່ນບັນດາກິດຈະກຳ ທີ່ຜູ້ຄຸ້ມຄອງກໍລະນີ, ນັກສັງຄົມສົງເຄາະ ຫຼືບຸກຄະລາກອນ ທີ່ເຮັດວຽກກ່ຽວຂ້ອງກັບເດັກ ແລະ ຄອບຄົວໃນການແກ້ໄຂບັນຫາທີ່ກ່ຽວຂ້ອງກັບການປົກປ້ອງ ເດັກ ແລະ ຄອບຄົວ[9]

**ຜູ້ຄຸ້ມຄອງກໍລະນີ:** ແມ່ນຜູ້ເຮັດວຽກໂດຍກົງ ໃນການຄຸ້ມຄອງກໍລະນີສະເພາະໃດໜຶ່ງ.

**ຜູ້ຮັບຜິດຊອບຊ່ວຍເຫຼືອກໍລະນີ:** ໝາຍເຖິງ ເຄືອຂ່າຍການສົ່ງຕໍ່ກໍລະນີເພື່ອແກ້ໄຂ ຫຼື ໃຫ້ການຊ່ວຍເຫຼືອສະເພາະດ້ານ ເຊັ່ນ: ຂະແໜງສາທາລະນະສຸກ, ສຶກສາທິການ ແລະ ກິລາ, ສະຫະພັນແມ່ຍິງ, ຍຸຕິທຳ, ປ້ອງກັນຄວາມສະຫງົບ, ສູນບໍລິການທາງສັງຄົມ.

**ເດັກ:** ໝາຍເຖິງບຸກຄົນທີ່ມີອາຍຸ ຕໍ່າກວ່າ 18 ປີ.

**ການທາລຸນ** ແມ່ນການກະທຳ ຫຼື ການເມີນເສີຍ ຊຶ່ງເປັນການທຳຮ້າຍຮ່າງກາຍ, ທຳຮ້າຍຈິດໃຈຂອງເດັກ, ການລ່ວງລະເມີດທາງເພດຕໍ່ເດັກ, ການຍຸຍົງໃຫ້ເດັກກະທຳຜິດ ຫຼື ກະທຳໃນສິ່ງທີ່ມີຜົນສະທ້ອນຕໍ່ຮ່າງກາຍ ຫຼື ຈິດໃຈຂອງເດັກ.[37] ການທາລຸນລວມມີທຸກຮູບແບບ ຂອງການປະຕິບັດທີ່ບໍ່ດີທາງດ້ານຮ່າງກາຍ, ທາງເພດ, ທາງຈິດໃຈ ຫຼື ທາງອາລົມ.[38]

**ການປະຖິ້ມ** ໝາຍເຖິງ ການປ່ອຍປະຈາກພໍ່ແມ່ ຫຼື ຜູ້ປົກຄອງ ໃນການຄຸ້ມຄອງເບິ່ງແຍງ ແລະ ລ້ຽງດູ[39]

**ຄວາມຮຸນແຮງ** ໄດ້ຖືກກຳນົດວ່າເປັນການໃຊ້ກຳລັງທາງດ້ານຮ່າງກາຍໂດຍເຈດຕະນາ, ມີການຂົ່ມຂູ່ ຫຼື ເຮັດຕົວຈິງ ທີ່ສົ່ງຜົນໃຫ້ມີການບາດເຈັບ, ການເສຍຊີວິດ, ອັນຕະລາຍທາງຈິດໃຈ, ຂັດຂວາງການພັດທະນາ ຫຼື ເຮັດໃຫ້ມີການຂາດເຂີນ.[40]

**ຜົນປະໂຫຍດອັນສູງສຸດຂອງເດັກ** ແມ່ນຫຼັກການສິດທິເດັກ, ເຊິ່ງຜູ້ໃຫຍ່ຈະຕ້ອງເຮັດສິ່ງທີ່ດີທີ່ສຸດສຳລັບເດັກ ໃນທຸກການເຄື່ອນ ໄຫວທີ່ກ່ຽວກັບເດັກ, ບໍ່ວ່າຈະເປັນການເຄື່ອນໄຫວໂດຍສະຖາບັນສະຫວັດດີການສັງຄົມຂອງລັດ ຫຼື ເອກະຊົນ, ສານ, ອຳນາດການປົກຄອງ ຫຼື ອົງການນິຕິບັນຍັດ ຄວນຄຳນຶງເຖິງຜົນປະໂຫຍດຂອງເດັກ ແລະ ໄວໜຸ່ມ ໃນທຸກລະດັບຂອງສັງຄົມ ແລະ ສິດທິຂອງເຂົາເຈົ້າຄວນຈະໄດ້ຮັບການເຄົາລົບຈາກຜູ້ມີສິດອຳນາດ.[41]

**ການກຳນົດຜົນປະໂຫຍດອັນສູງສຸດຂອງເດັກ** ແມ່ນການກຳນົດ ການເຄື່ອນໄຫວທີ່ເໝາະສົມທີ່ສຸດສຳລັບເດັກທີ່ຂາດການດູແລຂອງພໍ່ແມ່ ຫຼື ເດັກທີ່ມີຄວາມສ່ຽງຕໍ່ການຂາດການດູແລຂອງພໍ່ແມ່ ເພື່ອຕອບສະໜອງຄວາມຕ້ອງການ ແລະ ສິດທິຂອງເຂົາເຈົ້າ, ໂດຍໃຫ້ຄຳນຶງເຖິງການພັດທະນາຢ່າງເຕັມສ່ວນ ແລະ ການພັດທະນາສ່ວນບຸກຄົນຂອງເດັກໃນຄອບຄົວ, ສັງຄົມ ແລະ ວັດທະນະທຳ ແລະ ສະຖານະພາບຂອງເຂົາເຈົ້າໃນຖານະເປັນຜູ້ຖືສິດ ທັງໃນເວລາທີ່ກຳນົດການຈັດສັນທາງເລືອກໃນການດູແລໃຫ້ແກ່ເດັກຢູ່ໃນສະພາບແວດລ້ອມຄອບຄົວ ຫຼື ທາງເລືອກອື່ນໆໃນການດູແລເດັກ ແລະ ໃນໄລຍະຍາວ.[42]

**ກອງປະຊຸມກໍລະນີ** ແມ່ນການປະຊຸມເພື່ອປຶກສາຫາລືແກ້ໄຂບັນຫາທີ່ເກີດຂຶ້ນກັບເດັກ ຮ່ວມກັບພາກສ່ວນກ່ຽວຂ້ອງ ເຊັ່ນ:

---

37 ກົດໝາຍ ວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກນ້ອຍ. ມາດຕາ 2, ວັກທີ 15; ທັນວາ 2006

38 ອົງການຊ່ວຍເຫຼືອເດັກ:: http://resourcecentre.savethechildren.se/node/2144. ເຂົ້າເຖິງ ໃນເດືອນທັນວາ 2013

39 ກົດໝາຍ ວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກນ້ອຍ. ມາດຕາ 2, ວັກທີ 5 ; ທັນວາ 2006

40 ອົງການສະຫະປະຊາຊາດ, ບົດລາຍງານໂລກກ່ຽວກັບຄວາມຮຸນແຮງຕໍ່ເດັກນ້ອຍ, 2006.

41 ມາດຕາ 3 ຂອງສົນທິສັນຍາວ່າດ້ວຍສິດທິເດັກຂອງອົງການສະຫະປະຊາຊາດ, ປີ 1989.

42 ຄຳແນະນຳຂອງສະຫະປະຊາຊາດສຳລັບທາງເລືອກໃນການດູແລເດັກ, 2009.

ພໍ່ແມ່ຫຼື ຜູ້ປົກຄອງ, ຜູ້ດູແລ, ຄອບຄົວ, ຍາດພີ່ນ້ອງ, ນັກສັງຄົມສົງເຄາະ ຫຼື ນັກຈິດຕະວິທະຍາ, ຄູ, ແພດ, ຜູ້ປົກປ້ອງ, ຜູ້ນຳທາງສາສະໜາ (ເຈົ້າກົກເຈົ້າເຫຼົ່າ) ແລະ ພາກສ່ວນທີ່ບັງຄັບໃຊ້ກົດໝາຍ, ຊຶ່ງອາດໃຫ້ເດັກເຂົ້າຮ່ວມຕາມແຕ່ກໍລະນີ ຫຼື ຄວາມສະໝັກໃຈຂອງເດັກ.[43]

**ແຮງງານເດັກ** ໝາຍເຖິງ ແຮງງານໄວໜຸ່ມ ທີ່ບໍ່ອະນຸຍາດໃຫ້ເຮັດວຽກໃນຂະແໜງການ ແລະ ອາຊີບທີ່ເປັນອັນຕະລາຍ, ເຮັດວຽກເກີນເວລາປົກກະຕິ ແລະ ເຮັດວຽກໜັກ ລວມທັງເດັກທີ່ມີອາຍຸຕໍ່າກວ່າ ສິບສອງປີ ທີ່ເຮັດວຽກເສດຖະກິດ[44]

**ການແຕ່ງງານເດັກ** ແມ່ນການແຕ່ງງານທີ່ເປັນທາງການ ຫຼື ການສົມລົດທີ່ບໍ່ເປັນທາງການກ່ອນອາຍຸກະສຽນຮອດ 18 ປີ.[45]

**ເດັກກະທຳຜິດ** ໝາຍເຖິງເດັກທີ່ຖືກດຳເນີນຄະດີທາງອາຍາ: ໃນຖານະເປັນຜູ້ຖືກຫາ, ເປັນຈຳເລີຍ ຫຼື ຜູ້ຖືກສານຕັດສິນວ່າມີຄວາມຜິດທາງອາຍາ.[46]

**ການປົກປ້ອງເດັກ** ແມ່ນການປ້ອງກັນ ແລະ ຕອບໂຕ້ຕໍ່ການທາລຸນ, ຄວາມຮຸນແຮງ, ການຂູດຮີດ ແລະ ການປ່ອຍປະລະເລີຍ.[47]

**ການປົກປ້ອງຄວາມປອດໄພເດັກ** ແມ່ນການປະຕິບັດເພື່ອສົ່ງເສີມສະຫວັດດີການຂອງເດັກ ແລະ ປົກປ້ອງເຂົາເຈົ້າຈາກອັນຕະລາຍ.ການປົກປ້ອງຄວາມປອດໄພໝາຍເຖິງ: ການປົກປ້ອງເດັກຈາກການຖືກທາລຸນ ແລະ ການຂົ່ມເຫັງ; ການປ້ອງກັນອັນຕະລາຍຕໍ່ສຸຂະພາບ ຫຼື ການພັດທະນາຂອງເດັກ; ການຮັບປະກັນໃຫ້ເດັກໄດ້ຮັບການເຕີບໃຫຍ່ຂຶ້ນໂດຍການສະໜອງການດູແລທີ່ປອດໄພ ແລະ ມີປະສິດທິຜົນ; ການດຳເນີນການເພື່ອໃຫ້ເດັກ ແລະ ໄວໜຸ່ມທຸກຄົນໄດ້ຮັບຜົນປະໂຫຍດທີ່ດີທີ່ສຸດ.[48]

**ລະບົບປົກປ້ອງເດັກ** ລະບົບປົກປ້ອງເດັກຖືກກຳນົດວ່າເປັນ ໂຄງສ້າງ, ໜ້າທີ່ການ ແລະ ຄວາມສາມາດທີ່ເປັນທາງການ ແລະ ບໍ່ເປັນທາງການ ເຊິ່ງໄດ້ປະກອບຂຶ້ນເພື່ອປ້ອງກັນ ແລະ ແກ້ໄຂບັນຫາການໃຊ້ຄວາມຮຸນແຮງ, ການທາລຸນ, ການປ່ອຍປະລະເລີຍ ແລະ ການຂູດຮີດເດັກ.[49]

**ເດັກທີ່ໄດ້ຮັບຜົນກະທົບຈາກເຊື້ອເອັສໄອວີ/ໂຣກເອດ** ໝາຍເຖິງ ເດັກທີ່ເປັນໂຣກເອດ, ຕິດເຊື້ອເອັສໄອວີ, ເດັກທີ່ເປັນກຳພ້າ, ກຳ ພອຍ ທີ່ເນື່ອງມາຈາກເຊື້ອເອັສໄອວີ/ເອດ ຫຼື ເດັກທີ່ອາໄສຢູ່ກັບສະມາຊິກຄອບຄົວທີ່ເປັນໂຣກເອດ ຫຼື ຕິດເຊື້ອເອັສໄອວີ.[50]

**ເດັກພິການ** ໝາຍເຖິງເດັກທີ່ມີຄວາມບົກຜ່ອງທາງກາຍ, ຈິດໃຈ, ສະຕິປັນຍາ ຫຼື ຄວາມຮູ້ສຶກໃນໄລຍະຍາວ ເຊິ່ງອາດຂັດຂວາງການມີສ່ວນຮ່ວມຢ່າງເຕັມສ່ວນ ແລະ ປະສິດທິພາບຂອງການມີສ່ວນຮ່ວມໃນສັງຄົມບົນພື້ນຖານຄວາມສະເໝີພາບກັບຜູ້ອື່ນ.[51]

**ເດັກທີ່ຂາດການເບິ່ງແຍງລ້ຽງດູທີ່ເໝາະສົມ** ແມ່ນເດັກທີ່ບໍ່ໄດ້ຮັບການເບິ່ງແຍງລ້ຽງດູທີ່ເໝາະສົມ; ການດູແລເອົາໃຈໃສ່ ແລະ ໃຫ້ຄຳແນະນຳບອກສອນທີ່ເໝາະສົມ, ຕໍ່ເນື່ອງ ແລະ ມີຄຸນນະພາບ; ການລ້ຽງດູ ແລະ ການແນະນຳ ທັງທາງດ້ານ

---

43 Better Care Network Toolkit Glossary: http://bettercarenetwork.org/sites/default/files/attachments/glossary.pdf. ເຂົ້າເຖິງໃນເດືອນ ພຶດສະພາ 2022

44 ກົດໝາຍ ວ່າດ້ວຍແຮງງານ (ສະບັບປັບປຸງ). ມາດຕາ 2, ວັກທີ 11; ທັນວາ 2013.

45 ກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ຂໍ້ສະເໜີແນະເພື່ອສ້າງຄວາມເຂັ້ມແຂງລະບົບປົກປ້ອງເດັກໃນ ສປປ ລາວ. 2022.

46 ລັດຖະບານແຫ່ງ ສປປ ລາວ. ກົດໝາຍ ວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກນ້ອຍ. ມາດຕາ 2, ວັກທີ 12; ທັນວາ 2006.

47 http://www.unicef.org/chinese/protection/files/What_is_Child_Protection.pdf. ເຂົ້າເຖິງໃນເດືອນ ພຶດສະພາ2014.

48 ການປົກປ້ອງຄວາມປອດໄພເດັກ ແລະ ການປົກປ້ອງເດັກ https://learning.nspcc.org.uk

49 ວິທີທີ່ດີກວ່າໃນການປົກປ້ອງເດັກນ້ອຍທັງໝົດ: ທິດສະດີ ແລະ ການປະຕິບັດຕົວຈິງຂອງລະບົບປົກປ້ອງເດັກ. ບົດລາຍງານກອງປະຊຸມ, UNICEF 2013 p.3https://resourcecentre.savethechildren.net/node/7696/pdf/c956_cps_interi or_5_130620web_0.pdf

50 ລັດຖະບານແຫ່ງ ສປປ ລາວ. ກົດໝາຍ ວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກນ້ອຍ. ມາດຕາ 2, ວັກທີ 10; ທັນວາ 2006.

51 ສົນທິສັນຍາວ່າດວຍຄົນພິການ. ອົງການສະຫະປະຊາຊາດ, 2006 https://www.un.org/development/desa/disabilities/convention-on-the-rights-of-persons-with-disabilities/article-1-purpose.html

ຮ່າງກາຍ, ອາລົມ, ສັງຄົມ ແລະ ຈິດໃຈ ຈາກພໍ່ແມ່, ຜູ້ປົກຄອງ ຫຼື ຈາກຜູ້ໃຫ້ການເບິ່ງແຍງລ້ຽງດູ ຫຼື ຜູ້ທີ່ມີຄວາມຮັບຜິດຊອບຕໍ່ສະຫວັດດີພາບ ແລະ ການພັດທະນາຂອງເດັກ.[52]

**ເດັກທີ່ຂາດການເບິ່ງແຍງລ້ຽງດູຈາກພໍ່ແມ່** ແມ່ນເດັກທີ່ພໍ່ແມ່ ຫຼື ຜູ້ປົກຄອງ ບໍ່ໄດ້ໃຫ້ການປົກປ້ອງ, ການເບິ່ງແຍງລ້ຽງດູ ແລະ ການລ້ຽງດູ[53]

**ເດັກຂ້າງຖະໜົນ:** ໄດ້ຖືກຈັດປະເພດເປັນ ເດັກນ້ອຍຢູ່ຕາມຖະຫນົນ, ຜູ້ທີ່ເຮັດວຽກຢູ່ຕາມຖະຫນົນ ແລະ ກັບບ້ານໄປຫາຄອບຄົວຂອງເຂົາເຈົ້າໃນຕອນກາງຄືນ; ເດັກນ້ອຍຜູ້ທີ່ອາໄສຢູ່ຕາມຖະຫນົນ, ທີ່ໄດ້ເຮັດວຽກໂດຍບໍ່ໄດ້ຮັບການລ້ຽງດູ ຫຼື ການສະຫນັບສະຫນູນຈາກຄອບຄົວ ແຕ່ຍັງຕິດຕໍ່ກັບຄອບຄົວ; ຫຼືເດັກນ້ອຍທີ່ຖືກປະຖິ້ມໄວ້ຂ້າງຖະໜົນແຕ່ດໍາລົງຊີວິດຢູ່ດ້ວຍຕົນເອງແບບບໍ່ໄດ້ຮັບການສະໜັບສະໜູນ ຫຼື ຕິດຕໍ່ກັບຄອບຄົວ.[54]

**ເດັກຜູ້ເຄາະຮ້າຍຈາກການຄ້າມະນຸດ** ໝາຍເຖິງ ເດັກທີ່ໄດ້ຮັບຄວາມເສຍຫາຍໂດຍກົງທາງດ້ານສຸຂະພາບ, ຊີວິດ, ຈິດໃຈ, ກຽດສັກສີ, ເສລີພາບ ຫລື ຊັບສິນຈາກທຸກຮູບແບບຂອງການຄ້າມະນຸດ[55]

**ເດັກກໍາພອຍ** ໝາຍເຖິງ ເດັກທີ່ທັງພໍ່ ແລະ ແມ່ໄດ້ເສຍຊີວິດທັງໝົດ.[56]

**ເດັກກໍາພ້າ** ໝາຍເຖິງ ເດັກທີ່ພໍ່ ຫຼື ແມ່ໄດ້ເສຍຊີວິດ.[57]

**ເດັກບໍ່ເຂົ້າໂຮງຮຽນ** ໝາຍເຖິງ ເດັກທີ່ມີເກນອາຍຸເຂົ້າຮຽນ ແຕ່ບໍ່ໄດ້ເຂົ້າໂຮງຮຽນ.

**ເດັກທີ່ຖືກທໍາຮ້າຍຮ່າງກາຍ** ໝາຍເຖິງເດັກທີ່ຖືກທຸບຕີ ຫຼື ທໍລະມານ ຈາກພໍ່ແມ່, ຜູ້ປົກຄອງ ຫຼື ຜູ້ອື່ນໆ.[58]

**ເດັກທີ່ຖືກລະເມີດທາງເພດ** ໝາຍເຖິງເດັກທີ່ຖືກຂົ່ມຂືນ ຫຼື ຕົກເປັນເຫຍື່ອຂອງຄວາມສໍາພັນທາງເພດ ຫຼື ການລາມົກອານາຈານ.[59]

**ການຖືພາກ່ອນໄວອັນຄວນ** ຫມາຍເຖິງເດັກຍິງທີ່ມີການຖືພາກ່ອນອາຍຸ 18 ປີ.

**ການປ່ອຍປະລະເລີຍ** ແມ່ນການຂາດຄວາມເອົາໃຈໃສ່ຂອງ ພໍ່ແມ່ ຫຼື ຜູ້ປົກຄອງໃນການໃຫ້ການດູແລ, ການສຶກສາ, ກໍາລັງໃຈ, ແລະ ເງື່ອນໄຂທີ່ຈໍາເປັນສໍາລັບການພັດທະນາຂອງເດັກເຊັ່ນ: ການດູແລສຸຂະພາບ, ໂພຊະນາການ, ທີ່ພັກອາໄສທີ່ປອດໄພ, ການສຶກສາ ແລະ ການພັດທະນາສິນລະທໍາ ໂດຍອີງໃສ່ສະພາບເສດຖະກິດຂອງຄອບຄົວ.[60]

**ການຂູດຮີດ** ໝາຍເຖິງການໃຊ້ເດັກເພື່ອປະໂຫຍດ, ຄວາມພໍໃຈ ຫຼື ຜົນກໍາໄລຂອງຄົນອື່ນ, ເຊິ່ງມັກຈະເຮັດໃຫ້ເກີດຄວາມບໍ່ຍຸຕິທໍາ, ໂຫດຮ້າຍ ແລະ ເປັນອັນຕະລາຍຕໍ່ເດັກ. ການກະທໍາເຫຼົ່ານີ້ເປັນການທໍາລາຍສຸຂະພາບທາງຮ່າງກາຍ ຫຼື ຈິດໃຈ, ການສຶກສາ, ການພັດທະນາສິນລະທໍາ ຫຼື ທາງດ້ານຈິດຕະສັງຄົມຂອງເດັກ. ການກະທໍາເຫຼົ່ານີ້ກວມເອົາການຫມູນໃຊ້, ການໃຊ້ເດັກໃນທາງທີ່ຜິດ, ການທາລຸນ, ການເຮັດໃຫ້ເດັກຕົກເປັນຜູ້ເຄາະຮ້າຍ, ການຂົ່ມເຫັງ ແລະ ການປະຕິບັດທີ່ໂຫດຮ້າຍ.[61] ການກະທໍາເຫຼົ່ານີ້ສະແດງອອກໂດຍການໃຊ້ແຮງງານເດັກ, ການຄ້າ ແລະ ຂູດຮີດທາງເພດເດັກ, ການຄ້າເດັກ ແລະ ການໃຊ້ເດັກໄປຂໍທານ.

---

52 ເອກະສານຂໍ້ມູນຄວາມຈິງ ເດັກທີ່ຂາດການດູແລທີ່ເຫມາະສົມ. ອົງການຊ່ວຍເຫຼືອເດັກສາກົນ, 2010.

53 ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແຫ່ງ ສປປ ລາວ. ປຶ້ມບັນທຶກກໍລະນີເດັກຂອງ ຕປດ

54 https://www.ohchr.org/sites/default/files/Documents/HRBodies/HRCouncil/RegularSession/Session19/A-HRC-19-35_en.pdf \

55 ກົດໝາຍ ວ່າດ້ວຍການຕ້ານການຄ້າມະນຸດ ມາດຕາ 4, ວັກທີ 4, 2016

56 ລັດຖະບານແຫ່ງ ສປປ ລາວ. ກົດໝາຍ ວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກນ້ອຍ. ມາດຕາ 2, ວັກທີ 7; ທັນວາ 2006

57 ລັດຖະບານແຫ່ງ ສປປ ລາວ. ກົດໝາຍ ວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ. ມາດຕາ 2, ວັກທີ 6; ທັນວາ 2006.

58 ລັດຖະບານແຫ່ງ ສປປ ລາວ. ກົດໝາຍ ວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ. ມາດຕາ 2, ວັກທີ 8; ທັນວາ 2006.

59 ອີງຕາມຄໍານິຍາມການເຮັດວຽກທີ່ໃຊ້ໂດຍພະແນກເກັບກໍາ ແລະ ວິເຄາະຂໍ້ມູນ, ອົງການ ຢູນິເຊັບ ທີ່ ນິວຢອກ (2019).

60 ລັດຖະບານແຫ່ງ ສປປ ລາວ. ກົດໝາຍ ວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ. ມາດຕາ 2, ວັກທີ 4; ທັນວາ 2006.

61 ຄັດມາຈາກ ອົງການຊ່ວຍເຫຼືອເດັກປະເທດອັງກິດ, ຄູ່ມືຜູ້ດໍາເນີນການຝຶກອົບຮົມກ່ຽວກັບການປົກປ້ອງເດັກ, ປະເທດ ຊູດານໃຕ້, 2008.

**ການຂູດຮີດທາງເພດ** ໝາຍເຖິງການລະເມີດຕົວຈິງ ຫຼື ຄວາມພະຍາຍາມໃນການລະເມີດທາງເພດ ໂດຍການສວຍໃຊ້ຄວາມອ່ອນແອ, ອຳນາດຕ່າງໆ, ຫຼືຄວາມໄວ້ເນື້ອເຊື່ອໃຈ ເພື່ອຈຸດປະສົງທາງເພດ, ລວມທັງ (ແຕ່ບໍ່ຈຳກັດພຽງແຕ່) ການຫາກຳໄລທາງການເງິນ, ສັງຄົມ ຫຼື ທາງດ້ານການເມືອງຈາກການຂູດຮີດທາງເພດຄົນອື່ນ.[62]

**ທາງເລືອກໃນການເບິ່ງແຍງລ້ຽງດູເດັກ** ໝາຍເຖິງທາງເລືອກຕ່າງໆ ຂອງການເບິ່ງແຍງລ້ຽງດູເດັກທີ່ຂາດການເບິ່ງແຍງລ້ຽງດູຈາກພໍ່ແມ່ ຫຼື ເດັກທີ່ຕົກຢູ່ໃນຄວາມສ່ຽງທີ່ຈະບໍ່ໄດ້ຮັບການດູແລຈາກພໍ່ແມ່ ຫຼື ຜູ້ປົກຄອງຂອງເດັກ. ທາງເລືອກໃນການເບິ່ງແຍງລ້ຽງດູເດັກຫຼາຍປະເພດທັງທີ່ບໍ່ເປັນທາງການ ແລະ ເປັນທາງການ, ລວມທັງການໃຫ້ທີ່ຢູ່ອາໄສ ແລະ ການດູແລເດັກໃນຄອບຄົວ. ທາງເລືອກໃນການເບິ່ງແຍງລ້ຽງດູເດັກບາງປະເພດອາດບໍ່ເໝາະສົມສຳລັບເດັກທຸກຄົນ.[63]

**ການເບິ່ງແຍງລ້ຽງດູເດັກໃນສະພາບແວດລ້ອມຄອບຄົວ** ແມ່ນການເບິ່ງແຍງລ້ຽງດູເດັກໃນສະພາບແວດລ້ອມແບບຄອບຄົວໂດຍຍາດພີ່ນ້ອງ ຫຼື ໂດຍຄົນອື່ນ. ຕົວຢ່າງ; ການເບິ່ງແຍງລ້ຽງດູເດັກໂດຍຍາດພີ່ນ້ອງ, ການອຸປະຖຳລ້ຽງດູເດັກໂດຍຜູ້ອື່ນ ແລະ ຮູບແບບອື່ນໆຂອງການເບິ່ງແຍງລ້ຽງດູໃນສະພາບແວດລ້ອມຄອບຄົວເຊັ່ນ ການເປັນຜູ້ປົກຄອງເດັກ.[64]

**ການເບິ່ງແຍງລ້ຽງດູໂດຍຍາດພີ່ນ້ອງ:** ເປັນການເບິ່ງແຍງລ້ຽງດູແບບໃນຄອບຄົວ ໂດຍຍາດພີ່ນ້ອງ ຫຼື ເພື່ອນສະໜິດທີ່ຮັກແພງຂອງຄອບຄົວເດັກ, ຊຶ່ງເດັກຮູ້ຈັກລຶ້ງເຄີຍເປັນຢ່າງດີ ໃຫ້ການເບິ່ງແຍງລ້ຽງດູເດັກ ແທນພໍ່ແມ່ຂອງເດັກ.[65]

ການເບິ່ງແຍງລ້ຽງດູໂດຍບຸກຄົນອື່ນ: ແມ່ນການເບິ່ງແຍງລ້ຽງດູເດັກໂດຍຄອບຄົວຄົນອື່ນ ທີ່ບໍ່ແມ່ນຄອບຄົວແທ້ຂອງເດັກ, ຊຶ່ງເປັນຄອບຄົວທີ່ຖືກຄັດເລືອກຕາມຄຸນສົມບັດເໝາະສົມ ແລະ ໄດ້ຮັບການຊີ້ນຳ ເພື່ອໃຫ້ການເບິ່ງແຍງລ້ຽງດູເດັກຢ່າງມີປະສິດທິພາບ ແທນພໍ່-ແມ່ຂອງເດັກ.[66]

**ການເບິ່ງແຍງລ້ຽງດູແບບມີທີ່ພັກອາໃສ:** ແມ່ນການເບິ່ງແຍງລ້ຽງດູແບບ ໃຫ້ເດັກເຂົ້າພັກອາໃສຮ່ວມກັບເດັກຄົນອື່ນໆ ເປັນກຸ່ມໃຫຍ່ ຢູ່ສະຖານທີ່ເບິ່ງແຍງລ້ຽງດູເດັກ ໂດຍມີພະນັກງານທີ່ໄດ້ຮັບ/ບໍ່ໄດ້ຮັບເງິນເດືອນ ໃຫ້ການເບິ່ງແຍງລ້ຽງດູເດັກ, ຊຶ່ງເຈົ້າໜ້າທີ່ກ່ຽວຂ້ອງໄດ້ອະນຸມັດໃຫ້ເດັກ ເຂົ້າຢູ່ອາໃສ່ຢູ່ ແລະ ໄດ້ຮັບການເບິ່ງແຍງລ້ຽງດູໃນສະຖານທີ່ດັ່ງກ່າວ.[67]

**ບຸກຄະລາກອນສັງຄົມສົງເຄາະ** ໝາຍເຖິງ ພະນັກງານທີ່ເປັນມືອາຊີບ ແລະ ເຄິ່ງມືອາຊີບ ທີ່ເຮັດວຽກຢູ່ໃນລະບົບສັງຄົມ. ຄ້າຍຄືກັນກັບອາຊີບດ້ານການແພດທີ່ປະກອບດ້ວຍທ່ານໝໍ, ພະຍາບານ, ນັກບຳບັດທາງກາຍະພາບ ແລະ ນັກວິຊາການ, ບຸກຄະລາກອນສັງຄົມສົງເຄາະທີ່ປະກອບດ້ວຍຫຼາຍສາຂາອາຊີບ, ພາລະບົດບາດ ແລະ ໜ້າທີ່, ແຕ່ເຂົາເຈົ້າລ້ວນແຕ່ມີເປົ້າໝາຍລວມອັນດຽວກັນຄື ການເບິ່ງແຍງດູແລ, ສະໜັບສະໜູນຊ່ວຍເຫຼືອ, ສົ່ງເສີມ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ມີຄວາມສ່ຽງ.[68]

**ພະນັກງານວິຊາການເຄິ່ງມືອາຊີບ** ໝາຍເຖິງຜູ້ທີ່ມີຄວາມຮູ້ສະເພາະດ້ານ ແລະ ໄດ້ຮັບການຝຶກອົບຮົມດ້ານວິຊາການ ແລະ ຜູ້ທີ່ເຮັດວຽກຢ່າງໃກ້ຊິດກັບວິຊາການ ແລະ ໄດ້ຮັບການຊີ້ນຳໂດຍວິຊາການ. ນັກສັງຄົມສົງເຄາະເຄິ່ງມືອາຊີບແມ່ນກຸ່ມພະນັກງານ ແລະ ອາສາສະໝັກທີ່ໄດ້ຮັບການຊີ້ນຳດ້ານວິຊາການ - ໂດຍທົ່ວໄປແມ່ນຈະຢູ່ໃນຊຸມຊົນ - ເຊິ່ງເຮັດໜ້າທີ່ໃຫ້ບໍລິການຕາມຄວາມຈຳເປັນຂອງເດັກ ແລະ ຄອບຄົວ, ໂດຍສະເພາະແມ່ນໃນບ່ອນທີ່ລະບົບສະຫວັດດີການສັງຄົມຍັງດ້ອຍພັດທະນາ ຫຼື ກຳລັງພັດທະນາ. ອົງການພັດທະນາສາກົນຂອງປະເທດສະຫະລັດອາເມລິກາ (USAID/PEPFAR) ໄດ້ກຳນົດນັກສັງຄົມເຄິ່ງມືອາຊີບວ່າແມ່ນຜູ້ທີ່ໄດ້ຮຽນຮູ້ສິ່ງໃດໜຶ່ງຈາກການຝຶກອົບຮົມຕັ້ງແຕ່ໄລຍະສອງສາມມື້ຈົນເຖິງໄລຍະ 6 ເດືອນ. ເຂົາເຈົ້າອາດເຮັດວຽກໂດຍໄດ້ຮັບຄ່າຈ້າງ ແລະ ບໍ່ໄດ້ຮັບຄ່າຈ້າງ.[69]

---

62 ຖະແຫລງຂ່າວຂອງເລຂາທິການໃຫຍ່ ສປຊ ກ່ຽວກັບມາດຕະການພິເສດສຳລັບການປົກປ້ອງຈາກການຂູດຮີດທາງເພດ ແລະ ການລ່ວງລະເມີດທາງເພດ (ST/SGB/2003/13)

63 ຄຳແນະນຳຂອງສະຫະປະຊາຊາດສຳລັບທາງເລືອກໃນການດູແລເດັກ, 2009.

64 ຄຳແນະນຳຂອງສະຫະປະຊາຊາດສຳລັບທາງເລືອກໃນການດູແລເດັກ, 2009.

65 ຄຳແນະນຳຂອງອົງການສະຫະປະຊາຊາດ ກ່ຽວກັບທາງເລືອກໃນການເບິ່ງແຍງລ້ຽງດູເດັກ, 2009.

66 ຄຳແນະນຳຂອງສະຫະປະຊາຊາດສຳລັບທາງເລືອກໃນການດູແລເດັກ, 2009.

67 ອີງຕາມຄຳນິຍາມການເຮັດວຽກທີ່ໃຊ້ໂດຍພະແນກເກັບກຳ ແລະ ວິເຄາະຂໍ້ມູນ, ອົງການ ຢູນິເຊັບ ທີ່ ນິວຢອກ (2019)

68 ອົງການສະຫະປະຊາຊາດກອງທຶນສຳລັບເດັກ. ແຜນຍຸດທະສາດເພື່ອສ້າງກຳລັງແຮງງານຮັບໃຊ້ວຽກງານສັງຄົມເພື່ອການປົກປ້ອງເດັກ. ອົງການ ຢູນິເຊັບທີ່ນິວຢອກ 2019.

69 ສະມາຄົມນັກສັງຄົມສົງເຄາະແຫ່ງຊາດ. http://www.socialworkers.org

# ພາກທີ I

# ພາກສະເໜີ

## 1. ຄວາມເປັນມາ

ໃນ ສປປ ລາວ ເດັກ ແລະ ໄວໜຸ່ມສ່ວນໃຫຍ່ ໄດ້ເຕີບໂຕຂຶ້ນໃນຄອບຄົວ ແລະ ຊຸມຊົນທີ່ມີວັດທະນະທຳ ແລະ ຮີດຄອງປະເພນີ ຫ່ວງໄຍເບິ່ງແຍງດູແລເດັກ, ອ້ອມຮອບດ້ວຍຄອບຄົວ, ຍາດພີ່ນ້ອງ ແລະ ຄົນໃນຊຸມຊົນທີ່ປົກປ້ອງ ແລະ ຮັບປະກັນຄວາມຢູ່ດີກິນດີຂອງເດັກ. ເຖິງແນວໃດກໍ່ຕາມ, ສປປ ລາວ ຍັງປະເຊີນໜ້າກັບຄວາມສ່ຽງ ແລະ ສິ່ງທ້າທາຍ ກ່ຽວກັບການປົກປ້ອງເດັກ. ຈາກການສຳຫຼວດກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ເດັກພົບວ່າ 15 ສ່ວນຮ້ອຍຂອງແມ່ຍິງ ແລະ 16.9 ສ່ວນຮ້ອຍຂອງຜູ້ຊາຍເຄີຍປະສົບກັບການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ຢ່າງໜ້ອຍຮູບແບບໃດໜຶ່ງ ກ່ອນເຂົາເຈົ້າຈະມີອາຍຸ 18 ປີ.

ຜົນການສຳຫຼວດດັດສະນີໝາຍສັງຄົມລາວຄັ້ງທີ II ເຫັນວ່າ ອັດຕາການຈົດທະບຽນການເກີດ ຂອງເດັກນ້ອຍອາຍຸຕໍ່າກວ່າ 5 ປີ ແມ່ນ 73 ສ່ວນຮ້ອຍ ແລະ ມີພຽງ 10 ສ່ວນຮ້ອຍຂອງແມ່ ຫຼື ຜູ້ເບິ່ງແຍງລ້ຽງດູເດັກ ທີ່ຮູ້ວ່າຈະໄປຈົດທະບຽນການເກີດແນວໃດກັບເຈົ້າໜ້າທີ່ຂອງລັດ. 27.9 ສ່ວນຮ້ອຍຂອງເດັກທີ່ມີອາຍຸ 5 ຫາ 17 ປີ ເຮັດວຽກໃນສະພາບທີ່ເປັນອັນຕະລາຍໃນໄລຍະອາທິດຜ່ານມາ ແລະ 42.8 ສ່ວນຮ້ອຍກ່ຽວຂ້ອງກັບການໃຊ້ແຮງງານເດັກໃນໄລຍະອາທິດຜ່ານມາ.

ນອກຈາກນີ້, ການແຕ່ງດອງກ່ອນໄວອັນຄວນ ຍັງເປັນສິ່ງທ້າທາຍໃນ ສປປ ລາວ, ໂດຍສະເພາະແມ່ນໃນເຂດຊົນນະບົດ ຊຶ່ງ 16.3 ສ່ວນຮ້ອຍຂອງເດັກຍິງແຕ່ງດອງກ່ອນອາຍຸໄດ້ 18. ການສຳຫຼວດດັດສະນີໝາຍສັງຄົມລາວຄັ້ງທີ II ພົບວ່າການສຶກສາເປັນປັດໃຈສຳຄັນທີ່ກ່ຽວຂ້ອງກັບການແຕ່ງດອງກ່ອນໄວອັນຄວນ. ສິ່ງນີ້ສະແດງໃຫ້ເຫັນຢ່າງຈະແຈ້ງດ້ວຍຫຼັກຖານຈາກການສຳຫຼວດທີ່ວ່າ ມີ 46.4 ສ່ວນຮ້ອຍຂອງແມ່ຍິງອາຍຸ 20 ຫາ 49 ປີ ທີ່ບໍ່ມີການສຶກສາໄດ້ແຕ່ງດອງກ່ອນອາຍຸ 18 ປີ, ທຽບກັບພຽງແຕ່ 1.5 ສ່ວນຮ້ອຍຂອງແມ່ຍິງໃນກຸ່ມອາຍຸດຽວກັນທີ່ມີລະດັບການສຶກສາສູງກ່ວາແຕ່ງດອງກ່ອນອາຍຸ 18 ປີ.

ອີງໃສ່ການປະເມີນລະບົບປົກປ້ອງເດັກ ປີ 2021, ເຫັນວ່າ ໃນໄລຍະຜ່ານມາ ກົນໄກການປະສານ, ການແບ່ງຂອບເຂດຄວາມຮັບຜິດຊອບ ຂອງແຕ່ລະຂະແໜງການ ແລະ ຄະນະກຳມະການ ໃນພາກປະຕິບັດຕົວຈິງ ກ່ຽວກັບການປົກປ້ອງ ແລະ ຊ່ວຍເຫຼືອເດັກ ແມ່ນຍັງບໍ່ຈະແຈ້ງ ແລະ ບໍ່ເຊື່ອມສານກັນ, ການໃຫ້ບໍລິການ ແລະ ການຕິດຕາມກວດກາ ຍັງບໍ່ທັນບັນລຸຕາມຈຸດປະສົງ ແລະ ເປົ້າໝາຍທີ່ວາງໄວ້; ຍັງບໍ່ທັນມີລະບົບການຄຸ້ມຄອງບໍລິຫານຂໍ້ມູນກ່ຽວກັບການປົກປ້ອງເດັກ. ການເກັບກຳຂໍ້ມູນ, ການສຶກສາຄົ້ນຄວ້າ ແລະ ການປະເມີນກ່ຽວກັບວຽກງານປົກປ້ອງເດັກ ແລະ ຊ່ວຍເຫຼືອເດັກ ຍັງບໍ່ທັນໄດ້ມາດຖານ ຫຼື ບໍ່ຕໍ່ເນື່ອງສິ່ງຜົນສະທ້ອນຕໍ່ການເຂົ້າໄປໃຫ້ການຊ່ວຍເຫຼືອ, ການສ້າງນະໂຍບາຍ ແລະ ແຜນງານຕ່າງໆ. ຖານຂໍ້ມູນກ່ຽວກັບເດັກທີ່ຕ້ອງການໆປົກປ້ອງພິເສດແຕ່ຂັ້ນສູນກາງຫາຂັ້ນທ້ອງຖິ່ນໃນປະຈຸບັນ ຍັງບໍ່ທັນເປັນລະບົບ ແລະ ຍັງບໍ່ທັນມີການນຳໃຊ້ຂໍ້ມູນດັ່ງກ່າວ.

ມາດຕະຖານຂັ້ນຕອນການຄຸ້ມຄອງກໍລະນີກ່ຽວກັບການປົກປ້ອງເດັກສະບັບນີ້ ສ້າງຂຶ້ນໂດຍກົມສັງຄົມສົງເຄາະ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (ກຊ ຮສສ) ໂດຍການຮ່ວມມືກັບກອງເລຂາຄະນະປະສານງານຍຸຕິທຳເດັກ, ສະຫະພັນແມ່ຍິງລາວ ແລະ ທີມງານປົກປ້ອງເດັກຂອງອົງການ ຢູນິເຊັບ. ການສ້າງມາດຕະຖານຂັ້ນຕອນການດຳເນີນການຄຸ້ມຄອງກໍລະນີ ແມ່ນອີງໃສ່ບັນດາເອກະສານທີ່ມີຢູ່ແລ້ວ ເຊັ່ນ: ປື້ມບັນທຶກກໍລະນີເດັກຂອງ ຕປດ, ຄຳແນະນຳກ່ຽວກັບທາງເລືອກໃນການເບິ່ງແຍງລ້ຽງດູເດັກທີ່ຂາດການເບິ່ງແຍງຈາກພໍ່ແມ່ຜູ້ປົກຄອງ, ຫຼັກຈັນຍາບັນສຳລັບຕາໜ່າງປົກປ້ອງເດັກ ແລະ ອື່ນໆ. ນອກຈາກນີ້ ກໍໄດ້ມີການໝູນໃຊ້ຂໍ້ມູນທີ່ເປັນປະໂຫຍດຈາກປະເທດອື່ນໆ ມາວິເຄາະ ແລະ ເປັນບ່ອນອີງໃນການສ້າງມາດຕະຖານຂັ້ນຕອນການຄຸ້ມຄອງກໍລະນີກ່ຽວກັບການປົກປ້ອງເດັກນຳ.

ມາດຕະຖານຂັ້ນຕອນການຄຸ້ມຄອງກໍລະນີ ກ່ຽວກັບການປົກປ້ອງເດັກໄດ້ອະທິບາຍຄວາມໝາຍຂອງການຄຸ້ມຄອງກໍລະນີ, ຫຼັກການທົ່ວໄປ, ພາລະບົດບາດ ແລະ ຄວາມຮັບຜິດຊອບ, ຂັ້ນຕອນການຄຸ້ມຄອງກໍລະນີ ແລະ ເຄື່ອງມື/ຊັບພະຍາກອນໃນການແກ້ໄຂກໍລະນີການປົກປ້ອງເດັກ, ການລະເມີດສິດທິເດັກ ແລະ ການປະຕິບັດທີ່ບໍ່ດີຕໍ່ເດັກ. ມາດຕະຖານຂັ້ນຕອນຄຸ້ມຄອງກໍລະນີ ກ່ຽວກັບການປົກປ້ອງເດັກ ສະບັບນີ້ຄວນມີການທົບທວນ ທຸກໆ ສາມປີ ເພື່ອໃຫ້ມີຄວາມແທດເໝາະ ແລະ ສອດຄ່ອງກັບສະພາບຕົວຈິງໃນແຕ່ລະໄລຍະ.

## 2. ນິຕິກຳທີ່ກ່ຽວຂ້ອງກັບການປົກປ້ອງເດັກ

ນິຕິກຳທີ່ກ່ຽວຂ້ອງກັບການປົກປ້ອງເດັກມີດັ່ງລຸ່ມນີ້:

- **ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ** ສະບັບເລກທີ 05/ສພຊ, ລົງວັນທີ 27 ທັນວາ 2006;
- **ກົດໝາຍ ວ່າດ້ວຍ ການຕ້ານ ແລະ ສະກັດກັ້ນ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ** ສະບັບເລກທີ 56/ສພຊ, ລົງວັນທີ 23 ທັນວາ 2014;
- **ກົດໝາຍ ວ່າດ້ວຍ ການຕ້ານການຄ້າມະນຸດ** ສະບັບເລກທີ 73/ສພຊ, ລົງວັນທີ 17 ທັນວາ 2015;
- **ກົດໝາຍ ວ່າດ້ວຍ ການດຳເນີນຄະດີເດັກ** ສະບັບເລກທີ 41/ສພຊ, ລົງວັນທີ 20 ທັນວາ 2013;
- **ປະມວນກົດໝາຍອາຍາ** ສະບັບເລກທີ 26/ສພຊ ລົງວັນທີ 17 ພຶດສະພາ 2017;
- **ກົດໝາຍ ວ່າດ້ວຍ ຄົນພິການ** ສະບັບເລກທີ 57/ສພຊ ລົງວັນທີ 10 ທັນວາ 2018;
- **ກົດໝາຍ ວ່າດ້ວຍແຮງງານ** ສະບັບເລກທີ 43/ສພຊ, ລົງວັນທີ 24 ທັນວາ 2013;
- **ກົດໝາຍ ວ່າດ້ວຍ ການດຳເນີນຄະດີອາຍາ** ສະບັບປັບປຸງ ເລກທີ 37/ສພຊ ລົງວັນທີ 14 ພະຈິກ 2017;
- **ກົດໝາຍ ວ່າດ້ວຍ ການສຶກສາ** ສະບັບເລກທີ 62/ສພຊ ລົງວັນທີ 16 ກໍລະກົດ 2015;
- **ຍຸດທະສາດການປົກປ້ອງທາງສັງຄົມແຫ່ງຊາດ** ສະບັບເລກທີ 224/ນຍ, ລົງວັນທີ 1 ເມສາ 2020;
- ແຜນດຳເນີນງານແຫ່ງຊາດ ວ່າດ້ວຍການຕ້ານ ແລະ ສະກັດກັ້ນການຄ້າມະນຸດ ໄລຍະທີ I (2013-2015) ສະ ບັບເລກທີ 37/ນຍ, ລົງວັນທີ 03 ກຸມພາ 2014; ໄລຍະທີ II (2017-2020) ສະບັບເລກທີ 49/ນຍ, ລົງວັນທີ 23 ມັງກອນ 2018 ແລະ ໄລຍະ III (2021-2025) ສະບັບເລກທີ 027/ຄຕມຊ, ລົງວັນທີ 23 ສິງຫາ 2021;
- **ແຜນດຳເນີນງານແຫ່ງຊາດ** ກ່ຽວກັບປ້ອງກັນ ແລະ ການລຶບລ້າງການໃຊ້ແຮງງານເດັກ 2021-2025;
- **ແຜນດຳເນີນງານແຫ່ງຊາດ** ເພື່ອສ້າງຄວາມເຂັ້ມແຂງລະບົບປົກປ້ອງເດັກ 2022-2026.

## 3. ຈຸດປະສົງ

ຈຸດປະສົງຂອງມາດຕະຖານຂັ້ນຕອນການຄຸ້ມຄອງກໍລະນີກ່ຽວກັບການປົກປ້ອງເດັກ ສະບັບນີ້ ແມ່ນເພື່ອເປັນທິດທາງໃນການສ້າງຄວາມເຂົ້າໃຈ ກ່ຽວກັບຂັ້ນຕອນ ການຄຸ້ມຄອງກໍລະນີ ລວມທັງ ການລະບຸ, ການສົ່ງຕໍ່ກໍລະນີເດັກ ແລະ ເປັນບ່ອນອີງໃຫ້ແກ່ບຸກຄະລາກອນສັງຄົມສົງເຄາະ, ຕາໜ່າງປົກປ້ອງເດັກຂັ້ນບ້ານ ແລະ ອົງການຈັດຕັ້ງອື່ນໆ ທີ່ເຮັດວຽກກັບເດັກໂດຍກົງ.

ມາດຕະຖານຂັ້ນຕອນການຄຸ້ມຄອງກໍລະນີກ່ຽວກັບປົກປ້ອງເດັກສະບັບນີ້ ນຳໃຊ້ສຳລັບການປະສານງານ, ການໃຫ້ການຊ່ວຍເຫຼືອ ແລະ ການດຳເນີນການສົ່ງຕໍ່ລະຫວ່າງຂະແໜງສັງຄົມສົງເຄາະ, ຍຸຕິທຳ, ສາທາລະນະສຸກ, ສຶກສາທິການ ແລະ ກິລາ, ປ້ອງກັນຄວາມສະຫງົບ ແລະ ສະຫະພັນແມ່ຍິງລາວ.

## 4. ການຄຸ້ມຄອງກໍລະນີ

ການຄຸ້ມຄອງກໍລະນີ ແມ່ນຂະບວນການຮັບປະກັນວ່າເດັກທີ່ຖືກລະບຸຕົວໄດ້ຮັບການຄຸ້ມຄອງ ແລະ ຊ່ວຍເຫຼືອຕາມຄວາມຈໍາເປັນໃນການດູແລ, ການປົກປ້ອງ ແລະ ການສະໜັບສະໜູນທີ່ຈໍາເປັນ. ໂດຍປົກກະຕິແລ້ວ ການຄຸ້ມຄອງກໍລະນີແມ່ນຄວາມຮັບຜິດຊອບຂອງນັກສັງຄົມສົງເຄາະທີ່ຖືກແຕ່ງຕັ້ງໃຫ້ເຮັດວຽກກັບເດັກ, ຄອບຄົວ, ຜູ້ເບິ່ງແຍງລ້ຽງດູເດັກ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງກັບເດັກ ເປັນຜູ້ເຮັດການປະເມີນ, ວາງແຜນ, ຈັດສົ່ງ ຫຼື ສົ່ງຕໍ່ເດັກ ແລະ/ຫຼື ຄອບຄົວເດັກໄປຮັບການບໍລິການ, ຕິດຕາມ ແລະ ທົບທວນຄວາມຄືບໜ້າ.[37]

ການຄຸ້ມຄອງກໍລະນີແມ່ນດໍາເນີນໃນຕະຫຼອດໄລຍະຂອງການຄຸ້ມຄອງກໍລະນີປົກປ້ອງເດັກ, ເລີ່ມຈາກການເກັບກໍາຂໍ້ມູນເບື້ອງຕົ້ນຈົນເຖິງການປິດກໍລະນີ. ການຄຸ້ມຄອງກໍລະນີລວມມີການເຮັດວຽກກັບຄອບຄົວເດັກເພື່ອກໍານົດເປົ້າໝາຍ, ສ້າງແຜນການເພື່ອໃຫ້ບັນລຸເປົ້າໝາຍ, ໃຫ້ບໍລິການເພື່ອຕອບສະໜອງຄວາມຕ້ອງການທີ່ໄດ້ກໍານົດໄວ້ໃນການປະເມີນ, ການຕິດຕາມຄວາມຄືບໜ້າເພື່ອນໍາໄປສູ່ການບັນລຸເປົ້າໝາຍ ແລະ ປິດກໍລະນີເມື່ອບັນລຸເປົ້າໝາຍແລ້ວ. ສິ່ງສໍາຄັນແມ່ນພະນັກງານທີ່ເຮັດໜ້າທີ່ບໍລິການປົກປ້ອງ ແລະ ຊ່ວຍເຫຼືອເດັກຕ້ອງຮູ້ວ່າແຕ່ລະຄອບຄົວມີສະພາບແຕກຕ່າງກັນ ແລະ ພະນັກງານທີ່ເຮັດໜ້າທີ່ບໍລິການປົກປ້ອງເດັກຕ້ອງມີຈຸດປະສົງເພື່ອສະໜອງການບໍລິການທີ່ເໝາະສົມໃຫ້ຄອບຄົວເຫຼົ່ານັ້ນ.

## 5. ການຈັດປະເພດຂອງກໍລະນີການປົກປ້ອງເດັກ

ປະເພດຂອງກໍລະນີປົກປ້ອງເດັກລຸ່ມນີ້ສາມາດແກ້ໄຂໄດ້ໂດຍຜ່ານການນໍາໃຊ້ມາດຕະຖານຂັ້ນຕອນການດໍາເນີນການຄຸ້ມຄອງກໍລະນີ ສະບັບນີ້.

- ເດັກທີ່ຖືກປະຖິ້ມ
- ເດັກພິການ
- ເດັກທີ່ຖືກປ່ອຍປະລະເລີຍ
- ເດັກກໍາພ້າ
- ເດັກກໍາພອຍ
- ເດັກທີ່ຖືກທາລຸນຮ່າງກາຍ
- ເດັກທີ່ຖືກລະເມີດທາງເພດ
- ເດັກທີ່ໄດ້ຮັບຜົນກະທົບຈາກເຊື້ອເອັສໄອວີ/ເອດ
- ເດັກທີ່ເຂົ້າມາກ່ຽວຂ້ອງກັບລະບົບກົດໝາຍ ລວມທັງເດັກກະທໍາຜິດ, ເດັກຜູ້ເຄາະຮ້າຍ ແລະ ເດັກທີ່ເປັນພະ ຍານ
- ເດັກທີ່ຖືກໃຊ້ແຮງງານ
- ເດັກທີ່ແຕ່ງງານກ່ອນອາຍຸ 18 ປີ
- ເດັກທີ່ຖືກເຄາະຮ້າຍຈາກການຄ້າມະນຸດ
- ເດັກຍິງຖືພາກ່ອນອາຍຸ 18 ປີ
- ເດັກທີ່ບໍ່ໄດ້ເຂົ້າໂຮງຮຽນ
- ເດັກຂ້າງຖະໜົນ

[37] Better Care Network Toolkit Glossary (http://bettercarenetwork.org/sites/default/files/attachments/glossary.pdf)

- ເດັກທີ່ພົວພັນກັບສິ່ງເສບຕິດ
- ເດັກປະເພດອື່ນໆ

ກະລຸນາເບິ່ງພາກທີ III ເຄື່ອງມື ແລະ ແບບຟອມ ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບເສັ້ນທາງ ການສົ່ງຕໍ່ລະຫວ່າງຂະແໜງການ ສໍາລັບປະເພດຂອງກໍລະນີປົກປ້ອງເດັກຂ້າງເທິງ.

## 6. ຫຼັກການການຄຸ້ມຄອງກໍລະນີ

ໃນການຄຸ້ມຄອງກໍລະນີຕ້ອງນໍາໃຊ້ຫຼັກການລຸ່ມນີ້:

- ຜົນປະໂຫຍດອັນສູງສຸດສໍາລັບເດັກໂດຍອີງໃສ່ ສສດ: ການດໍາເນີນການຄຸ້ມຄອງກໍລະນີຕ້ອງຍຶດຖືຫຼັກການ ຜົນປະໂຫຍດອັນສູງສຸດຂອງເດັກເປັນພື້ນຖານໃນການພິຈາລະນາທຸກໆການຕັດສິນໃຈ ທີ່ມີຜົນຕໍ່ເດັກ. ການນໍາໃຊ້ ຫຼັກການນີ້ຕ້ອງໄດ້ຄໍານຶງເຖິງສະພາບທາງດ້ານວັດທະນະທໍາ - ສັງຄົມຂອງ ສປປ ລາວ.
- ສົ່ງເສີມຄວາມກົມກຽວພາຍໃນຄອບຄົວ/ລະຫວ່າງຄອບຄົວ ແລະ ຖືເອົາການສ້າງຄວາມເຂັ້ມແຂງໃຫ້ແກ່ຄອບຄົວ ເປັນຈຸດໃຈກາງຂອງຄວາມພະຍາຍາມເພື່ອຮັບປະກັນສະຫວັດດີພາບຂອງເດັກ ແລະ ການປົກປ້ອງເດັກ: ການດໍາເນີນ ການຄຸ້ມຄອງກໍລະນີຄວນຮັບປະກັນຄວາມຢູ່ດີກິນດີຂອງເດັກ. ຖ້າເປັນໄປໄດ້, ເດັກຄວນໄດ້ດໍາລົງຊີວິດຢູ່ຮ່ວມກັບ ຄອບຄົວ ແລະ ການເອົາເດັກໄປອາໃສໃນສະຖາບັນຕ່າງໆຄວນຈະເປັນທາງເລືອກສຸດທ້າຍ. ແຕ່ບາງສະຖານະການ ອາດຈໍາເປັນຕ້ອງຮຽກຮ້ອງໃຫ້ມີການຊ່ວຍເຫຼືອແກ້ໄຂຢ່າງເປັນທາງການຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.
- ສ້າງຄວາມເຂັ້ມແຂງໃຫ້ແກ່ເດັກ, ຄອບຄົວ ແລະ ຊຸມຊົນ ໃຫ້ເປັນຄູ່ຮ່ວມງານທີ່ຫ້າວຫັນໃນລະບົບປົກປ້ອງເດັກ: ການດໍາເນີນການຄຸ້ມຄອງກໍລະນີ ຄວນດໍາເນີນໃນທິດທາງທີ່ມີການສະໜັບສະໜູນ ແລະ ມີການເຮັດວຽກຮ່ວມກັບ ຄອບຄົວ ແລະ ຊຸມຊົນ ເພື່ອໃຫ້ ຄອບຄົວ ແລະ ຊຸມຊົນມີຄວາມເຂົ້າໃຈ, ຮູ້ສະພາບ, ຄວາມຈໍາເປັນ, ຄວາມຕ້ອງການ ໃນການປົກປ້ອງເດັກ ແລະ ສົ່ງເສີມສະຫວັດດີພາບ ຂອງເດັກ.
- ຮັບປະກັນໃຫ້ເດັກ, ຄອບຄົວ ແລະ ຊຸມຊົນເຂົ້າໃຈກ່ຽວກັບການບໍລິການ ແລະ ເຫັນວ່າການບໍລິການນັ້ນມີ ປະໂຫຍດ: ການດໍາເນີນການຄຸ້ມຄອງກໍລະນີ ຄວນສະທ້ອນເຖິງຄວາມປາຖະໜາ ແລະ ຄວາມຕ້ອງການຂອງເດັກ, ຄອບຄົວ ແລະ ຊຸມຊົນ. ການບໍລິການຄຸ້ມຄອງກໍລະນີຄວນແນ່ໃສ່ສ້າງຄວາມເຂັ້ມແຂງໃຫ້ຊຸມຊົນ.
- ຕອບສະໜອງ ແລະ ປັບຕົວເຂົ້າກັບການປ່ຽນແປງສະພາບການ ທີ່ເດັກ, ຄອບຄົວ ແລະ ຊຸມຊົນດໍາລົງຊີວິດ ຢູ່: ການດໍາເນີນການຄຸ້ມຄອງກໍລະນີ ຕ້ອງສອດຄ່ອງກັບແນວໂນ້ມຂອງເສດຖະກິດ - ສັງຄົມ, ການເຄື່ອນຍ້າຍ, ເຕັກໂນໂລຢີ, ສື່ສັງຄົມ ແລະ ປັດໃຈອື່ນໆ ທີ່ສົ່ງຜົນກະທົບຕໍ່ການດໍາລົງຊີວິດຂອງເດັກ ແລະ ຄອບຄົວ.
- ການບໍ່ຈໍາແນກ: ການດໍາເນີນການຄຸ້ມຄອງກໍລະນີຕ້ອງບໍ່ມີການຈໍາແນກໃດໆຕໍ່ເດັກ ບໍ່ວ່າຈະເປັນທາງເພດ, ອາ ຍຸ, ຄວາມສາມາດ, ຄວາມຮັ່ງມີ, ສະຖານະພາບການເຄື່ອນຍ້າຍ, ສະຖານະພາບຂອງພໍ່ແມ່ ແລະ ອື່ນໆ.
- ການຮັກສາເປັນຄວາມລັບ: ການດໍາເນີນການຄຸ້ມຄອງກໍລະນີຕ້ອງຮັກສາຂໍ້ມູນສ່ວນຕົວເປັນຄວາມລັບ, ບໍ່ວ່າຈະເປັນ ຂໍ້ມູນກ່ຽວກັບເດັກ, ບຸກຄົນອື່ນທີ່ລາຍງານບັນຫາຂອງເດັກ, ຜູ້ຖືກກ່າວຫາວ່າໃຊ້ຄວາມຮຸນແຮງ ຫຼື ເພື່ອນຮ່ວມງານ ຜູ້ໃດຜູ້ໜຶ່ງຂອງເຂົາເຈົ້າ ແລະ ບໍ່ເປີດເຜີຍຂໍ້ມູນເຫຼົ່ານັ້ນກັບພາກສ່ວນອື່ນທີ່ບໍ່ກ່ຽວຂ້ອງ.
- ການເຄົາລົບ ແລະ ການຮ່ວມມື: ຜູ້ທີ່ເຮັດການຄຸ້ມຄອງກໍລະນີ ຄວນປະຕິບັດຕໍ່ສະມາຊິກຜູ້ອື່ນ ຫຼື ບຸກຄົນທີ່ ໄດ້ລາຍງານກ່ຽວກັບບັນຫາຂອງເຂົາເຈົ້າດ້ວຍຄວາມເຄົາລົບ ແລະ ເຮັດວຽກໃນການຮ່ວມມືກັບເຂົາເຈົ້າດ້ວຍ ຄວາມຈິງໃຈ. ຍ້ອນວ່າບັນຫາປົກປ້ອງເດັກມີລັກສະນະຊັບຊ້ອນ ແລະ ກ່ຽວຂ້ອງກັບຫຼາຍພາກສ່ວນ, ຜູ້ທີ່ເຮັດການ ຄຸ້ມຄອງກໍລະນີ ຄວນເຮັດວຽກຮ່ວມກັບບັນດາຂະແໜງການ, ອົງການຈັດຕັ້ງ ແລະ ອົງການຈັດຕັ້ງທາງສັງຄົມ ແລະ

ອື່ນໆ ເພື່ອສະໜອງການບໍລິການໃນການຄຸ້ມຄອງກໍລະນີຢ່າງຮອບດ້ານ.

- ການມີສ່ວນຮ່ວມຂອງເດັກ: ຕະຫຼອດໄລຍະຂອງການຄຸ້ມຄອງກໍລະນີ, ເດັກຄວນມີສ່ວນຮ່ວມ ແລະ ໄດ້ຮັບໂອກາດສະແດງອອກເຖິງຄວາມຕ້ອງການ ແລະ ຄວາມປາຖະໜາຂອງເດັກ. ຜູ້ທີ່ເຮັດການຄຸ້ມຄອງກໍລະນີ ຄວນໄດ້ຮັບການຍິນຍອມເຫັນດີຈາກເດັກ ແລະ ຄອບຄົວ.
- ການປ້ອງກັນການຂູດຮີດ ແລະ ການລະເມີດທາງເພດ: ຫ້າມກະທຳການໃດໆທີ່ເປັນການຂູດຮີດ ແລະ ລະເມີດທາງເພດ ທີ່ອາດສົ່ງຜົນເສຍຫາຍທາງຮ່າງກາຍ, ທາງເພດ ຫຼື ທາງດ້ານຈິດໃຈຕໍ່ບຸກຄົນອື່ນ, ໂດຍສະເພາະແມ່ນແມ່ຍິງ ແລະ ເດັກ. ຫ້າມມີສ່ວນຮ່ວມກັບຜູ້ໄດ້ຮັບຜົນປະໂຫຍດໃນການຂູດຮີດທາງເພດ ຫຼື ການລະເມີດທາງເພດ ບໍ່ວ່າຈະເປັນກໍລະນີໃດໆກໍ່ຕາມ. ບໍ່ຄວນໃຊ້ຂໍ້ອ້າງທີ່ວ່າຜູ້ທີ່ເຮັດການຄຸ້ມຄອງກໍລະນີມີຄວາມເຂົ້າໃຈຜິດກ່ຽວກັບອາຍຸຂອງເດັກ ເພື່ອເປັນຂໍ້ອ້າງໃນການປົກປ້ອງຕົນເອງ. ຫ້າມບໍ່ໃຫ້ມີການແລກປ່ຽນເປັນເງິນ, ການຈ້າງງານ, ສິນຄ້າ ຫຼື ການບໍລິການກັບບຸກຄົນໃດໆ. ໃຫ້ລາຍງານກໍລະນີການຂູດຮີດທາງເພດ ແລະ ການລະເມີດທາງເພດຕໍ່ເຈົ້າໜ້າທີ່ຕຳຫຼວດ, ສຍລ ແລະ ອຳນາດການປົກຄອງບ້ານໃນທັນທີ.
- ຄວາມຊື່ສັດ ແລະ ຄວາມພາກພຽນ: ຜູ້ທີ່ເຮັດການຄຸ້ມຄອງກໍລະນີ ຄວນປະຕິບັດໜ້າທີ່ຂອງຕົນດ້ວຍຄວາມຊື່ສັດ. ພ້ອມກັນນັ້ນ, ກໍຄວນປະຕິບັດໜ້າທີ່ຮັບຜິດຊອບຂອງຕົນຕະຫຼອດເວລາໃຫ້ດີທີ່ສຸດ.

## 7. ພາລະບົດບາດ ແລະ ຄວາມຮັບຜິດຊອບ

ບຸກຄະລາກອນສັງຄົມສົງເຄາະ

ໂຄງຮ່າງກົງຈັກຂອງ ຕປດ

| ຫົວໜ້າ ຕປດ |
| --- |
| ນາຍບ້ານ/ຮອງນາຍບ້ານ |
| ຮອງຫົວໜ້າ ຕປດ |
| ຜູ້ຮັບຜິດຊອບ ຮສສ ບ້ານ |
| ແມ່ຍິງບ້ານ |
| ສະມາຊິກ |
| ແນວໂຮມບ້ານ |
| ປກສ ບ້ານ |
| ອຳນວຍການໂຮງຮຽນ |
| ອສບ ບ້ານ |
| ເລຂາຊາວໜຸ່ມບ້ານ |

ບຸກຄະລາກອນສັງຄົມສົງເຄາະ ມີບົດບາດສຳຄັນໃນການກຳນົດຄວາມສ່ຽງ, ອຳນວຍຄວາມສະດວກໃນການເຂົ້າເຖິງການບໍລິການສັງຄົມຂັ້ນພື້ນຖານ ແລະ ສະໜອງການສະໜັບສະໜູນການຫຼຸດຜ່ອນຄວາມທຸກຍາກ. ໃນ ສປປ ລາວ, ອົງການຈັດຕັ້ງລັດຖະບານຫຼາຍອົງການໄດ້ຖືກມອບໝາຍໃຫ້ສະໜອງການບໍລິການປົກປ້ອງເດັກ, ລວມທັງ ກຊ ຮສສ ເພື່ອສະໜັບສະໜູນເດັກທີ່ມີຄວາມສ່ຽງ, ສູນກາງສະຫະພັນແມ່ຍິງ (ສຍລ) ຖືກມອບໝາຍໃຫ້ແກ້ໄຂກໍລະນີຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ ແລະ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ (ສຊປລ) ຖືກມອບໝາຍໃຫ້ສະໜອງການບໍລິການໃຫ້ຄຳປຶກສາ ແລະ ຮັບລາຍງານກໍລະນີບັນຫາຂອງໄວໜຸ່ມ. ເຖິງຢ່າງໃດກໍຕາມ, ຜູ້ທີ່ເຮັດວຽກກັບເດັກ ແລະ ຄອບຄົວ, ລວມທັງ ພະນັກງານຂອງອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ແລະ ອົງການຈັດຕັ້ງທາງສັງຄົມ ຖືວ່າເປັນຊັບພະຍາກອນມະນຸດຂອງລະບົບປົກປ້ອງເດັກ ເຊິ່ງສາມາດປະກອບສ່ວນໃນການປ້ອງກັນ, ແກ້ໄຂ ແລະ ກຳນົດຄວາມສ່ຽງຈາກການທາລຸນເດັກ.

ໃນຂັ້ນບ້ານ, ຕາໜ່າງປົກປ້ອງເດັກ (ຕປດ) ມີບົດບາດສຳຄັນໃນການສັງເກດເຫດການຕ່າງໆໃນຊຸມຊົນ. ຕາໜ່າງປົກປ້ອງເດັກ (ຫຼື ຄະນະກຳມະການປົກປ້ອງ ແລະ ຊ່ວຍເຫຼືອເດັກຂັ້ນບ້ານ ຄປດບ) ໄດ້ເລີ່ມດຳເນີນການໃນ ສປປ ລາວ ໃນປີ 2004 ພາຍໃຕ້ການຊີ້ນຳພາຂອງກົມສັງຄົມສົງເຄາະ, ກຊ ຮສສ ໂດຍໄດ້ຮັບການສະໜັບສະໜູນຈາກອົງການ ຢູນິເຊັບ. ຕໍ່ມາ ໃນປີ 2017 ຕປດ ໄດ້ຖືກລວມເຂົ້າໃນກົງຈັກຂອງລະບົບປົກປ້ອງເດັກຢ່າງເປັນທາງການພາຍໃຕ້ ຂໍ້ຕົກລົງກ່ຽວກັບການສ້າງຕັ້ງບ້ານຕາໜ່າງປົກປ້ອງເດັກ . ອີງຕາມ ກຊ ຮສສ, ມາຮອດປີ 2021, ໄດ້ມີການສ້າງຕັ້ງ ຕປດ ຂຶ້ນຢູ່ 2,184 ບ້ານ, ເຊິ່ງກວມເອົາປະມານ 26% ຂອງບ້ານທັງໝົດໃນ ສປປ ລາວ (8,507 ບ້ານ). ການສ້າງຕັ້ງ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ ຕປດ ໄດ້ເປັນອົງປະກອບສຳຄັນໃນການສ້າງຄວາມເຂັ້ມແຂງລະບົບປົກປ້ອງເດັກຂອງ ສປປ ລາວ. ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ (2007) ຍັງໄດ້ກຳນົດໃນການສ້າງຕັ້ງ ຄະນະກຳມະການ

ປົກປ້ອງ ແລະ ຊ່ວຍເຫຼືອເດັກ (ຄປດ) ເພື່ອຄຸ້ມຄອງ ແລະ ຕິດຕາມສະຖານະການຂອງເດັກ ໂດຍຜ່ານເຄືອຂ່າຍຂອງຄະນະກຳມະການຂັ້ນບ້ານ. ມາດຕາ 36 ຂອງກົດໝາຍໄດ້ລະບຸວ່າຄະນະກຳມະການມີສິດ ແລະ ໜ້າທີ່ສຳຄັນດັ່ງນີ້:

- ຮັບການລາຍງານກ່ຽວກັບເດັກທີ່ມີຄວາມສ່ຽງຕໍ່ອັນຕະລາຍ ແລະ ເດັກທີ່ຕ້ອງການໆປົກປ້ອງພິເສດ.
- ຊ່ວຍເຫຼືອເດັກ ແລະ ຄອບຄົວທີ່ຕ້ອງການໆປົກປ້ອງພິເສດ.
- ແນະນຳ, ຕິດຕາມ ແລະ ກວດກາຢ່າງເປັນປົກກະຕິກ່ຽວກັບການເບິ່ງແຍງລ້ຽງດູ ແລະ ການຊ່ວຍເຫຼືອເດັກໂດຍຜ່ານການບໍລິການຕ່າງໆ.
- ເກັບກຳສະຖິຕິເດັກທີ່ມີຄວາມສ່ຽງຕໍ່ອັນຕະລາຍ ຫຼື ເດັກທີ່ຕ້ອງການໆປົກປ້ອງພິເສດ.

**ພາບປະກອບການອະທິບາຍກ່ຽວກັບພາລະບົດບາດ ແລະ ຄວາມຮັບຜິດຊອບຂອງ ຕປດ**




**ຕາຕະລາງ ກ: ສະມາຊິກ, ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕາໜ່າງປົກປ້ອງເດັກ[38]**

| ສະມາຊິກ ຕປດ | ພາລະບົດບາດ ແລະ ຄວາມຮັບຜິດຊອບ |
|---|---|
| **ນາຍບ້ານ/ຮອງນາຍບ້ານ** | • ເປັນຜູ້ຊີ້ນຳ ຕປດ ຢູ່ຂັ້ນບ້ານ ແລະ ຮັບປະກັນໃຫ້ ຕປດ ມີການປະຊຸມເປັນປົກກະຕິ ແລະ ຮັກສາມາດຕະຖານຕໍ່າສຸດໃນການດຳເນີນງານຂອງ ຕປດ ສຳລັບເດັກ.<br>• ກວດກາການເຊື່ອມໂຍງ ແລະ ການຈັດຕັ້ງປະຕິບັດບັນຫາການປົກປ້ອງເດັກ, ສິດທິເດັກ ແລະ ບັນຫາການພັດທະນາເດັກໃນກອງປະຊຸມຄະນະກຳມະການພັດທະນາບ້ານ ແລະ ການຈັດຕັ້ງປະຕິບັດອື່ນໆທີ່ກ່ຽວຂ້ອງໃນຂັ້ນບ້ານ.<br>• ຮັບປະກັນເອົາການຕິດຕາມ, ກວດກາຄວາມຢູ່ດີກິນດີຂອງເດັກ ແລະ ວຽກປົກປ້ອງເດັກລວມເຂົ້າໃນແຜນວຽກ/ແຜນການພັດທະນາປະຈຳປີຂອງບ້ານ.<br>• ຮຽກປະຊຸມຕາມຄວາມຈຳເປັນເພື່ອອຳນວຍຄວາມສະດວກໃຫ້ແກ່ວຽກງານຂອງ ຕປດ ຫຼື ເພື່ອແກ້ໄຂບັນຫາທີ່ຕ້ອງການໃຫ້ ຕປດ ເຂົ້າໄປໃຫ້ການຊ່ວຍເຫຼືອ.<br>• ຮັບປະກັນການສົ່ງຕໍ່ບັນຫາ/ກໍລະນີທີ່ຢູ່ນອກເໜືອຄວາມອາດສາມາດຂອງ ຕປດ ທີ່ຈະແກ້ໄຂໄດ້ ໄປຫາເຈົ້າໜ້າທີ່ ຫຼື ຜູ້ໃຫ້ບໍລິການທີ່ກ່ຽວຂ້ອງ ລວມທັງໃນຂັ້ນເມືອງ.<br>• ລະດົມຊັບພະຍາກອນໃນການຈັດຕັ້ງປະຕິບັດກິດຈະກຳປົກປ້ອງເດັກ. |

[38] ຂໍ້ສະເໜີແນະເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບປົກປ້ອງເດັກໃນ ສປປ ລາວ. ຄະນະກຳມະການປົກປ້ອງ ແລະ ຊ່ວຍເຫຼືອເດັກ, 2023

| | |
|---|---|
| **ອາສາສະໝັກ ຮສສ ບ້ານ** | • ປະຕິບັດໜ້າທີ່ໃນການເປັນສະມາຊິກຂອງ ຕປດ ຂັ້ນບ້ານ ແລະ ເຮັດໜ້າທີ່ເປັນເລຂາ ແລະ ຜູ້ປະສານງານຂອງ ຕປດ.<br>• ເກັບກຳຂໍ້ມູນກ່ຽວກັບເດັກໃນບ້ານ ແລະ ເດັກທີ່ຕ້ອງການໆປົກປ້ອງພິເສດ.<br>• ຮ່ວມກັບສະມາຊິກຄົນອື່ນຂອງ ຕປດ ເຮັດການກວດກາ ແລະ ຕິດຕາມບັນຫາກ່ຽວກັບ ປົກປ້ອງເດັກ.<br>• ຢ້ຽມຢາມຄອບຄົວເພື່ອໃຫ້ການຊ່ວຍເຫຼືອ ແລະ ສະໜັບສະໜູນການແກ້ໄຂບັນຫາ ຫຼື ການລາຍງານ.<br>• ອຳນວຍຄວາມສະດວກໃຫ້ແກ່ ບຸກຄະລາກອນສັງຄົມສົງເຄາະຂອງຂະແໜງ ຮສສ ໃນການຕິດຕາມ/ຊຸກຍູ້ກໍລະນີ.<br>• ສະໜັບສະໜູນການກະກຽມແຜນວຽກປະຈຳປີ ແລະ ການເຮັດບົດລາຍງານກ່ຽວກັບ ກິດ ຈະກຳຂອງ ຕປດ. |
| **ຜູ້ປະສານງານໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ** | • ແກ້ໄຂກໍລະນີເດັກກະທຳຜິດ/ເດັກທີ່ເຂົ້າມາກ່ຽວຂ້ອງກັບລະບົບກົດໝາຍໂດຍ ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງໃນການປົກປ້ອງເດັກ.<br>• ຕິດຕາມ ແລະ ບັນທຶກຂໍ້ມູນກ່ຽວກັບເດັກທີ່ມີຄວາມສ່ຽງ, ເດັກທີ່ຕົກຢູ່ໃນຄວາມສ່ຽງ.<br>• ເປັນຜູ້ຕາງໜ້າໃຫ້ເດັກ ແລະ/ຫຼືຜູ້ເບິ່ງແຍງດູແລເດັກໃນການຮ້ອງຟ້ອງ.<br>• ເປັນຈຸດປະສານງານກັບໜ່ວຍງານອື່ນໆທີ່ກ່ຽວຂ້ອງໃນຂັ້ນບ້ານເພື່ອໃຫ້ການ ຊ່ວຍເຫຼືອແກ່ເດັກທັນທີ.<br>• ຍົກບັນຫາການປົກປ້ອງເດັກໃນບ້ານຂອງເຂົາເຈົ້າໃນກອງປະຊຸມກຸ່ມບ້ານ.<br>• ໂຄສະນາ ແລະ ປູກຈິດສຳນຶກກ່ຽວກັບລະບົບປົກປ້ອງເດັກຢູ່ພາຍໃນບ້ານ. |
| **ສະຫະພັນແມ່ຍິງ ຂັ້ນບ້ານ** | • ຢ້ຽມຢາມຄອບຄົວເພື່ອສະໜັບສະໜູນ ຫຼື ຊ່ວຍເຂົາເຈົ້າໃນການເຂົ້າເຖິງການຊ່ວຍເຫຼືອ ເພື່ອແກ້ໄຂບັນຫາກ່ຽວກັບປົກປ້ອງເດັກ.<br>• ສົ່ງຕໍ່ເດັກ ແລະ ຮັບການລາຍງານບັນຫາກ່ຽວກັບປົກປ້ອງເດັກ.<br>• ລະບຸ ແລະ ໃຫ້ການສະໜັບສະໜູນບັນດາຄອບຄົວເດັກ ທີ່ບໍ່ໄດ້ຮັບການດູແລຢ່າງພຽງພໍ.<br>• ມີສ່ວນຮ່ວມໃນການໄກ່ເກ່ຍໃນຂັ້ນບ້ານເພື່ອແກ້ໄຂບັນຫາກ່ຽວກັບປົກປ້ອງເດັກ.<br>• ບໍລິການໃຫ້ຄຳປຶກສາດ້ານຈິດໃຈ ແລະ ການປຶກສາດ້ານກົດໝາຍ ແລະ ຮ່ວມຢູ່ກັບ ເດັກ ແລະ ຄອບຄົວ ໃນເວລາດຳເນີນຂະບວນການຂອງສານ ຕາມຄວາມຈຳເປັນ.<br>• ດຳເນີນການສຶກສາອົບຮົມພໍ່ແມ່ກ່ຽວກັບການເບິ່ງແຍງລ້ຽງດູລູກ ເພື່ອໃຫ້ເຂົາເຈົ້າມີ ຄວາມຮູ້ ແລະ ທັກສະໃນການເບິ່ງແຍງລ້ຽງດູ ແລະ ປົກປ້ອງລູກຂອງເຂົາເຈົ້າໃຫ້ດີຂຶ້ນ. |
| **ແນວໂຮມບ້ານ** | • ໃຫ້ຄຳແນະນຳສຳລັບການສ້າງຕັ້ງກອງທຶນບ້ານເພື່ອການປົກປ້ອງເດັກ (ທັງໃນ ດ້ານການປ້ອງກັນ ແລະ ການແກ້ໄຂ).<br>• ມີສ່ວນຮ່ວມ ແລະ ເປັນເຈົ້າການໃນການໂຄສະນາປູກຈິດສຳນຶກກ່ຽວກັບການປົກປ້ອງ ເດັກ, ສິດທິເດັກ ແລະ ກົດໝາຍ ແລະ ນະໂຍບາຍກ່ຽວກັບຄວາມຢູ່ດີກິນດີຂອງເດັກ.<br>• ໄກ່ເກ່ຍລະຫວ່າງຄວາມເຊື່ອຖືແບບດັ້ງເດີມ ແລະ ມາດຕະຖານການປົກປ້ອງເດັກ ຕາມຄວາມຈຳເປັນ.<br>• ສະໜັບສະໜູນການເຊື່ອມເອົາວຽກປົກປ້ອງເດັກ, ສິດທິເດັກ ແລະ ຄວາມຢູ່ດີກິນດີ ຂອງເດັກເຂົ້າໃນແຜນວຽກຂອງບ້ານ ແລະ ແຜນພັດທະນາບ້ານ.<br>• ໃຫ້ຄຳແນະນຳແກ່ເດັກ ແລະ ຄອບຄົວກ່ຽວກັບວິທີປ້ອງກັນ ແລະ ວິທີແກ້ໄຂບັນຫາ ປົກປ້ອງເດັກ ລວມທັງວິທີການໃນການຊອກຫາການຊ່ວຍເຫຼືອ. |

| | |
|---|---|
| **ຊາວໜຸ່ມປະຊາຊົນປະຕິວັດລາວ ບ້ານ** | • ຈັດກິດຈະກຳການພັດທະນາສຳລັບຊາວໜຸ່ມ ແລະ ເດັກ ລວມທັງກິດຈະກຳກິລາ, ກິດຈະ ກຳທາງດ້ານວັດທະນະທຳ, ການສະແດງສິລະປະ, ເວທີການສົນທະນາ ແລະ ອື່ນໆ.<br>• ຮັບປະກັນວ່າທຸກໆກິດຈະກຳຈັດຂຶ້ນດ້ວຍວິທີທີ່ສົ່ງເສີມສິດທິເດັກ ລວມທັງເດັກພິການ, ປົກປ້ອງຄວາມຢູ່ດີກິນດີຂອງເດັກ ແລະ ສົ່ງເສີມການພັດທະນາເດັກ.<br>• ຊຸກຍູ້ການມີສ່ວນຮ່ວມຂອງຊາວໜຸ່ມ ແລະ ເດັກ ແລະ ເຮັດໜ້າທີ່ໃນການເປັນອາສາສະໝັກໃນ ກິດຈະກຳຕ່າງໆຂອງບ້ານ.<br>• ລາຍງານບັນຫາທີ່ອາດເກີດຂຶ້ນໃຫ້ແກ່ ສຍລ, ໜ່ວຍໄກ່ເກ່ຍ ຫຼື ນາຍບ້ານ.<br>• ນຳສົ່ງເດັກໄປຮັບການຊ່ວຍເຫຼືອ ແລະ ການບໍລິການຕ່າງໆ. |
| **ປ້ອງກັນຄວາມສະຫງົບບ້ານ** | • ສະໜັບສະໜູນການສືບສວນ-ສອບສວນທຸກໆເຫດການ ຫຼື ການກ່າວຫາກ່ຽວກັບການໃຊ້ຄວາມຮຸນແຮງ, ການທາລຸນ, ການປ່ອຍປະລະເລີຍ, ການຂູດຮີດ, ການຈຳແນກ ແລະ ຄວາມສ່ຽງ ຫຼື ອາຊະຍາກຳທີ່ກ່ຽວຂ້ອງກັບເດັກໃຫ້ທັນເວລາ.<br>• ສະໜັບສະໜູນການໂຄສະນາປູກຈິດສຳນຶກ ແລະ ສ້າງຄວາມເຂົ້າໃຈກ່ຽວກັບກົດໝາຍ ແລະ ນະໂຍບາຍທີ່ກ່ຽວຂ້ອງກັບເດັກ ລວມທັງວິທີການໃນການແກ້ໄຂບັນຫາ.<br>• ບັນທຶກ ແລະ ລາຍງານກ່ຽວກັບບັນຫາປົກປ້ອງເດັກທີ່ເກີດຂຶ້ນໃນຊຸມຊົນ.<br>• ເຮັດໜ້າທີ່ເປັນຜູ້ສົ່ງຕໍ່ ແລະ ສະໜັບສະໜູນເດັກ ແລະ ຄອບຄົວໃນການເຂົ້າເຖິງການບໍລິການ.<br>• ຕິດຕາມ, ຮັບປະກັນ ຄວາມປອດໄພຂອງເດັກ ແລະ ສ້າງສະພາບແວດລ້ອມທີ່ ເອື້ອອຳນວຍແກ່ເດັກຢູ່ໃນບ້ານ. |
| **ອຳນວຍການໂຮງຮຽນ/ຄູອາຈານ** | • ປະຕິບັດໜ້າທີ່ໃນການເປັນສະມາຊິກຂອງ ຕປດ ແລະ ຕິດຕໍ່ປະສານງານລະຫວ່າງໂຮງຮຽນກັບບ້ານ, ຮັບປະກັນການສົ່ງເສີມຫຼັກການສິດທິເດັກ ແລະ ຄວາມຮັບຜິດຊອບຂອງເດັກຢູ່ແຕ່ລະສະຖານທີ່ໃຫ້ກົມກຽວ ແລະ ເສີມສ້າງເຊື່ອມກັນ ແລະ ກັນລະຫວ່າງໂຮງຮຽນກັບບ້ານ.<br>• ຕິດຕາມ ແລະ ຮັບປະກັນການຈັດຕັ້ງປະຕິບັດນະໂຍບາຍປົກປ້ອງເດັກຢູ່ໃນໂຮງຮຽນ.<br>• ຕິດຕາມການມາໂຮງຮຽນຂອງເດັກ ແລະ ປະສານງານກັບອາສາສະໝັກ ຕປດ ເພື່ອອຳນວຍຄວາມສະດວກໃນການເຂົ້າເຖິງການສຶກສາສຳລັບເດັກທຸກຄົນ.<br>• ຂໍການຊ່ວຍເຫຼືອຈາກສະມາຊິກ ຕປດ ຫຼື ຜູ້ໃຫ້ບໍລິການອື່ນໆຖ້າສົງໃສວ່າມີບັນຫາປົກປ້ອງເດັກເກີດຂຶ້ນ.<br>• ປະສານງານກັບ ຕປດ ຂັ້ນບ້ານເພື່ອໃຫ້ການຊ່ວຍເຫຼືອເດັກທີ່ຕ້ອງການໆປົກປ້ອງ. |
| **ອາສາສະໝັກ<br>ສາທາລະນະສຸກ ຂັ້ນບ້ານ** | • ປະຕິບັດໜ້າທີ່ໃນການເປັນສະມາຊິກຂອງ ຕປດ ຂອງບ້ານ ແລະ ປະສານງານໃນການຊ່ວຍເຫຼືອທີ່ກ່ຽວຂ້ອງກັບສຸຂະພາບໃຫ້ແກ່ເດັກ ແລະ ຄອບຄົວທີ່ຕ້ອງການໆປົກປ້ອງ.<br>• ສົ່ງເສີມ ແລະ ຮັບປະກັນໃຫ້ເດັກທຸກໆຄົນທີ່ມີອາຍຸຕ່ຳກວ່າ 5 ປີ, ໂດຍສະເພາະແມ່ນເດັກເກີດໃໝ່ໃຫ້ໄດ້ລົງທະບຽນການເກີດ ແລະ ມີໃບຢັ້ງຢືນການເກີດ.<br>• ປະສານງານກັບ ຕປດ ຂັ້ນບ້ານ ແລະ ອາສາສະໝັກ ຕປດ ເພື່ອໃຫ້ການຊ່ວຍເຫຼືອເດັກທີ່ຕ້ອງການໆປົກປ້ອງພິເສດ ແລະ ຄອບຄົວຂອງເຂົາເຈົ້າ. |

**ຂະແໜງຍຸຕິທຳ ແລະ ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ**

ຂະແໜງຍຸຕິທຳ ແລະ ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ມີບົດບາດສຳຄັນໃນການຮັບປະກັນໃຫ້ເດັກທຸກຄົນສາມາດເຂົ້າເຖິງລະບົບຍຸຕິທຳທີ່ເປັນມິດກັບເດັກ, ຄຳນຶງເຖິງບົດບາດຍິງ-ຊາຍ ແລະ ມີຄວາມພ້ອມທີ່ດີເພື່ອຮັບປະກັນສິດຂອງເຂົາເຈົ້າ. ເດັກທີ່ເຂົ້າມາພົວພັນກັບລະບົບກົດໝາຍ, ລວມທັງເດັກກະທຳຜິດ, ເດັກຜູ້ເຄາະຮ້າຍ (ສ່ວນໃຫຍ່ແມ່ນເພດຍິງ) ແລະ ເດັກທີ່ເປັນພະຍານ, ເດັກທີ່ຕ້ອງການໆປົກປ້ອງ, ການດູແລ ແລະ ການເອົາໃຈໃສ່ພິເສດ. ການຮ່ວມມືລະຫວ່າງຂະແໜງຍຸຕິທຳ ແລະ ສະຫວັດດີການສັງຄົມແມ່ນຈຳເປັນ ເພື່ອຮັບປະກັນການເຂົ້າເຖິງການບໍລິການດ້ານຍຸຕິທຳທີ່ເປັນມິດກັບເດັກ ແລະ ການດູແລຢ່າງຕໍ່ເນື່ອງ. ໃນ ສປປ ລາວ, ຄະນະ ປະສານງານຍຸຕິທຳເດັກມີບົດບາດສຳຄັນໃນການປະສານງານ ແລະ ການແກ້ໄຂຄະດີທີ່ກ່ຽວຂ້ອງກັບເດັກ. ສະມາຊິກຂອງຄະນະປະສານງານຍຸຕິທຳເດັກປະກອບມີກະຊວງຍຸຕິທຳ (ກຊ ຍຕທ), ກະຊວງປ້ອງກັນຄວາມສະຫງົບ (ກຊ ປກສ), ສານປະຊາຊົນສູງສຸດ (ສານ ປຊສ), ແລະ ອົງການໄອຍະການປະຊາຊົນສູງສຸດ (ອຍກ).

ຢູ່ໃນຂັ້ນບ້ານ, ມີໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ທີ່ສ້າງຕັ້ງຂຶ້ນພາຍໃຕ້ກະຊວງຍຸຕິທຳ (ກຊ ຍຕທ). ໃນ ສປປ ລາວ ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ແມ່ນໂຄງສ້າງໃນທ້ອງຖິ່ນຂອງລັດຖະບານທີ່ມີມາແຕ່ດົນນານໃນການແກ້ໄຂບັນຫາຂໍ້ຂັດແຍ່ງໃນຂັ້ນບ້ານ.[39] ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານມີຄວາມຮັບຜິດຊອບໃນການໄກ່ເກ່ຍຂໍ້ຂັດແຍ່ງທາງແພ່ງ ແລະ ໄກ່ເກ່ຍຄະດີອາຍາເລັກນ້ອຍ. ການໄກ່ເກ່ຍແມ່ນຂະບວນການສະໝັກໃຈ ທີ່ມີບຸກຄົນທີສາມທີ່ເປັນກາງ (ຜູ້ໄກ່ເກ່ຍ) ຊ່ວຍໃຫ້ຜູ້ທີ່ມີສ່ວນໃນຂໍ້ຂັດແຍ່ງທາງແພ່ງ ຫຼື ທາງອາຍາ ໂອ້ລົມກັນເພື່ອນຳໄປສູ່ຂໍ້ຕົກລົງທີ່ຍອມຮັບໄດ້ກັບທຸກຄົນທີ່ກ່ຽວຂ້ອງ. ການໄກ່ເກ່ຍຂໍ້ຂັດແຍ່ງທີ່ກ່ຽວຂ້ອງກັບເດັກ ແມ່ນທາງເລືອກຂອງລະບົບຍຸຕິທຳທາງການສຳລັບເດັກກະທຳຜິດ. ໃນລະຫວ່າງການໄກ່ເກ່ຍ, ຜູ້ຖືກເຄາະຮ້າຍ ແລະ ເດັກຜູ້ກະທຳຜິດ ມີການປະຊຸມກັນຢ່າງເປັນທາງການເພື່ອປຶກສາຫາລືກ່ຽວກັບການກະທຳຜິດ. ມັນໃຫ້ໂອກາດຜູ້ຖືກເຄາະຮ້າຍໄດ້ອະທິບາຍກ່ຽວກັບການກະທຳຜິດທີ່ສົ່ງຜົນກະທົບຕໍ່ລາວ ແລະ ມັນຍັງໃຫ້ໂອກາດແກ່ເດັກກະທຳຜິດ ໄດ້ອະທິບາຍກ່ຽວກັບເລື່ອງທີ່ເກີດຂຶ້ນ. ຜູ້ໄກ່ເກ່ຍຈະອຳນວຍຄວາມສະດວກໃນການສົນທະນາ ແລະ ເຮັດຂໍ້ຕົກລົງທີ່ສາມາດຍອມຮັບໄດ້ທັງສອງຝ່າຍ ເພື່ອແກ້ໄຂຄວາມເສຍຫາຍທີ່ເກີດຂຶ້ນຈາກການກະທຳດັ່ງກ່າວ.

**ຄູອາຈານ ແລະ ພະນັກງານໃນໂຮງຮຽນ**

ພະນັກງານຂະແໜງສຶກສາທິການ ແລະ ກິລາ, ຄູສອນ, ອາຈານ ແລະ ຜູ້ອຳນວຍການໂຮງຮຽນພົວພັນກັບເດັກທຸກໆມື້ ຊຶ່ງສາມາດເກັບກຳ ກ່ຽວກັບສະພາບການ ຫຼື ບັນຫາ ທີ່ກ່ຽວຂ້ອງກັບເດັກ, ທັງຢູ່ໃນໂຮງຮຽນ ແລະ ຢູ່ບ້ານ ໂດຍອີງໃສ່ການສັງເກດຈາກການມາໂຮງຮຽນຂອງເດັກ, ການປະພຶດຂອງເດັກຢູ່ໃນໂຮງຮຽນ ແລະ ປະສົບການທີ່ເດັກອາດຈະເລົ່າໃຫ້ຟັງ. ລະບົບການສຶກສາຄວນພະຍາຍາມປັບປຸງລະດັບການປົກປ້ອງເດັກ ແລະ ສົ່ງເສີມສະຫວັດດີການໃຫ້ເດັກຢູ່ໃນໂຮງຮຽນ. ຄູສອນຍັງສາມາດມີບົດບາດໃນການລະບຸໃນເບື້ອງຕົ້ນ ແລະ ລາຍງານກ່ຽວກັບເດັກທີ່ອາດຈະປະສົບກັບບັນຫາປົກປ້ອງເດັກ ພ້ອມທັງສະໜອງການສະໜັບສະໜັນຊ່ວຍເຫຼືອໃຫ້ແກ່ເດັກດ້ວຍຕົນເອງ ຫຼື ສົ່ງເດັກໄປຫາຜູ້ທີ່ສາມາດໃຫ້ການສະໜັບສະໜູນຊ່ວຍເຫຼືອເດັກໄດ້.

**ພະນັກງານສາທາລະນະສຸກ**

ພະນັກງານຂະແໜງສາທາລະນະສຸກ, ທ່ານໝໍ, ພະຍາບານ ແລະ ພະນັກງານໂຮງໝໍນ້ອຍ ມັກຈະເປັນເຈົ້າໜ້າທີ່ຜູ້ທຳອິດທີ່ອາດພົບກັບກໍລະນີການທາລຸນ ແລະ ການໃຊ້ຄວາມຮຸນແຮງຕໍ່ເດັກ ໂດຍສະເພາະກໍລະນີຮ້າຍແຮງເມື່ອເດັກຖືກທຳຮ້າຍຮ່າງກາຍ ຫຼື ທາງເພດ.ພະນັກງານສາທາລະນະສຸກຍັງສາມາດມີບົດບາດໃນການລະບຸໃນເບື້ອງຕົ້ນ ແລະ ລາຍງານກ່ຽວກັບກໍລະນີການທາລຸນເດັກ, ສະໜອງການຊ່ວຍເຫຼືອດ້ານການແພດໃຫ້ແກ່ເດັກດ້ວຍຕົນເອງ ຫຼື ສົ່ງເດັກໄປຫາຜູ້ທີ່ສາມາດໃຫ້ການສະໜັບສະໜູນຊ່ວຍເຫຼືອເດັກໄດ້. ພະນັກງານສາທາລະນະສຸກມີຄວາມຮັບຜິດຊອບໃນການລາຍງານກໍລະນີຄວາມຮຸນແຮງທາງດ້ານຮ່າງກາຍ ແລະ ທາງເພດ. ພະນັກງານສາທາລະນະສຸກຍັງສາມາດມີບົດບາດສຳຄັນໃນການສະໜອງການຊ່ວຍເຫຼືອດ້ານສຸຂະພາບຈິດ ແລະ ຈິດຕະສັງຄົມ ໃຫ້ແກ່ເດັກ ແລະ ຄອບຄົວທີ່ມີບັນຫາຫຍຸ້ງຍາກ.

[39] ຂໍ້ຕົກລົງຂອງລັດຖະມົນຕີກະຊວງຍຸຕິທຳ ສະບັບເລກທີ 304/ກຊ ຍຕທ.

# ພາກທີ II

# ຂະບວນການຄຸ້ມຄອງກໍລະນີ

ພາກນີ້ອະທິບາຍເຖິງຂະບວນການໃນການຄຸ້ມຄອງກໍລະນີ, ການດໍາເນີນງານ, ຂັ້ນຕອນ ແລະ ການພິຈາລະນາ ທີ່ສໍາຄັນ:

**ແຜນວາດ ກ. ຂະບວນການຄຸ້ມຄອງກໍລະນີ**




## 1. ການລະບຸ ແລະ ການລົງທະບຽນ

ຂະບວນການຄຸ້ມຄອງກໍລະນີ, ໃນເມື່ອໄດ້ຮັບແຈ້ງຂໍ້ມູນກ່ຽວກັບບັນຫາທີ່ເກີດຂຶ້ນກັບເດັກ ຕາໜ່າງປົກປ້ອງເດັກ (ຕປດ) ມີໜ້າທີ່ລົງເກັບຂໍ້ມູນທີ່ສົງໃສວ່າມີການໃຊ້ຄວາມຮຸນແຮງ, ການລະເມີດ, ການປ່ອຍປະລະເລີຍ, ການຂູດຮີດ ແລະ ອື່ນໆ ເພື່ອໃຫ້ການຊ່ວຍເຫຼືອເບື້ອງຕົ້ນ ແລະ ລາຍງານ ໃຫ້ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ພ້ອມທັງສາມາດແຈ້ງໃຫ້ເຈົ້າໜ້າທີ່ຕໍາຫຼວດ ຫຼື ປກສ ກຸ່ມບ້ານຢ່າງຮີບດ່ວນ. ພ້ອມນີ້ຕ້ອງເອົາໃຈໃສ່ກໍລະນີ ເຊັ່ນ:

- ເດັກເປັນຜູ້ບອກ ຫຼື ແຈ້ງເອງ;
- ຄົນໃນຄອບຄົວ ຫຼື ຄົນໃກ້ຄຽງອາດຈະບອກວ່າເດັກໄດ້ເລົ່າເລື່ອງເຫດການທີ່ເກີດຂຶ້ນກັບເດັກໃຫ້ຟັງ ຫຼື ເຂົາເຈົ້າອາດແຈ້ງວ່າເຂົາເຈົ້າເຊື່ອຢ່າງໜັກແໜ້ນວ່າເດັກຖືກທາລຸນ;
- ເດັກອາດຈະສະແດງບາງອາການຂອງການບາດເຈັບທາງຮ່າງກາຍ ເຊິ່ງເບິ່ງຄືວ່າບໍ່ມີຄໍາອະທິບາຍທີ່ໜ້າເຊື່ອຖືໄດ້;
- ພຶດຕິກໍາຂອງເດັກອາດຈະຊີ້ບອກໃຫ້ຮູ້ວ່າ ມັນເປັນໄປໄດ້ທີ່ເດັກຖືກທາລຸນ;
- ການຮູ້ກ່ຽວກັບເຫດການ ຫຼື ມີຄວາມສົງໃສກ່ຽວກັບການລະເມີດທີ່ອາດເກີດຂຶ້ນ;
- ບາງພຶດຕິກໍາຂອງເດັກຕໍ່ກັບພໍ່ແມ່ ຫຼື ຜູ້ເບິ່ງແຍງດູແລເດັກ ເຕືອນໃຫ້ຮູ້ ຫຼື ເຮັດໃຫ້ຮູ້ສຶກວ່າມີຄວາມຜິດປົກກະຕິ.

ເມື່ອມີການລະບຸ ຫຼື ລາຍງານກໍລະນີ, ຕປດ ຄວນກໍານົດລະດັບຄວາມສ່ຽງ ແລະ ດໍາເນີນການປະເມີນກໍລະນີໂດຍປະຕິບັດຕາມຂັ້ນຕອນລຸ່ມນີ້:

- **ຂັ້ນຕອນທີ 1:** ຕື່ມຂໍ້ມູນໃສ່ແບບຟອມລົງທະບຽນກໍລະນີ (ຟອມ 1). ເກັບກໍາຂໍ້ມູນພື້ນຖານກ່ຽວກັບ ເດັກ ແລະ ຄອບຄົວ. ບັນທຶກເນື້ອໃນກ່ຽວກັບການລາຍງານເຫດການ ແລະ ບັນຫາ ຫຼື ຄວາມສ່ຽງທີ່ໄດ້ລະບຸ, ຄວາມສາມາດ ແລະ ສະພາບຂອງພໍ່ແມ່ເດັກ.
- **ຂັ້ນຕອນທີ 2:** ໂດຍອີງໃສ່ບັນຫາ/ຄວາມສ່ຽງທີ່ໄດ້ລະບຸ, ກວດເບິ່ງວ່າຂະແໜງການອື່ນທີ່ຕ້ອງມີສ່ວນຮ່ວມໃນການແກ້ໄຂ/ຕອບໂຕ້ກໍລະນີເບື້ອງຕົ້ນມີພາກສ່ວນໃດແດ່ ເຊັ່ນ: ສາທາລະນະສຸກ, ເຈົ້າໜ້າທີ່ຕໍາຫຼວດ ແລະ ສຶກສາ.
- **ຂັ້ນຕອນທີ 3:** ລາຍງານໃຫ້ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ເພື່ອສັງລວມການລົງທະບຽນກໍລະນີ.

ແຕ່ລະກໍລະນີຄວນໄດ້ຮັບການລົງທະບຽນ ໂດຍໃສ່ເລກລະຫັດ ເພື່ອງ່າຍໃນການຕິດຕາມ. ໝາຍເລກລະຫັດຂອງກໍລະນີສາມາດໃສ່ຂໍ້ມູນອື່ນນໍາ ເຊັ່ນ: ສະຖານທີ່, ຊື່ຂອງຫ້ອງການ, ປີ ແລະ ເລກທີ. ຍົກຕົວຢ່າງ:

- **ອຕປ- ຮສສມ-2022-01:** ແຂວງ ອັດຕະປື, ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ, ປີ 2022 ແລະ ກໍລະນີທີ 1.

**ຕາຕະລາງ ຂ: ຕົວຫຍໍ້ສໍາລັບສະຖານທີ່**

| ຕົວຫຍໍ້ | ຊື່ເຕັມ | ຕົວຫຍໍ້ | ຊື່ເຕັມ |
|---|---|---|---|
| ອປ | ອັດຕະປື | **ອຊ** | ອຸດົມໄຊ |
| ບກ | ບໍ່ແກ້ວ | **ຜລ** | ຜົ້ງສາລີ |
| ບຊ | ບໍລິຄໍາໄຊ | **ສວ** | ສາລະວັນ |
| ຈສ | ຈໍາປາສັກ | **ວຈ** | ວຽງຈັນ |
| ສຂ | ສະຫວັນນະເຂດ | **ນວ** | ນະຄອນຫຼວງວຽງຈັນ |
| ຫພ | ຫົວພັນ | **ຊຍ** | ໄຊຍະບູລີ |
| ຄມ | ຄໍາມ່ວນ | **ຊກ** | ເຊກອງ |
| ຫຼທ | ຫຼວງນໍ້າທາ | **ຊຂ** | ຊຽງຂວາງ |
| ຫຼບ | ຫຼວງພະບາງ | **ຊບ** | ໄຊສົມບູນ |

**ຕາຕະລາງ ຄ: ຕົວຢ່າງຂອງລະຫັດສໍາລັບອົງການຈັດຕັ້ງຕ່າງໆ**

| ຕົວຫຍໍ້ | ຊື່ເຕັມ | ຕົວຫຍໍ້ | ຊື່ເຕັມ |
|---|---|---|---|
| **ກຊ ຮສສ** | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | ສຍຂ | ສະຫະພັນແມ່ຍິງແຂວງ |
| **ຮສສຂ** | ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ | ສຍມ | ສະຫະພັນແມ່ຍິງເມືອງ |
| **ຮສສມ** | ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ | ປກສ | ກະຊວງປ້ອງກັນຄວາມສະຫງົບ |

| ຕປດ | ຕາໜ່າງປົກປ້ອງເດັກ | ຍຕທ | ກະຊວງຍຸຕິທຳ |
|---|---|---|---|
| **ສສຍລ** | ສູນກາງສະຫະພັນແມ່ຍິງລາວ | ສຊປລ | ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ |

## 2. ການປະເມີນ

ຕ້ອງເຮັດການປະເມີນກໍລະນີພາຍໃນ 24 ຫາ 48 ຊົ່ວໂມງ ຫຼັງຈາກໄດ້ຮັບການລາຍງານກໍລະນີ ແລະ ການລົງທະບຽນກໍລະນີແລ້ວ. ການປະເມີນມີຈຸດປະສົງເພື່ອປະເມີນຄວາມສ່ຽງດ້ານການປົກປ້ອງທີ່ເດັກປະເຊີນຢູ່ ເຊັ່ນ: ລະດັບອັນຕະລາຍແລະຄວາມສ່ຽງ, ປະເພດຂອງບັນຫາ ແລະ ສະຖານະການໃນຄອບຄົວ/ການດຳລົງຊີວິດ. ຕ້ອງໄດ້ໄປຢ້ຽມຢາມເຮືອນຂອງເດັກ ແລະ ສຳພາດເດັກ, ສະມາຊິກໃນຄອບຄົວ, ເພື່ອນບ້ານ ຫຼື ພາກສ່ວນທີ່ກ່ຽວຂ້ອງອື່ນໆ ເພື່ອຊອກຂໍ້ມູນຢັ້ງຢືນບັນຫາ. ສຳລັບລາຍລະອຽດເພີ່ມເຕີມ ກະລຸນາເບິ່ງຄຳແນະນຳສຳລັບການໄປຢ້ຽມຢາມເຮືອນ (ໜ້າທີ 60).

- **ຂັ້ນຕອນທີ 1:** ດຳເນີນການຢ້ຽມຢາມເຮືອນ (ຖ້າຈຳເປັນ, ໄປຢ້ຽມຢາມຮ່ວມກັບສະມາຊິກຂອງ ຕປດ ຫຼື ໄປຮ່ວມກັບພະນັກງານແຮງງານ ແລະ ສະຫວັດດີການສັງຄົມເມືອງ) ແລະ ຕື່ມຂໍ້ມູນໃສ່ໃນແບບຟອມການປະເມີນເດັກ (ຟອມ 2) ແລະ ແບບຟອມການປະເມີນຄອບຄົວ (ຟອມ 3).

ໃນເວລາເຮັດການປະເມີນເດັກ ແລະ ຄອບຄົວເດັກ, ຕ້ອງໄດ້ພິຈາລະນາບັນຫາລຸ່ມນີ້ :

**ແຜນວາດ ຂ: ຂອບການປະເມີນ[37]**




---

[37] Framework for the Assessment of Children in Need and their Families, Department of Health on behalf of the Controller of Her Majesty s Stationery Office, UK.

ເມື່ອເດັກຕົກຢູ່ໃນອັນຕະລາຍ ແລະ ຕ້ອງການໆປົກປ້ອງ ແລະ ການດູແລທັນທີ, ຄວນປະຕິບັດຕາມຂັ້ນຕອນລຸ່ມນີ້:

- **ຂັ້ນຕອນທີ 1:** ປະສານ ປກສ ບ້ານ, ຕຳຫຼວດກຸ່ມບ້ານ ແລະ ເອົາເດັກອອກຈາກບ່ອນອັນຕະລາຍ.
- **ຂັ້ນຕອນທີ 2:** ເອົາເດັກໄປໄວ້ໃນບ່ອນທີ່ປອດໄພ ເຊັ່ນ: ສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກ, ສະຖານທີ່ຊ່ວຍເຫຼືອເດັກ, ສະຖານທີ່ດູແລເບິ່ງແຍງເດັກ ແລະ ອື່ນໆ.
- **ຂັ້ນຕອນທີ 3:** ໃຫ້ຄຳປຶກສາແກ່ເດັກ ແລະ ສົ່ງຕໍ່ເພື່ອໃຫ້ການຊ່ວຍເຫຼືອດ້ານສັງຄົມສົງເຄາະທີ່ເໝາະສົມ.
- **ຂັ້ນຕອນທີ 4:** ຕິດຕາມ, ປະເມີນຄວາມຄືບໜ້າ ແລະ ສືບຕໍ່ໃຫ້ບໍລິການແກ່ເດັກ.

**ຕາຕະລາງ ຄ: ການຈັດປະເພດຂອງກໍລະນີໂດຍອີງໃສ່ລະດັບຄວາມຮີບດ່ວນສຳລັບເດັກນ້ອຍ[38]**

| ປະເພດຂອງຄວາມສ່ຽງ/ອັນຕະລາຍ | ລະດັບທີ 1<br>ມີອັນຕະລາຍຫຼາຍ. ຈຳເປັນຕ້ອງມີການແກ້ໄຂດ່ວນ ແລະ ຕ້ອງມີການຕິດຕາມເລື້ອຍໆພາຍໃນໄລຍະ 24 ຊົ່ວໂມງ ແລະ ຕ້ອງມີການຕິດຕາມປະຈຳອາທິດ. | ລະດັບທີ 2<br>ມີອັນຕະລາຍ. ຈຳເປັນຕ້ອງມີການແກ້ໄຂ ແລະ ຕ້ອງມີການຕິດຕາມພາຍໃນໄລຍະ 3 ມື້ ແລະ ຕ້ອງມີການຕິດຕາມປະຈຳອາທິດ | ລະດັບທີ 3<br>ມີຄວາມສ່ຽງຕໍ່ການເປັນອັນຕະລາຍ. ຈຳເປັນຕ້ອງມີການຕິດຕາມພາຍໃນໄລຍະ 7 ວັນ ແລະ ຕ້ອງມີການຕິດຕາມປະຈຳເດືອນ. | ລະດັບ 4<br>ບໍ່ມີຄວາມສ່ຽງໃນປັດຈຸບັນ. ບໍ່ຕ້ອງມີການດຳເນີນການໃດໆຕື່ມອີກ ແລະ ສາມາດປິດກໍລະນີໄດ້. |
|---|---|---|---|---|
| **ການທາລຸນທາງຮ່າງກາຍ** | • ບາດເຈັບສາຫັດ (ກະດູກຫັກ, ມີບາດແຜໄໝ້ຕາມຕົນຕົວ, ມີຮອຍຊ້ຳຫຼາຍ ແລະອື່ນໆ).<br>• ມີຄວາມສ່ຽງກາຍເປັນພິການ<br>• ກໍລະນີເກີດກັບເດັກແດງ ແລະ ເດັກອ່ອນ<br>• ເດັກທຳຮ້າຍຕົນເອງ<br>• ພະຍາຍາມຂ້າຕົວຕາຍ. | • ການທຳຮ້າຍຮ່າງກາຍເປັນປະຈຳ<br>• ສະແດງອາການຖືກທາລຸນໃຫ້ເຫັນ (ມີຮອຍຟົກຊ້ຳ, ບາດແຜ ແລະ ອື່ນໆ) ແລະ ເປັນຄວາມສ່ຽງຈະພາໃຫ້ເກີດການບາດເຈັບ | • ການທຳຮ້າຍທີ່ພາໃຫ້ເກີດການບາດເຈັບ<br>• ມີການສັ່ງສອນເດັກດ້ວຍການທຳຮ້າຍຮ່າງກາຍ | • ບໍ່ມີການໃຊ້ຄວາມຮຸນແຮງ<br>• ຜູ້ກະທຳຜິດບໍ່ໄດ້ຢູ່ກັບເດັກອີກຕໍ່ໄປ |
| **ການລະເມີດທາງເພດເດັກ ແລະ ການແຕ່ງດອງກ່ອນໄວອັນຄວນ** | • ມີການພົວພັນທາງເພດລະຫວ່າງຜູ້ໃຫຍ່ກັບເດັກ ແລະ ເດັກກັບເດັກດ້ວຍກັນ<br>• ເດັກຖືພາ<br>• ເດັກໄດ້ແຕ່ງດອງແລ້ວ | • ເດັກຖືກລະເມີດທາງເພດແຕ່ບໍ່ໄດ້ຮັບຊ່ວຍເຫຼືອໃດໆ | • ເດັກກຳລັງຈະແຕ່ງດອງ | • ມີປັດໄຈອັນຕະລາຍທາງເພດ |

[38] ດັດປັບຈາກມາດຕະຖານການຄຸ້ມຄອງບໍລິຫານກໍລະນີສຳລັບເດັກທີ່ຕ້ອງການການດູແລ ແລະ ການປົກປ້ອງ, ກະຊວງບົດບາດຍິງຊາຍ, ເດັກ ແລະ ການປົກປ້ອງສັງຄົມຂອງສາທາລະນະລັດການາ (ມິຖຸນາ 2018). (https://www.google.co.kr/url?sa=t&rct=j&q=&esrc=s&source=web&cd=&ved=2ahUKEwjVrd6apsf3AhUEplYBHQjZC80QFnoECAoQAQ&url=https%3A%2F%2Fwww.mogcsp.gov.gh%2F%3Fmdocs-file%3D2753&usg=AOvVaw2ge0mjLJevBX-FOq0S8FA4)

| | | | | |
|---|---|---|---|---|
| **ການທາລຸນທາງດ້ານຈິດໃຈ** | • ເດັກຖືກບັງຄັບໃຫ້ຢູ່ໂດດດ່ຽວຢ່າງຕໍ່ເນື່ອງ, ມີ່ນປະໝາດ, ນິນທາ,ໃສ່ຮ້າຍ,ປ້ອຍດ່າ, ປະຈານ ຫຼື ເຮັດໃຫ້ອັບອາຍ/ເສຍກຽດສັກສີ. | • ມີການບັງຄັບໃຫ້ຢູ່ໂດດດ່ຽວ, ມິ່ນປະມາດ,ນິນທາ, ໃສ່ຮ້າຍ, ປ້ອຍດ່າ, ປະຈານ ຫຼື ເຮັດໃຫ້ອັບອາຍ/ເສຍກຽດສັກສີເປັນບາງຄັ້ງຄາວ | • ເດັກໄດ້ຮັບການປະຕິບັດທີ່ແຕກຕ່າງຈາກອ້າຍເອື້ອຍນ້ອງຄົນອື່ນໆ ແລະ ພໍ່ແມ່ຄິດໃນແງ່ລົບຕໍ່ເດັກ | • ພໍ່ແມ່ ແລະ ເດັກໄດ້ຮັບການຊ່ວຍເຫຼືອ ແລະ ປັດໄຈທີ່ເຮັດໃຫ້ມີການທາລຸນທາງດ້ານຈິດໃຈໄດ້ຮັບການແກ້ໄຂ. |
| **ການປ່ອຍປະລະເລີຍ** | • ມີການບາດເຈັບ ຫຼື ເຈັບປ່ວຍຮ້າຍແຮງ, ລວມທັງການຂາດສານອາຫານ ເດັກເປັນຫົວໜ້າຄອບຄົວເປັນບາງຄັ້ງຄາວ | • ເດັກຂາດການເບິ່ງແຍງດູແລຈາກພໍ່ແມ່<br>• ການດູແລຂັ້ນພື້ນຖານບໍ່ພຽງພໍ<br>• ບໍ່ສາມດປົກປ້ອງເດັກໄດ້<br>• ເດັກຖືກປະໃຫ້ຢູ່ຄົນດຽວເລື້ອຍໆ<br>• ໃຫ້ເດັກເຮັດໃນສິ່ງທີ່ເກີນຄວາມສາມາດ | • ເດັກໄດ້ຮັບການເບິ່ງແຍງຈາກຜູ້ສູງອາຍຸ ທີ່ຂາດຄວາມພ້ອມໃນການດູແລເດັກ | • ຄວາມຕ້ອງການຂັ້ນພື້ນຖານຂອງເດັກໄດ້ຮັບການຕອບສະໜອງ<br>• ເດັກໄດ້ຮັບການເບິ່ງແຍງຢ່າງພຽງພໍຈາກພໍ່ແມ່<br>• ເດັກຢູ່ໃນສະພາບແວດລ້ອມທີ່ປອດໄພ |
| **ເດັກທີ່ມີຄວາມສ່ຽງສູງ** | • ເດັກທີ່ມີອາຍຸຕໍ່າກວ່າ 5 ປີ ຖືກປະຖິ້ມ<br>• ເດັກອາຍຸຕໍ່າກວ່າ 5 ປີ ເດີນທາງໂດຍລຳພັງ<br>• ແຍກເດັກອາຍຸຕໍ່າກວ່າ 5 ປີໄປຢູ່ກັບຄອບຄົວທີ່ບໍ່ຮູ້ຈັກ | • ເດັກອາຍຸຕໍ່າກວ່າ 12 ປີທີ່ບໍ່ມີຜູ້ເດີນທາງໄປນຳ<br>• ແຍກເດັກອາຍຸຕໍ່າກວ່າ 12 ປີໄປຢູ່ກັບຄອບຄົວທີ່ບໍ່ຮູ້ຈັກ<br>• ເດັກພິການ<br>• ເດັກຂ້າງຖະໜົນ<br>• ເດັກທີ່ຕິດເຊື້ອເອັສໄອວີ/ເອດ | • ເດັກທີ່ອາໄສຢູ່ໃນສູນພັກເຊົາຊົ່ວຄາວ<br>• ເດັກທີ່ຢູ່ໃນສູນກັກກັນ ພະຍາດ | • ເດັກຢູ່ໃນການເບິ່ງແຍງລ້ຽງດູທີ່ດີ ແລະ ມີການຕິດຕາມສະຖານະການມາເປັນເວລາຫຼາຍອາທິດແລ້ວ ໂດຍບໍ່ມີບັນຫາຫຍັງເກີດຂຶ້ນ |
| **ການຄ້າມະນຸດ** | • ເດັກຖືກຄ້າມະນຸດ ເດັກຖືກບັງຄັບໃຫ້ແຕ່ງດອງ<br>• ເດັກທີ່ເຮັດວຽກຢູ່ໃນສະພາບອັນຕະລາຍ | • ເດັກທີ່ມີອາຍຸບໍ່ເຖິງກະສຽນຖືກບັງຄັບໃຫ້ເຮັດວຽກ<br>• ເດັກທີ່ເຮັດວຽກຫຼາຍຊົ່ວໂມງ | • ພໍ່ແມ່ຕ້ອງການສົ່ງລູກໄປເຮັດວຽກແທນທີ່ຈະໄປໂຮງຮຽນ | • ເດັກບໍ່ໄດ້ເຮັດວຽກ ເດັກໄດ້ເຂົ້າໂຮງຮຽນຄືນໃໝ່ |

## 3. ການວາງແຜນກໍລະນີ

ຫຼັງຈາກໄດ້ເຮັດການປະເມີນແລ້ວ ຄວນວາງແຜນສໍາລັບກໍລະນີ ໃຫ້ສໍາເລັດພາຍໃນ 7 ວັນ, ການວາງແຜນລວມມີການເຂົ້າໄປຊ່ວຍເຫຼືອສະເພາະ ເພື່ອແກ້ໄຂບັນຫາທີ່ຖືກລະບຸຈາກການປະເມີນກໍລະນີ. ການວາງແຜນກໍລະນີຕ້ອງໃຫ້ແທດເໝາະກັບເດັກແຕ່ລະຄົນ ໂດຍພິຈາລະນາສະຖານະການ, ຄວາມຕ້ອງການຂອງເດັກ, ສອດຄ່ອງກັບຫຼັກການ, ສິດ ແລະ ຜົນປະໂຫຍດອັນສູງສຸດຂອງເດັກໂດຍອີງໃສ່ສະພາບຂອງແຕ່ລະທ້ອງຖິ່ນ.

- **ຂັ້ນຕອນທີ 1:** ພະນັກງານຫ້ອງການແຮງງານ ແລະ ສະຫວັດດີການສັງຄົມຂັ້ນເມືອງ ໂດຍການປະສານສົມທົບກັບ ຕປດ ຈັດກອງປະຊຸມປຶກສາຫາລືກໍລະນີ ຮ່ວມກັບເດັກ, ຄອບຄົວ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ.
- **ຂັ້ນຕອນທີ 2:** ຕົກລົງເຫັນດີນໍາກັນກ່ຽວກັບ ເປົ້າໝາຍຂອງການແກ້ໄຂກໍລະນີ ເຊັ່ນ: ການສົ່ງເດັກກັບຄືນໄປເຂົ້າໂຮງຮຽນ, ຊອກຫາຄອບຄົວຂອງເດັກທີ່ອາໄສຢູ່ໃນສູນ ເດັກກໍາພ້າ-ກໍາພອຍ ແລະ ສົ່ງເດັກກັບຄືນສູ່ຄອບຄົວ, ຟື້ນຟູເດັກທີ່ປະສົບກັບຄວາມຮຸນແຮງທາງຮ່າງກາຍ ພາຍໃນຄອບຄົວ ແລະ ອື່ນໆ.
- **ຂັ້ນຕອນທີ 3:** ນໍາໃຊ້ແບບຟອມການວາງແຜນກໍລະນີ (ຟອມ 4), ພະນັກງານຫ້ອງການແຮງງານ ແລະ ສະຫວັດດີການສັງຄົມຂັ້ນເມືອງ ຄວນສ້າງແຜນການໃນການເຂົ້າໄປຊ່ວຍເຫຼືອສະເພາະ, ສາມາດປະເມີນໄດ້ ແລະ ສາມາດບັນລຸໄດ້ ໂດຍກໍານົດຄວາມຮັບຜິດຊອບທີ່ຊັດເຈນ ແລະ ກໍານົດເວລາໃນການຕິດຕາມ. (ວິທີການ, ໃຜເປັນຜູ້ເຮັດ, ເຮັດຫຍັງແດ່, ໄລຍະເວລາ ແລະ ເຮັດຢູ່ໃສ).
- **ຂັ້ນຕອນທີ 4:** ນໍາໃຊ້ເຄື່ອງມືແຜນວາດສໍາລັບການບໍລິການ (ໜ້າທີ 49), ເຮັດແຜນທີ່ມີຊັບພະຍາກອນ, ການບໍລິການ ແລະ ການຕິດຕໍ່ພົວພັນໃນຊຸມຊົນ ທີ່ສາມາດປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນກໍລະນີ.
- **ຂັ້ນຕອນທີ 5:** ຕົກລົງເຫັນດີກ່ຽວກັບຮູບແບບການຈັດຕັ້ງປະຕິບັດ ແລະ ແຜນການຕິດຕາມກັບຄອບຄົວ ແລະ ຖ້າເປັນໄປໄດ້ ແມ່ນໃຫ້ປຶກສາກັບຄອບຄົວ.
- **ຂັ້ນຕອນທີ 6:** ອະທິບາຍໃຫ້ຄອບຄົວ ແລະ ເດັກໃຫ້ຮູ້ຢ່າງຈະແຈ້ງກ່ຽວກັບການຈັດຕັ້ງປະຕິບັດ ແລະ ແຜນການຕິດຕາມ, ການສື່ສານທີ່ເປັນມິດກັບເດັກ ແລະ ເໝາະສົມກັບອາຍຸຂອງເດັກ ເພື່ອໃຫ້ບັນລຸເປົ້າໝາຍຂອງການຄຸ້ມຄອງກໍລະນີ.

ການມີສ່ວນຮ່ວມຂອງເດັກແມ່ນມີຄວາມສໍາຄັນຫຼາຍ ເນື່ອງຈາກວ່າເດັກເປັນຜູ້ທີ່ປະສົບເຫດການທີ່ເກີດຂຶ້ນ, ທັດສະນະ, ຄວາມຄິດເຫັນ ແລະ ຄວາມຕ້ອງການຂອງເຂົາເຈົ້າຄວນໄດ້ຮັບການເຄົາລົບຢ່າງເຕັມສ່ວນໃນເວລາທີ່ສ້າງແຜນກໍລະນີ. ເມື່ອຕິດຕໍ່ສື່ສານກັບເດັກ, ພະນັກງານແຮງງານ ແລະ ສະຫວັດດີການສັງຄົມຂັ້ນເມືອງ ແລະ ຕປດ ຄວນພິຈາລະນາຕາມ ອາຍຸ ແລະ ລະດັບຄວາມຮັບຮູ້ຂອງເດັກ. ນອກຈາກນັ້ນ, ຄວາມຕ້ອງການຂອງເດັກບໍ່ຄວນເປັນສິ່ງທີ່ເຮັດໃຫ້ເດັກມີອັນຕະລາຍ ຫຼື ເຮັດໃຫ້ເດັກຕົກຢູ່ໃນອັນຕະລາຍ. ຄວນພິຈາລະນາຫຼັກການ 'ສິດ ແລະ ຜົນປະໂຫຍດອັນສູງສຸດຂອງເດັກ'.

## 4. ການຈັດຕັ້ງປະຕິບັດແຜນກໍລະນີ

ອີງຕາມແຜນກໍລະນີ, ພະນັກງານແຮງງານ ແລະ ສະຫວັດດີການສັງຄົມຂັ້ນເມືອງ ແລະ ຕປດ ສາມາດເລີ່ມຕົ້ນການປະຕິບັດໃຫ້ການຊ່ວຍເຫຼືອເດັກ.

- **ຂັ້ນຕອນທີ 1:** ສ້າງຈຸດຕິດຕໍ່ພົວພັນທີ່ຊັດເຈນ. ເດັກຄວນຮູ້ບ່ອນທີ່ຈະໂທຫາ ແລະ ສາມາດອອກໄປຫາ ເມື່ອຕ້ອງການຄວາມຊ່ວຍເຫຼືອ.
- **ຂັ້ນຕອນທີ 2:** ອີງຕາມແບບຟອມການສົ່ງຕໍ່ເດັກ (ຟອມ 5) ແລະ ແຜນວາດການສົ່ງຕໍ່ (ໜ້າທີ 48), ໃຫ້ພົວພັນກັບພາກສ່ວນທີ່ກ່ຽວຂ້ອງ (ຍຸຕິທໍາ, ສາທາລະນະສຸກ, ສຶກສາທິການ ແລະ ກິລາ, ການປົກປ້ອງທາງສັງຄົມ ແລະ ອື່ນໆ) ເພື່ອສົ່ງຕໍ່ເດັກໄປຮັບການບໍລິການ.
- **ຂັ້ນຕອນທີ 3:** ຮັບປະກັນໃຫ້ມີການຊ່ວຍເຫຼືອເດັກ ແລະ ຄອບຄົວເດັກຢ່າງຕໍ່ເນື່ອງ. ຄວາມຖີ່ຂອງການຊ່ວຍເຫຼືອ ແລະ ການຕິດຕາມຄວນໄດ້ຮັບການພິຈາລະນາ ເປັນແຕ່ລະກໍລະນີ.
- **ຂັ້ນຕອນທີ 4:** ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມຂັ້ນເມືອງ ຂໍການສະໜັບສະໜູນຈາກພາກສ່ວນທີ່ກ່ຽວຂ້ອງ ເພື່ອອໍານວຍຄວາມສະດວກໃນການຄຸ້ມຄອງກໍລະນີ.

- **ຂັ້ນຕອນທີ 5:** ການຕິດຕາມປະເມີນຜົນ ແລະ ລາຍງານຜົນໄດ້ຮັບ.

ສະຖານທີ່ຕ່າງໆຂ້າງລຸ່ມນີ້ ສະແດງໃຫ້ເຫັນບາງຕົວຢ່າງທີ່ດີຂອງການບໍລິການສໍາລັບການສົ່ງຕໍ່ໃນ ສປປ ລາວ.

## ກ . ຕົວຢ່າງຂອງການບໍລິການສົ່ງຕໍ່: ສະຖານທີ່ໃຫ້ການຊ່ວຍເຫຼືອເດັກຂ້າງຖະໜົນ

**ສູນເພື່ອນມິດ**



ເດັກນັ່ງຫຼິ້ນຢູ່ສູນພັກເຊົາຊົ່ວຄາວຂອງອົງການເພື່ອນມິດ © ອົງການ ຢູນິເຊັບປະຈໍາ ສປປ ລາວ

ອົງການເພື່ອນມິດສາກົນ ໂດຍຮ່ວມມືກັບ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ( ກົມສັງຄົມສົງເຄາະ ) ດໍາເນີນໂຄງການບໍລິການແບບລວມສູນສໍາລັບເດັກ, ໄວໜຸ່ມ ແລະ ຜູ້ເບິ່ງແຍງດູແລເດັກທີ່ອາໄສຢູ່ ຂ້າງຖະໜົນ ແລະ ຢູ່ໃນຊຸມຊົນດ້ອຍໂອກາດໃນນະຄອນຫຼວງວຽງຈັນ ແລະ ແຂວງຫຼວງພະບາງ. ສໍາລັບເດັກ, ອົງການເພື່ອນມິດ ພະຍາຍາມສົ່ງເດັກຄືນໄປເຂົ້າໂຮງຮຽນ ແລະ ໃຫ້ເດັກໄດ້ດໍາລົງຊີວິດຢູ່ໃນສະພາບແວດລ້ອມຄອບຄົວທີ່ມີການເອົາໃຈໃສ່ດູແລເດັກ. ສໍາລັບເດັກ ແລະ ໄວໜຸ່ມທີ່ມີອາຍຸຫຼາຍ ທີ່ແຍກອອກຈາກຄອບຄົວ ອົງການເພື່ອນມິດໄດ້ໃຫ້ທີ່ພັກອາໃສໄລຍະສັ້ນຢູ່ໃນເຮືອນພັກຊົ່ວຄາວ, ຄຽງຄູ່ກັນນັ້ນ ອົງການເພື່ອນມິດກໍເຮັດວຽກເພື່ອພະຍາຍາມສົ່ງເດັກກັບຄືນໄປຢູ່ນໍາຄອບຄົວຂອງເຂົາເຈົ້າ. ມີການຝຶກວິຊາຊີບ ແລະ ຊອກວຽກເຮັດງານທໍາທີ່ໝັ້ນຄົງໃຫ້ແກ່ໄວໜຸ່ມ. ໂຄງການຍັງເຮັດວຽກກັບຜູ້ເບິ່ງແຍງດູແລເດັກ ເພື່ອສ້າງຄວາມສາມາດໃນການສ້າງລາຍຮັບຂອງເຂົາເຈົ້າ.

- www.friends-international.org/in-laos
- www.unicef.org/laos/stories/care-and-protection-violence-time-covid-19
- www.unicef.org/laos/stories/story-souk

## ຂ. ຕົວຢ່າງຂອງການບໍລິການສົ່ງຕໍ່: ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ

**ສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ ແລະ ເດັກ**




ໂປສເຕີ້ກ່ຽວກັບການລາຍງານສາຍດ່ວນ   ສຍລ ແລະ ອົງການ ຢູນິເຊັບ ປະຈຳ ສປປ ລາວ/2021

ສູນກາງສະຫະພັນແມ່ຍິງລາວ (ສຍລ) ມີຄວາມຮັບຜິດຊອບໃຫ້ການຊ່ວຍເຫຼືອຜູ້ເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ ແລະ ການຄ້າມະນຸດ ຜ່ານການລາຍງານສາຍດ່ວນ ແລະ ການໃຫ້ຄຳປຶກສາ (ເບີໂທ: 1362) ແລະ ຜ່ານສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ - ເດັກນ້ອຍ ທີ່ຕັ້ງຢູ່ນະຄອນຫຼວງວຽງຈັນ. ພະນັກງານຂອງ ສຍລ ໃຫ້ການຊ່ວຍເຫລືອທາງດ້ານກົດໝາຍໂດຍບໍ່ເສຍຄ່າໃຊ້ຈ່າຍໃດໆ ແກ່ຜູ້ເຄາະຮ້າຍຈາກຄວາມຮຸນແຮງ ແລະ ຟື້ນຟູຜູ້ລອດຊີວິດເພື່ອສົ່ງເຂົາເຈົ້າກັບຄືນສູ່ສັງຄົມ. ຜູ້ໃຫ້ຄຳປຶກສາ ແລະ ພະນັກງານຂອງ ສຍລ ເຮັດວຽກຢ່າງໃກ້ຊິດກັບທຸກຂະແໜງການເພື່ອການສົ່ງຕໍ່ຢ່າງທັນເວລາ ແລະ ຢ່າງມີຄຸນນະພາບ. ສະຫະພັນແມ່ຍິງຢູ່ໃນທ້ອງຖິ່ນ ຍັງເປັນສະມາຊິກຂອງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ, ຄະນະກຳມະການພັດທະນາບ້ານ ແລະ ຕາໜ່າງປົກປ້ອງເດັກຂັ້ນບ້ານ.

www.unicef.org/laos/stories/LWU-Helpline

ຄ. ຕົວຢ່າງການບໍລິການສຳລັບການສົ່ງຕໍ່: ການຊ່ວຍເຫຼືອດ້ານສຸຂະພາບຈິດສຳລັບໄວໜຸ່ມ

**ສາຍດ່ວນລາຍງານຂອງສູນກາງຊາວໜຸ່ມ (1554)**

ສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ (ສຊປລ) ຮັບຜິດຊອບສ້າງຄວາມເຂັ້ມແຂງໃຫ້ໄວໜຸ່ມ ເຊິ່ງເປັນຕົວແທນຂອງການປ່ຽນແປງ ເພື່ອໃຫ້ຄຳແນະນຳກ່ຽວກັບບັນຫາປົກປ້ອງເດັກ ເຊັ່ນ: ການແຕ່ງດອງເດັກ ແລະ ການຖືພາຂອງໄວໜຸ່ມ ແລະ ມີສາຍດ່ວນລາຍງານໃຫ້ຄຳປຶກສາດ້ານສຸຂະພາບຈິດ ແລະ ຈິດຕະສັງຄົມຕະຫຼອດ 24 ຊົ່ວໂມງທຸກໆມື້ (ໂທ 1554) ສຳລັບໄວໜຸ່ມ ແລະ ຊາວຫນຸ່ມ. ຜ່ານການລາຍງານສາຍດ່ວນ, ຜູ້ໃຫ້ຄຳປຶກສາຂອງ ສຊລ ສາມາດລະບຸກໍລະນີ ແລະ ເຮັດການສົ່ງຕໍ່ໄປຫາພາກສ່ວນທີ່ເໝາະສົມ.

LYU Facebook: www.facebook.com/LaoYouthUnion

- www.unicef.org/laos/reports/manual-youth-and-adolescents-counselling

ງ. ຕົວຢ່າງການບໍລິການສຳລັບການສົ່ງຕໍ່: ການປົກປ້ອງທາງສັງຄົມ

**ໂຄງການໃຫ້ການອຸດໜູນແມ່ຍິງຖືພາ ແລະ ເດັກກ່ອນໄວຮຽນ ໂດຍ ກຊ ຮສສ**

**ໂຄງການໃຫ້ການອຸດໜູນແມ່ຍິງຖືພາ ແລະ ເດັກກ່ອນໄວຮຽນ** ຈັດຕັ້ງປະຕິບັດໂດຍກະຊວງແຮງງານ ແລະ ສະຫວັດດີການສັງຄົມ (ກຊ ຮສສ) ເຊິ່ງເປັນສ່ວນໜຶ່ງຂອງການລິເລີ່ມຮ່ວມກັນລະຫວ່າງອົງການ ຢູນິເຊັບ, ອົງການແຮງງານສາກົນ ແລະ ອົງການ UNCDF ແນໃສ່ປັບປຸງການເຂົ້າເຖິງການບໍລິການດ້ານສຸຂະພາບ ແລະ ການປົກປ້ອງເດັກໃນ ສປປ ລາວ ສຳລັບແມ່ຍິງຖືພາ ແລະ ເດັກນ້ອຍ. ມີຜູ້ໄດ້ຮັບຜົນປະໂຫຍດທັງໝົດ 2.596 ຄົນຈາກ 46 ບ້ານຂອງເມືອງສະໝາມໄຊ, 20 ບ້ານຂອງເມືອງພູວົງ ແຂວງ ອັດຕະປື ແລະ 70 ບ້ານ ຂອງ ເມືອງນອງ ແຂວງ ສະຫວັນນະເຂດ ທີ່ໄດ້ລົງທະບຽນ ພາຍໃຕ້ໂຄງການນີ້, ເຊິ່ງເປັນການມອບເງິນສົດໃຫ້ແກ່ແມ່ຍິງຖືພາ ແລະ ເດັກກ່ອນໄວຮຽນ ເພື່ອແນໃສ່ປັບປຸງການສັກຢາວັກແຊັງ ແລະ ເຂົ້າເຖິງການຝາກທ້ອງ ແລະ ການກວດສຸຂະພາບຫຼັງເກີດ ລວມທັງການບໍລິການປົກປ້ອງເດັກ.

www.unicef.org/laos/press-eleases/mother-and-early-childhood-grant-first-cash-transfer-beneficiaries-under-initiative

**ຈ. ຕົວຢ່າງການບໍລິການສໍາລັບການສົ່ງຕໍ່: ການສຶກສາອົບຮົມການເປັນພໍ່ແມ່ທີ່ດີ ແລະ ການສ້າງຄວາມເຂັ້ມແຂງທາງດ້ານເສດຖະກິດ**

**ການທ້ອນເງິນເພື່ອການປ່ຽນແປງ ຂອງສະຫະພັນແມ່ຍິງ**



ການສຶກສາອົບຮົມການເປັນພໍ່ແມ່ທີ່ດີ ຢູ່ແຂວງອັດຕະປື    ອົງການ ຢູນິເຊັບປະຈໍາ ສປປ ລາວ/2020

ໂດຍໄດ້ຮັບການສະໜັບສະໜູນຈາກອົງການຮ່ວມມືສາກົນຂອງສາທາລະນະລັດເກົາຫຼີ (KOICA) ແລະ ອົງການ ຢູນິເຊັບ, ສະຫະພັນແມ່ຍິງລາວ ໄດ້ຈັດຕັ້ງປະຕິບັດໂຄງການສຶກສາອົບຮົມການເປັນພໍ່ແມ່ທີ່ດີ ແລະ ການທ້ອນເງິນເພື່ອການປ່ຽນແປງ ຢູ່ແຂວງ ອັດຕະປື ຕັ້ງແຕ່ປີ 2020 ເປັນຕົ້ນມາ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຄອບຄົວທີ່ຖືກຍົກຍ້າຍມາຢູ່ສູນພັກເຊົາຜູ້ປະສົບໄພພິບັດ ທີ່ເມືອງສະໜາມໄຊ ເພື່ອປ້ອງກັນການໃຊ້ຄວາມຮຸນແຮງໃນຄອບຄົວ ແລະ ພຶດຕິກໍາທີ່ເປັນອັນຕະລາຍຕໍ່ແມ່ຍິງ ແລະ ເດັກນ້ອຍ. ໂຄງການນີ້ ໄດ້ມີການສຶກສາອົບຮົມໃຫ້ພໍ່ແມ່ກ່ຽວກັບການປະຕິບັດວິໄນເດັກແບບສ້າງສັນ, ຄວາມສະເໝີພາບລະຫວ່າງຍິງຊາຍ, ການດູແລເດັກ, ການປົກປ້ອງເດັກພິການ ແລະ ສະໜັບສະໜູນການທ້ອນເງິນ ແລະ ການຝຶກອົບຮົມເພື່ອສ້າງຄວາມສາມາດປັບຕົວດ້ານເສດຖະກິດໃນຂັ້ນຄອບຄົວ. ໃນປີ 2021, ມີພໍ່ແມ່ ແລະ ຜູ້ເບິ່ງແຍງດູແລເດັກຈໍານວນ 190 ຄົນ (ຍິງ 164 ຄົນ ແລະ ຊາຍ 26 ຄົນ) ໄດ້ເຂົ້າຮ່ວມກິດຈະກໍາການທ້ອນເງິນເພື່ອການປ່ຽນແປງ.

ສປປ ລາວ - ໃຫ້ການສະໜັບສະໜູນການລ້ຽງດູເດັກອ່ອນໂດຍຜ່ານຂໍ້ລິເລີ່ມ  ແຜນງານຮັກລູກໃຫ້ໃສ່ໃຈ :
www.unicef.org/eap/reports/ending-violence-against-children-east-asia-and-pacific

### ສ. ຕົວຢ່າງການບໍລິການສຳລັບການສົ່ງຕໍ່: ການສຶກສາຮຽນຮ່ວມ

**ສະມາຄົມເພື່ອຄົນອໍທິສຕິກ, ສປປ ລາວ**

**ສະມາຄົມເພື່ອຄົນອໍທິສຕິກ** ແມ່ນສະມາຄົມທີ່ບໍ່ຫວັງຜົນກຳໄລ ໄດ້ຖືກຕັ້ງຂຶ້ນແຕ່ປີ 2005 ເປັນຕົວແທນສິດຜົນປະໂຫຍດຂອງຄົນອໍທິສຕິກ ໃນ ສປປ ລາວ ໂດຍການສົ່ງເສີມສິດທິ, ປັບປຸງການເຂົ້າເຖິງການບໍລິການ ແລະ ສະໜອງການສຶກສາໃຫ້ແກ່ເດັກ ແລະ ຄອບຄົວ. ການປິ່ນປົວ ແລະ ຟື້ນຟູ ເພື່ອໃຫ້ເຂົາເຈົ້າສາມາດດຳລົງຊີວິດຢ່າງເຕັມສ່ວນ ແລະ ມີຊີວິດທີ່ດີຂຶ້ນ.

- http://www.laoautism.org/index.html

### ຊ. ຕົວຢ່າງການບໍລິການສຳລັບການສົ່ງຕໍ່: ທາງເລືອກໃນການເບິ່ງແຍງລ້ຽງດູເດັກ

**ບ້ານຊ່ວຍເຫຼືອເດັກນ້ອຍ ເອັສໂອເອັສ ລາວ**

ເດັກທີ່ບໍ່ມີພໍ່ແມ່ເບິ່ງແຍງລ້ຽງດູ ສາມາດໄປຢູ່ບ້ານຊ່ວຍເຫຼືອເດັກນ້ອຍ ເອັສໂອເອັສ ລາວ 06 ແຫ່ງໃນ ສປປ ລາວ. ເດັກຈະໄດ້ດຳລົງຊີວິດຢູ່ຮ່ວມກັບອ້າຍເອື້ອຍນ້ອງຂອງຕົນ ໃນສະພາບແວດລ້ອມທີ່ມີການດູແລ, ມີຄວາມເຄົາລົບ ແລະ ມີຄວາມປອດໄພ. ເມື່ອເດັກເຕີບໃຫຍ່ເປັນໄວໜຸ່ມ, ເຂົາເຈົ້າສາມາດເຂົ້າສູ່ໂຄງການໄວໜຸ່ມຂອງບ້ານເດັກ ເອັສໂອເອັສ. ຜູ້ຊ່ຽວຊານທີ່ມີຄຸນນະວຸດທິຈະໃຫ້ການສະຫນັບສະໜູນເດັກ ເພື່ອໃຫ້ເຂົາເຈົ້າສາມາດຜ່ານເຂົ້າສູ່ການດຳລົງຊີວິດໃໝ່ຂອງເຂົາເຈົ້າ, ເດັກຈະໄດ້ເລີ່ມຕົ້ນການຝຶກອົບຮົມວິຊາຊີບ, ເຂົ້າຮຽນ ວິຊາຊີບ ແລະ ເລີ່ມຊອກວຽກເຮັດງານທຳ. ໄວໜຸ່ມຈະໄດ້ຮັບການຊຸກຍູ້ໃຫ້ຄົ້ນຄິດກ່ຽວກັບອະນາຄົດຂອງເຂົາເຈົ້າ, ຮຽນຮູ້ທີ່ຈະຮັບຜິດຊອບ ແລະ ຕັດສິນໃຈດ້ວຍຕົນເອງ.

https://www.sos-childrensvillages.org/where-we-help/asia/laos/vientiane

### ຍ. ຕົວຢ່າງການບໍລິການສຳລັບການສົ່ງຕໍ່: ເຈົ້າໜ້າທີ່ຕຳຫຼວດ

**ສາຍດ່ວນແຈ້ງເຫດກ່ຽວກັບການຄ້າມະນຸດ 1300**

ເບີໂທສາຍດ່ວນ 1300 ແລະ ເບີວອດແອັບ 020 22881300 ແມ່ນເບີສາຍດ່ວນທີ່ດຳເນີນການໂດຍກະຊວງປ້ອງກັນຄວາມສະຫງົບ (ກົມຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ). ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ຜູ້ທີ່ເປັນພະຍານ ຫຼື ສົງໃສວ່າມີການຄ້າມະນຸດ ສາມາດໂທຫາສາຍດ່ວນນີ້ໄດ້. ພະນັກງານສາຍດ່ວນຈະໃຫ້ບໍລິການໂດຍການລາຍງານກໍລະນີທັນທີໃຫ້ເຈົ້າໜ້າທີ່ທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ ເພື່ອກອບກູ້,ໃຫ້ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ດຳເນີນຄະດີກັບຜູ້ກະທຳຜິດຕາມກົດໝາຍ.

ດ. ຕົວຢ່າງການບໍລິການສໍາລັບການສົ່ງຕໍ່: ການຊ່ວຍເຫຼືອທາງດ້ານກົດໝາຍ

**ການຊ່ວຍເຫຼືອທາງດ້ານກົດໝາຍ**

ພາຍໃຕ້ດໍາລັດວ່າດ້ວຍການຊ່ວຍເຫຼືອທາງດ້ານກົດໝາຍ (ສະບັບເລກທີ 77/ລບ, ລົງວັນທີ 28 ກຸມພາ 2018), ການຊ່ວຍເຫຼືອທາງກົດໝາຍແມ່ນການບໍລິການທາງດ້ານກົດໝາຍໂດຍບໍ່ເສຍຄ່າໃຫ້ແກ່ຜູ້ທຸກຍາກ, ຜູ້ດ້ອຍໂອກາດ, ເດັກນ້ອຍທີ່ຕ້ອງການຈຸປົກປ້ອງພິເສດ ແລະ ຜູ້ກະທໍາຜິດທີ່ຕ້ອງການການຊ່ວຍເຫຼືອທາງດ້ານກົດໝາຍຕາມທີ່ກົດໝາຍກໍານົດໄວ້. ຄົນພິການ, ແມ່ຍິງ ແລະ ເດັກຜູ້ເຄາະຮ້າຍຈາກຄວາມຮຸນແຮງ ແລະ ຜູ້ເຄາະຮ້າຍຈາກການຄ້າມະນຸດ ສາມາດຂໍການຊ່ວຍເຫຼືອທາງດ້ານກົດໝາຍໄດ້. ກະຊວງຍຸຕິທໍາໄດ້ສ້າງຊ່ອງທາງການຊ່ວຍເຫຼືອທາງດ້ານກົດໝາຍດ້ວຍລະບົບດິຈິຕອນ ເຊິ່ງປະຊາຊົນສາມາດເຂົ້າເຖິງການບໍລິການຊ່ວຍເຫຼືອດ້ານກົດໝາຍໄດ້ໂດຍບໍ່ເສຍຄ່າ ບໍ່ວ່າເຂົາເຈົ້າຈະຢູ່ໃສກໍ່ຕາມ: https://legal-aid.moj.gov.la. ນອກຈາກນີ້ ກໍຍັງມີໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ.

## 5. ການຕິດຕາມກໍລະນີ

ພະນັກງານຫ້ອງການແຮງງານ ແລະ ສະຫວັດດີການສັງຄົມຂັ້ນເມືອງ ແລະ ຕປດ ຕິດຕາມ, ກວດກາ, ປະເມີນການຈັດຕັ້ງປະຕິບັດກໍລະນີຢ່າງເປັນປົກກະຕິ ຕາມຂັ້ນຕອນດັ່ງລຸ່ມນີ້:

- **ຂັ້ນຕອນທີ 1**: ໃນໄລຍະທໍາອິດ ໃຫ້ໄປຢ້ຽມຢາມເດັກຢ່າງໜ້ອຍເດືອນລະຄັ້ງ ຈາກນັ້ນທຸກໆ 3 ເດືອນໄປເທື່ອໜຶ່ງ (ອີງຕາມແຕ່ລະກໍລະນີ) ເພື່ອຕິດຕາມສະພາບຄອບຄົວ, ການເປັນຢູ່ຂອງເດັກ, ປະຊຸມຮ່ວມກັບພາກສ່ວນທີ່ກ່ຽວຂ້ອງຊຶ່ງອາດໃຫ້ ເດັກ ແລະ ຄອບຄົວເຂົ້າຮ່ວມນໍາ. ສໍາລັບຂໍ້ມູນເພີ່ມເຕີມ ໃຫ້ເບິ່ງຄໍາແນະນໍາສໍາລັບການໄປຢ້ຽມຢາມເດັກ (ໜ້າທີ 72).
- **ຂັ້ນຕອນທີ 2**: ການຢ້ຽມຢາມເດັກ ແລະ ການປະເມີນແຕ່ລະຄັ້ງ ຄວນໄດ້ຮັບການບັນທຶກໄວ້ຢ່າງດີເພື່ອຕິດຕາມຄວາມຄືບໜ້າ ໂດຍນໍາໃຊ້ແບບຟອມການທົບທວນກໍລະນີ (ຟອມ 7).
- **ຂັ້ນຕອນທີ 3**: ແລກປ່ຽນຄວາມຄິດເຫັນໃນການປະຕິບັດແຜນກໍລະນີ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ສິ່ງທ້າທາຍ ແລະ ສິ່ງທີ່ຕ້ອງປັບປຸງໃນຕໍ່ໜ້າ. ຖ້າຫາກຈໍາເປັນ, ກໍສາມາດປັບແຜນກໍລະນີໄດ້ ແລະ ຄວນມີການບັນທຶກຢ່າງຊັດເຈນກ່ຽວກັບການປັບກິດຈະກໍາທີ່ໄດ້ວາງໄວ້ໃນແຜນເບື້ອງຕົ້ນ.
- **ຂັ້ນຕອນທີ 4**: ກອງປະຊຸມປະເມີນກໍລະນີສາມາດຈັດຂຶ້ນທຸກໆຫົກເດືອນ.
- **ຂັ້ນຕອນທີ 5**: ເມື່ອມີຫຼາຍຂະແໜງການເຂົ້າຮ່ວມໃນການຄຸ້ມຄອງກໍລະນີ, ພະນັກງານແຮງງານ ແລະ ສະຫວັດດີການສັງຄົມຂັ້ນເມືອງ/ແຂວງ ສາມາດຈັດກອງປະຊຸມກໍລະນີ ຫຼື ກອງປະຊຸມປະສານງານ ເພື່ອແລກປ່ຽນຂໍ້ມູນໃຫ້ທັນກັບສະພາບການ ແລະ ປະສານງານໃນການຈັດຕັ້ງປະຕິບັດແຜນກໍລະນີ. ກະລຸນາເບິ່ງແບບຟອມກອງປະຊຸມກໍລະນີ (ຟອມ 6).

## 6. ການປິດກໍລະນີ

ອີງຕາມການສະເໜີຂອງ ຕປດ ແລະ ການເຫັນດີຈາກເດັກ, ຄອບຄົວ ແລະ ພາກສ່ວນທີ່ກ່ຽວຂ້ອງ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມຂັ້ນເມືອງ ພິຈາລະນາວ່າໄດ້ບັນລຸເປົ້າໝາຍຂອງແຜນກໍລະນີແລ້ວ ເຊັ່ນ ສະພາບແວດລ້ອມໃນການດໍາລົງຊີວິດຂອງເດັກມີຄວາມປອດໄພ ແລະ ເດັກໄດ້ຮັບການດູແລທີ່ດີ ກໍສາມາດປິດກໍລະນີໄດ້ ແລະ ຕື່ມຂໍ້ມູນໃສ່ແບບຟອມປິດກໍລະນີ (ຟອມ 8) ສົ່ງໃຫ້ພະແນກແຮງງານ ແລະ ສະຫວັດດີການສັງຄົມຂັ້ນແຂວງ.

- **ຂັ້ນຕອນທີ 1**: ຖ້າທຸກຢ່າງມີຄວາມກຽມພ້ອມ, ຕປດ ຕ້ອງປຶກສາຫາລືກັບເດັກ, ຄອບຄົວ ແລະ ພາກສ່ວນທີ່ກ່ຽວຂ້ອງກ່ຽວກັບການປິດກໍລະນີ.
- **ຂັ້ນຕອນທີ 2**: ໃຫ້ພິຈາລະນາວ່າໄດ້ບັນລຸເປົ້າຫມາຍຂອງແຜນກໍລະນີແລ້ວ ຫຼື ຍັງ.
- **ຂັ້ນຕອນທີ 3**: ຖ້າໄດ້ບັນລຸເປົ້າຫມາຍຂອງແຜນກໍລະນີແລ້ວ, ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ

ປະກອບຂໍ້ມູນໃສ່ແບບຟອມປິດກໍລະນີ (ຟອມ 8) ສົ່ງໃຫ້ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ. ສຳນວນເອກະສານຂອງກໍລະນີ ຕ້ອງຮັກສາໄວ້ໃນບ່ອນທີ່ປອດໄພ ແລະ ເປັນຄວາມລັບ.

- **ຂັ້ນຕອນທີ 4:** ຊ່ວຍເຫຼືອເດັກ ແລະ ຄອບຄົວເພື່ອກຽມພ້ອມສຳລັບການປິດກໍລະນີ.

# ພາກທີ III

## ເຄື່ອງມືສໍາລັບການຄຸ້ມຄອງກໍລະນີ

ເຄື່ອງມືທີ່ເປັນມາດຕະຖານສໍາລັບການຄຸ້ມຄອງກໍລະນີມີດັ່ງນີ້:

1. ແບບຟອມການລົງທະບຽນກໍລະນີ
2. ແບບຟອມການປະເມີນເດັກ
3. ແບບຟອມການປະເມີນຄອບຄົວ
4. ແບບຟອມການວາງແຜນກໍລະນີ
5. ແບບຟອມການສົ່ງຕໍ່
6. ແຜນວາດການສົ່ງຕໍ່
7. ເຄື່ອງມືການວາງແຜນການບໍລິການ
8. ແບບຟອມກອງປະຊຸມກໍລະນີ
9. ແບບຟອມທົບທວນກໍລະນີ
10. ແບບຟອມການປິດກໍລະນີ
11. ຄໍາແນະນໍາສໍາລັບການໄປຢ້ຽມຢາມເດັກ
12. ສິ່ງທີ່ຄວນເຮັດ ແລະ ສິ່ງທີ່ບໍ່ຄວນເຮັດ
13. ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງ ຕປດ
14. ຫຼັກຈັນຍາບັນ
15. ແບບຟອມການເກັບຮັກສາບົດສະຫຼຸບຂອງຕປດ
16. ແບບຟອມເກັບກໍາຂໍ້ມູນ ແລະ ການລາຍງານຂອງຂັ້ນເມືອງ ແລະ ແຂວງ

## 1. ແບບຟອມການລົງທະບຽນກໍລະນີ

ຟອມ 1

### ແບບຟອມລົງທະບຽນກໍລະນີ

ໝາຍເຫດ: ໃຫ້ຮັກສາບົດລາຍງານທີ່ເປັນລາຍລັກອັກສອນ ແລະ ຂໍ້ມູນອື່ນໆໄວ້ເປັນຄວາມລັບ.
ສາມາດແລກປ່ຽນຂໍ້ມູນກັບບຸກຄົນທີ່ກ່ຽວຂ້ອງໂດຍກົງໃນກໍລະນີເທົ່ານັ້ນ.

| ຂໍ້ມູນຂອງຜູ້ຮັບຜິດຊອບການຄຸ້ມຄອງກໍລະນີ | | | ເລກທີກໍລະນີ | ................................. |
|---|---|---|---|---|
| ວັນ ແລະ ເວລາ | | | ລາຍເຊັນ | |
| ຊື່ ແລະ ນາມສະກຸນ | | | | |
| ທີ່ຢູ່ຂອງຫ້ອງການ | | | | |
| ເບີໂທລະສັບ | | | | |
| ໄດ້ຮັບການລາຍງານຈາກ | | | | |
| ໄດ້ຮັບການລາຍງານຜ່ານທາງ | ໂທລະສັບ ☐ | ມີຜູ້ມາລາຍງານ ☐ | ສາຍດ່ວນ ☐ | ອື່ນໆ ☐: |
| ຂໍ້ມູນກ່ຽວກັບເດັກ ແລະ ຄອບຄົວ | | | | |
| ຊື່ ແລະ ນາມສະກຸນຂອງເດັກ | | | | |
| ວັນ ເດືອນ ປີ ເກີດ:<br>ອາຍຸ: | | | ເພດ: ຊາຍ ☐ ຍິງ ☐ | |
| ທີ່ຢູ່ເດັກ: | | | ຂໍ້ມູນຕິດຕໍ່ພົວພັນກັບເດັກ: | |
| ຊື່ແມ່: | | | ທີ່ຢູ່ແມ່: | |
| ອາຊີບແມ່: | | | ຂໍ້ມູນຕິດຕໍ່ພົວພັນກັບແມ່: | |
| ຊື່ພໍ່: | | | ທີ່ຢູ່ພໍ່: | |
| ອາຊີບພໍ່: | | | ຂໍ້ມູນຕິດຕໍ່ພົວພັນກັບພໍ່: | |
| ຖ້າເດັກອາໄສຢູ່ກັບຄອບຄົວອື່ນ ຫຼື ໄດ້ຮັບການເບິ່ງແຍງຈາກຜູ້ເບິ່ງແຍງດູແລ ທີ່ບໍ່ແມ່ນພໍ່ແມ່ຄີງ, ກະລຸນາຕື່ມຂໍ້ມູນລຸ່ມນີ້: | | | | |
| ຄວາມສ່ຽງດ້ານການປົກປ້ອງ: ເດັກໄດ້ປະເຊີນບັນຫາ ຫຼື ມີຄວາມສ່ຽງທີ່ຈະມີບັນຫາລຸ່ມນີ້ບໍ່? ໃຫ້ໝາຍ ໃສ່ບັນຫາລຸ່ມນີ້: (ໝາຍເຫດ: ເດັກໜຶ່ງຄົນອາດຈະມີໜຶ່ງ ຫຼື ຫຼາຍປັນຫາ) | | | | |

| | | | |
|---|---|---|---|
| ຄວາມຮຸນແຮງທາງດ້ານ<br>ຮ່າງກາຍ ☐<br>ຈິດໃຈ ☐ | ການປ່ອຍປະລະເລີຍ ☐ | ການປະຖິ້ມ ☐ | ການຄ້າມະນຸດ ☐ |
| ກຳພອຍ ☐ | ກຳພ້າ ☐ | ການລະເມີດທາງເພດ ☐ | ແຮງງານເດັກ ☐ |
| ເດັກຂ້າງຖະໜົນ ☐ | ບັນຫາສຸຂະພາບ<br>ພິການ ☐ | ທີ່ຮ້າຍແຮງ ☐ | ເອັສໄອວີ/ເອດ ☐ |
| ເດັກບໍ່ໄດ້ເຂົ້າໂຮງຮຽນ ☐ | ເດັກແຕ່ງດອງກ່ອນ<br>ອາຍຸ 18 ປີ ☐<br>ເດັກຖືພາກ່ອນ<br>ອາຍຸ 18 ປີ ☐ | ເດັກກະທຳຜິດ ☐ | ອື່ນໆ ☐ |

**ຂໍ້ສະເໜີ:**

1. **ກໍລະນີນີ້ຕ້ອງມີການເອົາຂໍ້ມູນຕື່ມອີກບໍ່?** ຕ້ອງການ ☐ ບໍ່ຕ້ອງການ ☐
2. **ກໍລະນີຈຳເປັນຕ້ອງໄດ້ຖືກສົ່ງໄປຫາການບໍລິການອື່ນໆບໍ່? ຖ້າຈຳເປັນ, ສົ່ງໄປຫາພາກສ່ວນໃດ:**

______________________________

3. **ອະທິບາຍຂັ້ນຕອນຕໍ່ໄປ:**

## 2. ແບບຟອມການປະເມີນເດັກ

ຟອມ 2

**ແບບຟອມການປະເມີນເດັກ**

ໝາຍເຫດ: ຮັກສາບົດລາຍງານທີ່ເປັນລາຍລັກອັກສອນ ແລະ ຂໍ້ມູນອື່ນໆໄວ້ເປັນຄວາມລັບ.
ສາມາດແລກປ່ຽນຂໍ້ມູນກັບບຸກຄົນທີ່ກ່ຽວຂ້ອງໂດຍກົງໃນກໍລະນີເທົ່ານັ້ນ.

| | | | |
|---|---|---|---|
| **ຂໍ້ມູນຂອງຜູ້ຮັບຜິດຊອບການຄຸ້ມຄອງກໍລະນີ** | | **ເລກທີກໍລະນີ** | ................................ |
| **ວັນທີເລີ່ມຕົ້ນການປະເມີນ** | | **ວັນທີສິ້ນສຸດການປະເມີນ** | |
| **ຊື່ ແລະ ນາມສະກຸນ** | | | |
| **ທີ່ຢູ່ຂອງຫ້ອງການ** | | | |
| **ເບີໂທລະສັບ** | | **ລາຍເຊັນ** | |
| **ການປະເມີນການພັດທະນາຂອງເດັກ ແລະ ສະຖານະການຄອບຄົວເດັກ** | | | |
| **1. ດ້ານສຸຂະພາບ:** ການຕື່ມຂໍ້ມູນໃສ່ໃນພາກນີ້ ສາມາດເຮັດໂດຍການປຶກສາຫາລືກັບພໍ່ແມ່ ແລະ ອາສາສະໝັກສາທາລະນະສຸກບ້ານ, ອີງໃສ່ເອກະສານທີ່ມີ ແລະ ອີງໃສ່ການສັງເກດຕົວຈິງ. | | | |
| **ການສັກຢາກັນພະຍາດ** | ໄດ້ສັກ ☐ | ບໍ່ໄດ້ສັກ ☐ | ລາຍລະອຽດ: |
| **ປະກັນສຸຂະພາບ** | ມີ ☐ | ບໍ່ມີ ☐ | ລາຍລະອຽດ: |
| **ຄວາມພິການ** | ມີ ☐ | ບໍ່ມີ ☐ | ລາຍລະອຽດ: |
| **ເດັກໄດ້ກິນອາຫານຈັກຄາບຕໍ່ມື້? ເດັກຄິດວ່າລາວໄດ້ກິນອາຫານໃນປະລິມານທີ່ພຽງພໍບໍ່?** | ຈຳນວນຄາບອາຫານ ( ) | ລາຍລະອຽດ: | |
| **ເດັກມີພະຍາດບໍ່?** | ມີ ☐ | ບໍ່ມີ ☐ | ລາຍລະອຽດ: |
| **ຖ້າມີພະຍາດ, ເດັກໄດ້ຮັບການປິ່ນປົວເປັນປົກກະຕິບໍ?** | ໄດ້ຮັບ ☐ | ບໍ່ໄດ້ຮັບ ☐ | ລາຍລະອຽດ: |
| **ໃຫ້ຂຽນຂໍ້ມູນອື່ນໆທີ່ກ່ຽວຂ້ອງກັບສຸຂະພາບ** | | | |
| **2. ການສຶກສາ:** ການຕື່ມຂໍ້ມູນໃສ່ໃນພາກນີ້ ໂດຍການສອບຖາມກັບພໍ່ແມ່, ຄູສອນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ, ອີງໃສ່ເອກະສານທີ່ມີ ແລະ ອີງໃສ່ການສັງເກດຕົວຈິງ. | | | |
| **ຮຽນຈົບຊັ້ນໃດ** | | | |

| | | | |
|---|---|---|---|
| ເດັກໄດ້ໄປໂຮງຮຽນເປັນປົກກະຕິບໍ່? | ປົກກະຕິ ☐ | ບໍ່ປົກກະຕິ ☐ | **ຊື່ໂຮງຮຽນ:** |
| ທີ່ຢູ່ຂອງໂຮງຮຽນ | | | **ຂໍ້ມູນຕິດຕໍ່ພົວພັນໂຮງຮຽນ:** |
| ຖ້າເດັກບໍ່ໄປໂຮງຮຽນເປັນປົກກະຕິ, ຍ້ອນຫຍັງ? | | | |
| **3. ຊີວິດການເປັນຢູ່ໃນຄົວເຮືອນ:** ການຕື່ມຂໍ້ມູນໃສ່ໃນພາກນີ້ ສາມາດເຮັດໂດຍການສອບຖາມກັບພໍ່ແມ່, ຜູ້ເບິ່ງແຍງດູແລເດັກ, ສະມາຊິກໃນຄອບຄົວ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ. | | | |
| ອະທິບາຍສະພາບທົ່ວໄປຂອງຄົວເຮືອນ | | | |
| ຄົວເຮືອນມີນ້ຳສະອາດພຽງພໍບໍ? | ພຽງພໍ ☐ | ບໍ່ພຽງພໍ ☐ | ລາຍລະອຽດ: |
| ຄົວເຮືອນມີວິດຖ່າຍບໍ? | ມີ ☐ ບໍ່ມີ ☐ | | |
| ສະມາຊິກໃນຄອບຄົວຢູ່ຮ່ວມກັນມີໃຜແດ່? | ແມ່ ☐ | ພໍ່ ☐ | ແມ່ເຖົ້າ ☐ ພໍ່ເຖົ້າ ☐ ອ້າຍ ເອື້ອຍ ນ້ອງ ☐ (ຈັກຄົນ: ) |
| | ອື່ນທີ່ເບິ່ງແຍງດູແລເດັກ: | ຕົວຢ່າງ ລຸງ, ປ້າ | ເດັກເປັນຫົວໜ້າຄົວເຮືອນ ☐ |
| ໃຫ້ເດັກເຮັດວຽກເຮືອນ ຫຼື ມີສ່ວນຮ່ວມໃນກິດຈະກຳສ້າງລາຍຮັບບໍ່? ການໃຫ້ເດັກເຮັດສິ່ງເຫຼົ່ານີ້ເໝາະສົມກັບອາຍຸ/ຄວາມສາມາດຂອງເດັກບໍ? | ເໝາະສົມ ☐ | ບໍ່ເໝາະສົມ ☐ | ລາຍລະອຽດ: |
| **4. ການປະເມີນພຶດຕິກຳເດັກ:** ການຕື່ມຂໍ້ມູນໃສ່ໃນພາກນີ້ ສາມາດເຮັດໂດຍການສອບຖາມກັບເດັກ, ພໍ່ແມ່ ແລະ ຜູ້ເບິ່ງແຍງດູແລເດັກ. | | | |
| ສະຖານະການທາງອາລົມໂດຍທົ່ວໄປຂອງເດັກເປັນແນວໃດ? | ຕົວຢ່າງ ມີຄວາມສຸກ/ເບີກບານ, ບໍ່ມີຄວາມສຸກ/ບໍ່ເບີກບານ, ໃຈຮ້າຍ, ຢ້ານກົວ ແລະ ອື່ນໆ. | | |
| ເດັກມີບັນຫາດ້ານພຶດຕິກຳບໍ? | ຕົວຢ່າງ ເດັກບໍ່ຟັງຄວາມ, ຢ້ຽວໃສ່ບ່ອນນອນ, ຂີ້ລັກ, ເວົ້າຕົວະ, ທຳຮ້າຍຕົນເອງ, ເສບຢາເສບຕິດ, ແລະ ອື່ນໆ. | | |
| ເດັກມີທັກສະທາງດ້ານສັງຄົມ ແລະ ເຂົ້າກັບເດັກອື່ນໄດ້ດີບໍ? | | | |
| **5. ຄຳແນະນຳໂດຍລວມ** | | | |
| ກໍລະນີນີ້ຈຳເປັນຕ້ອງມີການດຳເນີນການຮີບດ່ວນບໍ່? ກະລຸນາອະທິບາຍ: ........................................................................................................ | | | |

| | | | |
|---|---|---|---|
| **ກໍລະນີນີ້ຈຳເປັນຕ້ອງມີການດຳເນີນການ ໃນໄລຍະກາງ ແລະ ໄລຍະຍາວບໍ່? ກະລຸນາອະທິບາຍ:** ............................................................................................................ | | | |
| **ການສົ່ງຕໍ່ໄປຫາການບໍລິການອື່ນໆທີ່ຕ້ອງເຮັດ** | ຕຳຫຼວດ ☐ | ສຶກສາ ☐ | ສາທາ ☐ |
| ຣສສ ເມືອງ 0<br>ຣສສ ແຂວງ 0 | ສຍລ ☐ | ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ/ອົງການຈັດຕັ້ງທາງສັງຄົມ ☐ | ອື່ນໆ ☐ |
| **ຄວາມຕ້ອງການທີ່ຈຳເປັນຂອງເດັກ ມີຫຍັງແດ່?** ............................................................................................................ | | | |
| **ແນະນຳໃຫ້ນຳເດັກໄປຢູ່ໃສ** | ກັບໄປຫາແມ່ ☐ | ກັບໄປຫາພໍ່ ☐ | ກັບໄປຫາພໍ່ແມ່ ☐ |
| **ໄປຢູ່ນຳຍາດພີ່ນ້ອງ 0** | ສະຖານພັກຊົ່ວຄາວ ☐<br>(ຊື່ບ່ອນພັກ: ) | ຢູ່ໃນການດູແລອຸປະຖຳໂດຍຜູ້ອື່ນ ☐ | ອື່ນໆ ☐ |

## 3. ແບບຟອມການປະເມີນຄອບຄົວ

ຟອມ 3

**ແບບຟອມການປະເມີນຄອບຄົວ**

ໝາຍເຫດ: ຮັກສາບົດລາຍງານທີ່ເປັນລາຍລັກອັກສອນ ແລະ ຂໍ້ມູນອື່ນໆໄວ້ເປັນຄວາມລັບ.
ສາມາດແລກປ່ຽນຂໍ້ມູນກັບບຸກຄົນທີ່ກ່ຽວຂ້ອງໂດຍກົງໃນກໍລະນີເທົ່ານັ້ນ.

| ຂໍ້ມູນຂອງຜູ້ຮັບຜິດຊອບການຄຸ້ມຄອງກໍລະນີ | | ເລກທີກໍລະນີ. | ................................ |
|---|---|---|---|
| ຊື່ ແລະ ນາມສະກຸນ | | ວັນທີ | |
| ຕຳແໜ່ງ | | ຫ້ອງການ | |
| ທີ່ຢູ່ຂອງຫ້ອງການ | | | |
| ຂໍ້ມູນຕິດຕໍ່ພົວພັນ | | ລາຍເຊັນ | |

| ເດັກ, ພໍ່ແມ່, ຜູ້ເບິ່ງແຍງດູແລ ແລະ ບຸກຄົນອື່ນໆທີ່ສຳຄັນ | | | |
|---|---|---|---|
| ຊື່ຂອງເດັກ | | | |
| ວັນ ເດືອນ ປີ ເກີດ ເດັກ: | | ເພດ | ຊາຍ ☐ ຍິງ ☐ |
| ທີ່ຢູ່ | | | |
| ຂໍ້ມູນຕິດຕໍ່ພົວພັນກັບເດັກ: | | | |
| ຊື່ແມ່: | | | |
| ທີ່ຢູ່ແມ່: | | | |
| ຂໍ້ມູນຕິດຕໍ່ພົວພັນກັບແມ່: | | | |
| ຊື່ພໍ່: | | | |
| ທີ່ຢູ່ພໍ່: | | | |
| ຂໍ້ມູນຕິດຕໍ່ພົວພັນກັບພໍ່: | | | |

| | | | |
|---|---|---|---|
| **ລາຍລະອຽດຂອງສະມາຊິກ ຄົນອື່ນໆໃນຄົວເຮືອນ** | ຊື່ ແລະ ນາມສະກຸນ | ວັນ ເດືອນ ປີ ເກີດ | ສາຍສຳພັນກັບເດັກ |
| | | | |
| | | | |
| | | | |
| | | | |
| **ລາຍລະອຽດຂອງສະມາຊິກ ຄົນອື່ນໆໃນຄົວເຮືອນ** | ຊື່ ແລະ ນາມສະກຸນ | ສາຍສຳພັນກັບເດັກ | ທີ່ຢູ່ |
| | | | |
| | | | |
| | | | |

| ການປະເມີນຄອບຄົວ (ຄວນກັອບປີ້ ສຳມະໂນຄົວໄວ້ ຫຼື ແຕ້ມແຜນວາດຄອບຄົວ ກໍລະນີໄວ້) | |
|---|---|
| **1. ການປະເມີນສະຖານະພາບພື້ນຖານ** | |
| **ແມ່ນໃຜມີ ຄວາມຮັບຜິດຊອບໃນ ການດູແລເດັກ** | ພໍ່ແມ່ ☐<br>ຜູ້ປົກຄອງ ☐<br>ອື່ນໆ ☐ |
| **ຄວາມຕ້ອງການດ້ານການ ສື່ສານກັບຄອບຄົວ** | ເດັກ/ພໍ່ແມ່ເດັກເວົ້າພາສາໃດແດ່? ຕ້ອງການຜູ້ແປພາສາບໍ່? ເດັກໃຊ້ການສື່ສານໃນຮູບແບບອື່ນໆບໍ່ ເຊັ່ນ: ພາສາມືບໍ? |
| **ຂໍ້ມູນເພີ່ມເຕີມກ່ຽວກັບ ຊົນເຜົ່າ ຫຼື ວັດທະນະທຳ:** | ພິຈາລະນາບັນຫາຊົນເຜົ່າ ແລະ ວັດທະນະທຳ ເຊິ່ງຈຳເປັນຕ້ອງມີຄວາມເຂົ້າໃຈ. ຊຸມຊົນມີຄວາມເຂົ້າໃຈດີກ່ຽວກັບວັດທະນະທຳ ແລະ ມໍລະດົກທາງວັດທະນະທຳຂອງ ເດັກ ແລະ ຄອບຄົວບໍ່? ມີການຈຳແນກຕໍ່ເດັກ ຫຼື ຄອບຄົວບໍ່? |
| **ສະຖານະພາບທາງກົດ ໝາຍ** | ຄອບຄົວເດັກມີສັນຊາດຕາມກົດໝາຍບໍ່?<br>ມີ ☐ ບໍ່ມີ ☐ |
| **ການພິຈາລະນາອື່ນໆ** | ຕົວຢ່າງ: ເດັກໄດ້ຈົດທະບຽນການເກີດບໍ?<br>ໄດ້ ☐ ບໍ່ໄດ້ ☐ |
| **2. ສະຖານະການຂອງຄອບຄົວ** | |

| | |
|---|---|
| **ປະຫວັດຄອບຄົວ ແລະ ການເຮັດວຽກ** | **ຕົວຢ່າງ**: ການເຈັບປ່ວຍ, ການເສຍຊີວິດ, ການໃຊ້ຄວາມຮຸນແຮງ, ການໃຊ້ສານເສບຕິດຂອງພໍ່ແມ່, ອາດຊະຍາກຳ, ພຶດຕິກຳຕໍ່ຕ້ານສັງຄົມ, ວັດທະນະທຳ, ຂະໜາດ ແລະ ສະມາຊິກຂອງຄົວເຮືອນ ແລະ ການດຳລົງຊີວິດປະຈຳວັນ, ພໍ່ແມ່ບໍ່ຢູ່ ຫຼື ອື່ນໆ.<br>..............................................................................<br>.............................................................................. |
| **ຍາດພີ່ນ້ອງຂອງຄອບຄົວ** | ຜ່ານມາໄດ້ຮັບ ການສະໜັບສະໜູນ/ການຊ່ວຍເຫຼືອ ຈາກຍາດພີ່ນ້ອງ ແລະ ຜູ້ອື່ນໆບໍ່? ມີຫຍັງແດ່? (ເຊັ່ນ: ຄວາມຮັບຜິດຊອບໃນການເບິ່ງແຍງລ້ຽງດູ)<br>..............................................................................<br>.............................................................................. |
| **ທີ່ຢູ່ອາໄສ** | ມີບັນຫາໃດແດ່ເກີດຂຶ້ນໃນຄອບຄົວໃນປະຈຸບັນ ເຊັ່ນ: ບັນຫານ້ຳ, ສິ່ງອຳນວຍຄວາມສະດວກດ້ານສຸຂາພິບານ, ບ່ອນນອນ? ມີເຫດຜົນໃດແດ່ທີ່ເຮັດໃຫ້ບໍ່ມີທີ່ຢູ່ອາໄສ?<br>..............................................................................<br>.............................................................................. |
| **ການຈ້າງງານ ແລະ ລາຍໄດ້** | ຄອບຄົວມີວຽກເຮັດງານທຳບໍ? ມີລາຍຮັບເປັນປົກກະຕິບໍ? ຖ້າບໍ່ມີວຽກເຮັດງານທຳ ຫຼື ບໍ່ມີລາຍຮັບ, ສາເຫດແມ່ນຍ້ອນຫຍັງ? ຄອບຄົວມີໜີ້ສິນ ຫຼື ມີຄວາມຫຍຸ້ງຍາກທາງດ້ານການເງິນບໍ? ຄອບຄົວໄດ້ຮັບການສະໜັບສະໜູນດ້ານການເງິນຈາກພາກສ່ວນໃດບໍ່?<br>..............................................................................<br>.............................................................................. |
| **ການເຊື່ອມໂຍງຄອບຄົວກັບສັງຄົມ** | ຂຽນບັນຫາກ່ຽວກັບຄວາມສຳພັນໃນຄອບຄົວ, ການສະຫນັບສະຫນູນ ຫຼື ຄວາມສຳພັນຂອງຄອບຄົວກັບຊຸມຊົນ ແລະ ບ້ານໃກ້ຄຽງ.<br>..............................................................................<br>.............................................................................. |
| **ແຫຼ່ງຊັບພະຍາກອນໃນຊຸມຊົນ** | ມີສູນລ້ຽງເດັກ, ໂຮງຮຽນ, ການຂົນສົ່ງ, ສະຖານທີ່ພັກຜ່ອນ ແລະ ການບັນເທີງ, ທີ່ພັກອາໄສປົກປ້ອງ, ກຸ່ມໝູ່ເພື່ອນ (ເຊັ່ນ: ສະໂມສອນ ສຳລັບ ພໍ່ແມ່ ຫຼື ຊາວຫນຸ່ມ) ແລະ ອື່ນໆ?<br>..............................................................................<br>.............................................................................. |
| 3. ຄວາມອາດສາມາດໃນການເບິ່ງແຍງລ້ຽງດູເດັກຂອງພໍ່ແມ່ | |
| ການເບິ່ງແຍງລ້ຽງດູພື້ນຖານ | **ຂຽນຂໍ້ມູນກ່ຽວກັບວິທີການເບິ່ງແຍງລ້ຽງດູເດັກ ເຊັ່ນ: ການສະໜອງອາຫານ, ເຄື່ອງດື່ມ, ຄວາມອົບອຸ່ນ, ທີ່ພັກອາໄສ, ເຄື່ອງນຸ່ງຫົ່ມທີ່ເຫມາະສົມ, ສຸຂະອະນາໄມສ່ວນບຸກຄົນ ແລະ ການດູແລແຂ້ວ.**<br>..............................................................................<br>.............................................................................. |

| | |
|---|---|
| **ການຮັບປະກັນຄວາມປອດໄພ** | ສະພາບແວດລ້ອມມີຄວາມປອດໄພສໍາລັບເດັກບໍ? ເດັກໄດ້ຮັບຄໍາແນະນໍາທີ່ເໝາະສົມຈາກຄອບຄົວບໍ່ ?<br>..........................................................................<br>.......................................................................... |
| **ຄວາມອົບອຸ່ນທາງດ້ານຈິດໃຈ** | ພໍ່ແມ່ໄດ້ສ້າງສະພາບແວດລ້ອມທີ່ມີຄວາມໝັ້ນຄົງ, ມີຄວາມຮັກແພງ, ມີການຊຸກຍູ້ສະພາບແວດລ້ອມຄອບຄົວ, ການຍ້ອງຍໍ, ການໃຫ້ກໍາລັງໃຈ ແລະ ຄວາມຜູກພັນທີ່ໝັ້ນຄົງ ໃຫ້ແກ່ລູກບໍ?<br>..........................................................................<br>.......................................................................... |
| **ການກະຕຸກຊຸກຍູ້** | ພໍ່ແມ່ຮູ້ ແລະ ເຮັດກິດຈະກໍາທີ່ດີ, ຊຸກຍູ້ການຮຽນ, ເຮັດກິດຈະກໍາການຮຽນຮູ້ພ້ອມກັນກັບລູກບໍ່?<br>..........................................................................<br>.......................................................................... |
| **ການໃຫ້ຄໍາແນະນໍາຂອງພໍ່ແມ່/ຜູ້ປົກຄອງ** | ພໍ່ແມ່ໃຊ້ວິທີການປະຕິບັດວິໄນ/ລົງໂທດເດັກແບບສ້າງສັນ, ມີປະສິດຕິຜົນ ແລະ ມີຄວາມເໝາະສົມບໍ່? ຜູ້ແມ່ປົກປ້ອງລູກເກີນໄປບໍ?<br>..........................................................................<br>.......................................................................... |
| **ສະຖຽນລະພາບ** | ຕົວຢ່າງ ຍ້າຍເຮືອນ ຫຼື ໂຮງຮຽນເລື້ອຍໆບໍ່.<br>..........................................................................<br>.......................................................................... |

**4. ການພິຈາລະນາອື່ນໆທີ່ສໍາຄັນ**

ມີຫຍັງອີກແດ່ທີ່ພໍ່ແມ່, ຜູ້ເບິ່ງແຍງດູແລ, ເດັກ, ໄວໜຸ່ມ ຫຼື ຜູ້ເຮັດການຄຸ້ມຄອງບໍລິຫານກໍລະນີ ຮູ້ສຶກວ່າຈໍາເປັນຕ້ອງລາຍງານໃສ່ຕື່ມ?

..........................................................................

..........................................................................

ຄອບຄົວມີທັດສະນະແນວໃດແດ່? ໃນກໍລະນີທີ່ເດັກຈະອອກຈາກສະຖານທີ່ການເບິ່ງແຍງລ້ຽງດູເພື່ອກັບໄປຢູ່ເຮືອນຄືນ, ພໍ່ແມ່ຈະຍອມຮັບເດັກບໍ?

..........................................................................

..........................................................................

**5. ການວິເຄາະ**

ຄວາມຕ້ອງການ ແລະ ຄວາມສ່ຽງຕໍ່ເດັກມີຫຍັງແດ່?

..........................................................................

..........................................................................

ຈຸດແຂງ ແລະ ທ່າແຮງຂອງຄອບຄົວໃນການປົກປ້ອງເດັກມີຫຍັງແດ່? ແລະ ຕາມທັດສະນະຂອງທ່ານ, ຄອບຄົວສາມາດສະໜອງການດຳລົງຊີວິດທີ່ເຫມາະສົມສຳລັບເດັກໄດ້ບໍ?

......................................................................................................................

......................................................................................................................

## 4. ແບບຟອມການວາງແຜນກໍລະນີ

ຟອມ 4

### ແບບຟອມການວາງແຜນກໍລະນີ

ໝາຍເຫດ: ໃຫ້ຮັກສາບົດລາຍງານທີ່ເປັນລາຍລັກອັກສອນ ແລະ ຂໍ້ມູນອື່ນໆໄວ້ເປັນຄວາມລັບ.
ສາມາດແລກປ່ຽນຂໍ້ມູນກັບບຸກຄົນທີ່ກ່ຽວຂ້ອງໂດຍກົງໃນກໍລະນີເທົ່ານັ້ນ.

| | | | |
|---|---|---|---|
| **ລາຍລະອຽດຂໍ້ມູນກ່ຽວກັບເດັກ (ກໍລະນີ)** | | ເລກທີກໍລະນີ. | ................................ |
| ຊື່ຂອງເດັກ | | ນາມສະກຸນຂອງເດັກ | |
| ວັນ ເດືອນ ປີ ເກີດ ແລະ ອາຍຸຂອງເດັກ: | | ເພດຂອງເດັກ: | ຊາຍ ☐ ຍິງ ☐ |
| ທີ່ຢູ່ຂອງເດັກ: | | | |
| ຂໍ້ມູນຕິດຕໍ່ພົວພັນກັບເດັກ: | | | |
| **ຂໍ້ມູນພື້ນຖານ** | | | |
| ວັນທີຂອງການສ້າງແຜນກໍລະນີ | | | |
| ບຸກຄົນທີ່ມີສ່ວນຮ່ວມໃນການວາງແຜນກໍລະນີ (ຖ້າເປັນໄປໄດ້ ແລະ ຫາກເໝາະສົມ, ຄວນຮັບປະກັນໃຫ້ເດັກມີສ່ວນຮ່ວມນຳ) | ຊື່ | ສາຍສຳພັນກັບເດັກ | |
| | | | |
| | | | |
| | | | |
| | | | |
| 1. ການດຳເນີນການທີ່ຈຳເປັນເພື່ອປັບປຸງຄວາມຢູ່ດີກິນດີຂອງເດັກ | | | |
| ການສຶກສາ | ເດັກມີຄວາມຕ້ອງການສະເພາະດ້ານການສຶກສາບໍ່? ເດັກຕ້ອງການໆສຶກສາພິເສດ/ການເບິ່ງແຍງລ້ຽງດູສຳລັບເດັກພິການບໍ?<br>................................................................................<br>................................................................................ | | |
| ສຸຂະພາບ | ເດັກມີຄວາມຕ້ອງການຢາສະເພາະ ຫຼື ການເຂົ້າເຖິງການບໍລິການສຸຂະພາບບໍ່? ເດັກມີຄວາມພິການບໍ່? ເດັກຕ້ອງການອຸປະກອນຄ້ຳຊູ/ຊ່ວຍເຫຼືອ ຫຼື ຕ້ອງການໆຊ່ວຍເຫຼືອສະເພາະໃນການພັດທະນາທາງດ້ານຮ່າງກາຍຂອງເຂົາເຈົ້າບໍ?<br>................................................................................<br>................................................................................ | | |

| | |
|---|---|
| **ຊີວິດການເປັນຢູ່ໃນຄົວເຮືອນ** | ຈໍາເປັນຕ້ອງໄດ້ສະໜອງຄວາມຕ້ອງການຂັ້ນພື້ນຖານສໍາລັບຊີວິດການເປັນຢູ່ຂອງເດັກໃນປະຈຸບັນບໍ່? ຈໍາເປັນຕ້ອງເອົາເດັກໄປຢູ່ບ່ອນທີ່ມີສິ່ງອໍານວຍຄວາມສະດວກສະເພາະບໍ? ເດັກ/ໄວໜຸ່ມ/ຄອບຄົວຕ້ອງການການສະໜັບສະໜູນໃນການຊອກວຽກເຮັດງານທໍາ ຫຼື ຕ້ອງການການສະໜັບສະໜູນດ້ານເສດຖະກິດບໍ່?<br>......................................................................................<br>...................................................................................... |
| **ລັກສະນະພຶດຕິກໍາຂອງເດັກ** | ໃນກໍລະນີທີ່ເດັກສະແດງອາການຂອງພຶດຕິກໍາແຂງກະດ້າງ, ທໍາຮ້າຍໂຕເອີງ, ມີຄວາມສ່ຽງໃນການຕິດສິ່ງເສບຕິດບໍ່? ເດັກຕ້ອງການໆຊ່ວຍເຫຼືອດ້ານຈິດໃຈ ຫຼື ການລ້ຽງດູພິເສດແນວໃດບໍ່? ເດັກຕ້ອງການໆໃຫ້ຄໍາປຶກສາບໍ?<br>......................................................................................<br>...................................................................................... |
| **ການປົກປ້ອງເດັກ** | ໃນກໍລະນີທີ່ເດັກຖືກໃຊ້ຄວາມຮຸນແຮງ, ຖືກທາລຸນ, ຖືກຂູດຮີດ ຫຼື ຖືກປ່ອຍປະລະເລີຍ, ຕ້ອງມີການເຂົ້າໄປຊ່ວຍເຫຼືອອັນໃດແດ່?<br>......................................................................................<br>...................................................................................... |
| **ການພິຈາລະນາອື່ນໆ** | ຕົວຢ່າງ<br>ເດັກໄດ້ມີການຈົດທະບຽນການເກີດບໍ່? ມີ ☐ ບໍ່ມີ ☐ |

## 2. ທັດສະນະຂອງຜູ້ທີ່ກ່ຽວຂ້ອງ

ເດັກມີຄວາມມຸ້ງຫວັງ/ປາຖະໜາ ແນວໃດແດ່?

..................................................................................................................

..................................................................................................................

ຄອບຄົວມີຄວາມມຸ້ງຫວັງ/ປາຖະໜາ ແນວໃດແດ່?

..................................................................................................................

..................................................................................................................

## 3. ແຜນປະຕິບັດງານ

| ລ/ດ. | ກິດຈະກໍາ | ຜູ້ຮັບຜິດຊອບ | ໄລຍະເວລາ |
|---|---|---|---|
| | | | |
| | | | |
| | | | |
| | | | |

| ຜູ້ກະກຽມບົດລາຍງານ | | | |
|---|---|---|---|
| ຊື່ | | ວັນທີ | |
| ຕໍາແໜ່ງ | | ທີ່ຢູ່ | |
| ຂໍ້ມູນຕິດຕໍ່ພົວພັນ | | ລາຍເຊັນ | |
| **ຕື່ມຂໍ້ມູນໃສ່ໂດຍຜູ້ຊີ້ນໍາ** | | | |
| ຊື່ | | ວັນທີ | |
| ຕໍາແໜ່ງ | | ທີ່ຢູ່ | |
| ຂໍ້ມູນຕິດຕໍ່ພົວພັນ | | ລາຍເຊັນ | |

## 5. ແບບຟອມການສົ່ງຕໍ່

ຟອມ 5

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງ:................................

ບ້ານ:.................................

ເລກທີ /

ບ້ານ.........................., ວັນທີ..........................

**ແບບຟອມການສົ່ງຕໍ່**

**ຮຽນ:**

ເລື່ອງ: ______________________________,

- ອີງຕາມ: ການສະເໜີສຳລັບການສົ່ງຕໍ່ກໍລະນີ ເລກທີ ______________.

ຊື່ບ້ານ ຫຼື ອົງການ ຫຼື ຫ້ອງການ (ທີ່ຈະສົ່ງຕໍ່ກໍລະນີ) __________ ຂໍຖືເປັນກຽດຢ່າງສູງມາຍັງທ່ານ __________ ເພື່ອສົ່ງຕໍ່ ທ້າວ/ນາງ (ໃຫ້ຂຽນຊື່ຂອງເດັກ)______________ມາຫາທ່ານເພື່ອຮັບການບໍລິການທີ່ກ່ຽວຂ້ອງ.

ເຫດຜົນສຳລັບການສົ່ງຕໍ່ ແລະ ການບໍລິການທີ່ຕ້ອງການ ມີດັ່ງນີ້: ______________________________

______________________________

______________________________

______________

ພວກເຮົາຫວັງວ່າຈະໄດ້ຄຳເຫັນຈາກທ່ານເພື່ອຊ່ວຍເຫຼືອໃນການຄຸ້ມຄອງບໍລິຫານກໍລະນີນີ້.

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານເພື່ອພິຈາລະນາຕາມລະບຽບການດ້ວຍ

ຕຳແໜ່ງຫົວໜ້າການຈັດຕັ້ງ

ເບີໂທຕິດຕໍ່: .......................... ທ່ານ

ລາຍເຊັນ

ຊື່ ແລະ ນາມສະກຸນ

## 6. ເສັ້ນທາງການສົ່ງຕໍ່



## 7. ເຄື່ອງມືການວາງແຜນການບໍລິການ

| ການບໍລິການທີ່ສະໜອງໃຫ້ | ຄວາມພິການ: ພິການ/ບໍ່ພິການ. ເລັກນ້ອຍ, ປານກາງ, ຮຸນແຮງ | ສະຖານະການໃນການລົງທະບຽນ | ຂໍ້ມູນອື່ນ ໆ |
|---|---|---|---|
| | | | |
| | | | |
| | | | |
| | | | |
| | | | |
| | | | |

| ປະເພດຂອງອົງການ (ລັດຖະບານ, ອົງການຈັດຕັ້ງທາງສັງຄົມ, ແລະ ອື່ນໆ) | ການເອົາເດັກໄປໄວ້ສະຖານທີ່ໃດໜຶ່ງໃນສະຖານະການສຸກເສີນ, ໃນໄລຍະສັ້ນ, ໄລຍະກາງ, ຫຼື ໄລຍະຍາວ | ຈຳນວນເດັກທີ່ໄດ້ຮັບການບໍລິການ | ອາຍຸ ແລະ ເພດຂອງເດັກທີ່ໄດຮັບການບໍລິການ |
|---|---|---|---|
| | | | |
| | | | |
| | | | |
| | | | |
| | | | |
| | | | |

| ຊື່ | ສະຖານທີ່ | ຜູ້ຈັດການບໍລິຫານກໍລະນີ | ຂໍ້ມູນຕິດຕໍ່ພົວພັນ |
|---|---|---|---|
| | | | |
| | | | |
| | | | |
| | | | |
| | | | |
| | | | |

## 8. ແບບຟອມກອງປະຊຸມກໍລະນີ

ຟອມ 6

**ແບບຟອມກອງປະຊຸມກໍລະນີ**

ໝາຍເຫດ: ໃຫ້ຮັກສາບົດລາຍງານທີ່ເປັນລາຍລັກອັກສອນ ແລະ ຂໍ້ມູນອື່ນໆໄວ້ເປັນຄວາມລັບ.
ສາມາດແລກປ່ຽນຂໍ້ມູນກັບບຸກຄົນທີ່ກ່ຽວຂ້ອງໂດຍກົງໃນກໍລະນີເທົ່ານັ້ນ.

| ຂໍ້ມູນລາຍລະອຽດກ່ຽວກັບເດັກ | | ເລກທີກໍລະນີ. | ................................ |
|---|---|---|---|
| ຊື່ຂອງເດັກ | | ນາມສະກຸນຂອງເດັກ | |
| ວັນ ເດືອນ ປີ ເກີດ ແລະ ອາຍຸຂອງເດັກ: | | ເພດຂອງເດັກ: | ຊາຍ ☐ ຍິງ ☐ |
| ທີ່ຢູ່ຂອງເດັກ: | | | |
| ຂໍ້ມູນຕິດຕໍ່ພົວພັນກັບເດັກ: | | | |

| ສະຫຼຸບສັງລວມການປະຊຸມກໍລະນີ | | |
|---|---|---|
| ກ. ສະຫຼຸບສັງລວມ | | |
| ວັນທີ | | |
| ຜູ້ເຂົ້າຮ່ວມ | ຊື່ | ອົງການຈັດຕັ້ງ |
| | | |
| | | |
| | | |
| | | |
| ຂ. ຕາຕະລາງ | | |
| | | |
| | | |
| | | |

| ຄ. ການສົນທະນາປຶກສາຫາລື | | | |
|---|---|---|---|
| | | | |
| ງ. ຂັ້ນຕອນຕໍ່ໄປ | | | |
| ລ/ດ. | ການດຳເນີນການ | ຜູ້ຮັບຜິດຊອບ | ຈະເຮັດຕອນໃດ |
| | | | |
| | | | |
| ກະກຽມບົດລາຍງານໂດຍ | | | |
| ຊື່ | | ອົງການຈັດຕັ້ງ: | |
| ຂໍ້ມູນຕິດຕໍ່ພົວພັນ: | | ລາຍເຊັນ: | |

## 9. ແບບຟອມທົບທວນກໍລະນີ

ຟອມ 7

**ແບບຟອມທົບທວນກໍລະນີ**

ໝາຍເຫດ: ໃຫ້ຮັກສາບົດລາຍງານທີ່ເປັນລາຍລັກອັກສອນ ແລະ ຂໍ້ມູນອື່ນໆໄວ້ເປັນຄວາມລັບ. ສາມາດແລກປ່ຽນຂໍ້ມູນກັບບຸກຄົນທີ່ກ່ຽວຂ້ອງໂດຍກົງໃນກໍລະນີເທົ່ານັ້ນ.

| ຂໍ້ມູນພື້ນຖານ | | | ເລກທີກໍລະນີ | ................................ |
|---|---|---|---|---|
| ຊື່ຂອງເດັກ | | | ນາມສະກຸນຂອງເດັກ | |
| ວັນທີທີ່ໄດ້ຕິດຕາມ/ ທົບທວນຄືນ | | | | |
| ຈຸດປະສົງ | | | | |
| ສະຖານທີ່ໆໄດ້ເຮັດການຕິດຕາມ | ເຮືອນຂອງເດັກ ☐ | ຫ້ອງການ ☐ | ທາງໂທລະສັບ ☐ | ອື່ນໆ: |
| ບຸກຄົນທີ່ມີສ່ວນຮ່ວມໃນການທົບທວນກໍລະນີ (ຖ້າເປັນໄປໄດ້ ແລະ ຫາກເໝາະສົມ, ຄວນຮັບປະກັນໃຫ້ເດັກມີສ່ວນຮ່ວມນຳ) | ຊື່ | | ສາຍສຳພັນກັບເດັກ | |
| | | | | |
| | | | | |
| | | | | |
| | | | | |

| ການທົບທວນແຜນກໍລະນີ | |
|---|---|
| ກ. ສະຫວັດດີການຂອງເດັກໂດຍລວມ | |
| ການສຶກສາ | |
| ສຸຂະພາບ | |
| ຊີວິດການເປັນຢູ່ໃນຄົວເຮືອນ | |
| ລັກສະນະພຶດຕິກຳຂອງເດັກ | |
| ການປົກປ້ອງເດັກ | |

| | |
|---|---|
| ການສະໜອງການເບິ່ງແຍງດູແລໃຫ້ແກ່ເດັກໃນປັດຈຸບັນ | |
| ຂ. ການວິເຄາະໂດຍລວມ | |
| ນັບຕັ້ງແຕ່ໄດ້ເຮັດການປະເມີນ ມີການປ່ຽນແປງທີ່ດີ/ບໍ່ດີ ອັນໃດແດ່ເກີດຂຶ້ນໃນສະຖານະການຂອງເດັກ ແລະ ຄອບຄົວ? | |
| ມີການດໍາເນີນການໃດແດ່ທີ່ວາງໄວ້ໃນແຜນກໍລະນີ ທີ່ຍັງບໍ່ໄດ້ປະຕິບັດ? ຍ້ອນຫຍັງ? | |
| ຄ. ທັດສະນະຂອງຜູ້ທີ່ກ່ຽວຂ້ອງ | |
| ເດັກມີຄວາມຄິດເຫັນແນວໃດກ່ຽວກັບການດໍາເນີນການຕາມແຜນກໍລະນີ? ເດັກມີຄວາມສຸກ ແລະ ພໍໃຈກັບການດໍາເນີນການເຫຼົ່ານັ້ນບໍ່? ມີອັນໃດແດ່ທີ່ຄວນສະໜັບສະໜູນຕື່ມອີກ? | |
| ຄອບຄົວມີຄວາມຄິດເຫັນແນວໃດກ່ຽວກັບການດໍາເນີນການຕາມແຜນກໍລະນີ? ຄອບຄົວມີຄວາມສຸກ ແລະ ພໍໃຈກັບການດໍາເນີນການເຫຼົ່ານັ້ນບໍ່? ມີອັນໃດແດ່ທີ່ຄວນສະໜັບສະໜູນຕື່ມອີກ? | |
| ງ. ໃຫ້ຂຽນການດໍາເນີນການທີ່ຕ້ອງໄດ້ປັບປ່ຽນ ຫຼື ການດໍາເນີນການໃໝ່ທີ່ເອົາເຂົ້າໃນແຜນກໍລະນີ. | |

| ລ/ດ. | ການດໍາເນີນການ | ຜູ້ຮັບຜິດຊອບ | ຈະເຮັດຕອນໃດ |
|---|---|---|---|
| | | | |
| | | | |
| | | | |
| | | | |

| |
|---|
| ຈ. ການທົບທວນຄືນຄັ້ງຕໍ່ໄປ |

| | | |
|---|---|---|
| ວັນທີ ທີ່ຄາດວ່າຈະເຮັດການທົບທວນຄັ້ງຕໍ່ໄປ | | |
| ກ. ສະຫຼູບສັງລວມ | | |
| ຊື່: | | ອົງການຈັດຕັ້ງ: |
| ຂໍ້ມູນຕິດຕໍ່ພົວພັນ: | | ການສຶກສາ |

## 10. ແບບຟອມການປິດກໍລະນີ

ຟອມ 8

**ແບບຟອມການປິດກໍລະນີ**

ໝາຍເຫດ: ໃຫ້ຮັກສາບົດລາຍງານທີ່ເປັນລາຍລັກອັກສອນ ແລະ ຂໍ້ມູນອື່ນໆໄວ້ເປັນຄວາມລັບ. ສາມາດແລກປ່ຽນຂໍ້ມູນກັບບຸກຄົນທີ່ກ່ຽວຂ້ອງໂດຍກົງໃນກໍລະນີເທົ່ານັ້ນ.

| ຂໍ້ມູນພື້ນຖານ | | ເລກທີກໍລະນີ | ................................ |
|---|---|---|---|
| ຊື່ຂອງເດັກ | | ນາມສະກຸນຂອງເດັກ | |
| ວັນທີປິດກໍລະນີ | | | |

| ບຸກຄົນທີ່ມີສ່ວນຮ່ວມໃນການປິດກໍລະນີ (ຮັບປະກັນໃຫ້ເດັກມີສ່ວນຮ່ວມນໍາ) | ຊື່ | ສາຍສຳພັນກັບເດັກ |
|---|---|---|
| | | |
| | | |
| | | |
| | | |

**ການທົບທວນແຜນກໍລະນີ**

**ກ. ສະຫວັດດີການຂອງເດັກໂດຍລວມ**

| | | |
|---|---|---|
| 1 | ເດັກ/ໄວໜຸ່ມຢູ່ໃນສະພາບແວດລ້ອມທີ່ປອດໄພ, ໝັ້ນຄົງ, ບໍ່ມີຄວາມຮຸນແຮງ, ບໍ່ມີອັນຕະລາຍ ຫຼື ການລະເມີດ | ☐ |
| 2 | ໄດ້ສຳເລັດການຕື່ມຂໍ້ມູນໃສ່ແບບຟອມການຄຸ້ມຄອງບໍລິຫານກໍລະນີທັງຫມົດ ແລະ ຜ່ານຂັ້ນຕອນທັງຫມົດຂອງຂະບວນການຄຸ້ມຄອງບໍລິຫານກໍລະນີແລ້ວ | ☐ |
| 3 | ຮັບປະກັນວ່າເປົ້າໝາຍທັງໝົດທີ່ວາງໄວ້ໃນແຜນການດູແລເດັກໄດ້ສຳເລັດແລ້ວ, ຫຼື ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງບຸກຄົນທີ່ມີຄວາມອາດສາມາດໃນການຈັດຕັ້ງປະຕິບັດ | ☐ |
| 4 | ໄດ້ເຮັດການຕິດຕາມເພີ່ມເຕີມຢ່າງໜ້ອຍສາມຢ່າງ ເພື່ອຮັບປະກັນວ່າເດັກ/ໄວໜຸ່ມມີຄວາມສຸກຢູ່ໃນເຮືອນ ແລະ ສາມາດເຂົ້າເຖິງການບໍລິການທີ່ເໝາະສົມໃນຊຸມຊົນ. | ☐ |
| 5 | ຮັບປະກັນວ່າເດັກສາມາດເຂົ້າເຖິງການບໍລິການສຸຂະພາບທີ່ເໝາະສົມ (ຖ້າເດັກມີຄວາມຕ້ອງການ) | ☐ |
| 6 | ຮັບປະກັນວ່າເດັກໄດ້ເຂົ້າຮຽນໃນຂັ້ນສຶກສາກ່ອນປະຖົມ, ປະຖົມ ຫຼື ມັດທະຍົມ (ຖ້າມີ) | ☐ |
| 7 | ໄດ້ໃຫ້ຄໍາປຶກສາແກ່ຄອບຄົວ ແລະ ໄດ້ໃຫ້ການສະໜັບສະໜູນໃນການລ້ຽງດູເດັກໃຫ້ແກ່ຄອບຄົວ ເພື່ອແກ້ໄຂບັນຫາພຶດຕິກຳເດັກ | ☐ |

| | | |
|---|---|---|
| 8 | ຮ່ວມມືກັບອຳນາດການປົກຄອງທ້ອງຖິ່ນ ເພື່ອຮັບປະກັນວ່າເດັກມີເຄືອຂ່າຍໃນການສະໜັບສະໜູນ | ☐ |
| 9 | ສຳລັບເດັກ/ໄວໜຸ່ມທີ່ພິການ:<br>- ເຊື່ອມໂຍງກັບຊັບພະຍາກອນທັງໝົດທີ່ມີຢູ່ໃນຊຸມຊົນ<br>- ພໍ່ແມ່ (ທີ່ໃຫ້ການອຸປະຖຳເດັກ) ມີທັກສະທີ່ຈຳເປັນເພື່ອສະໜອງການສະໜັບສະໜູນ ແລະ ພົວພັນກັບເດັກ/ໄວໜຸ່ມ | ☐ |

**ຖ້າກວດເບິ່ງແລ້ວ ເຫັນວ່າສິ່ງທີ່ຄວນກວດເບິ່ງສຳລັບການປິດກໍລະນີ ບໍ່ໄດ້ສຳເລັດທັງໝົດ, ແຕ່ກໍຍັງປິດກໍລະນີ, ໃຫ້ອະທິບາຍວ່າຍ້ອນຫຍັງຈຶ່ງຕ້ອງປິດກໍລະນີ:**

| ເຫດຜົນສຳລັບການປິດກໍລະນີ | |
|---|---|
| ເປົ້າໝາຍຂອງກໍລະນີໄດ້ບັນລຸແລ້ວ | ☐ |
| ເດັກ/ຄອບຄົວຍ້າຍໄປຢູ່ເມືອງ/ແຂວງ/ປະເທດອື່ນ ແລະ ກໍລະນີຖືກຍົກຍ້າຍ | ☐ |
| ເດັກໄດ້ເສຍຊີວິດ | ☐ |
| ເດັກມີອາຍຸ 18 ປີແລ້ວ ແລະ ບໍ່ມີຄວາມຈຳເປັນ/ຕ້ອງການໆບໍລິການປົກປ້ອງເດັກ | ☐ |
| ອື່ນໆ: | ☐ |

| ຄຳເຫັນສຸດທ້າຍ |
|---|
| **ຄຳເຫັນສຸດທ້າຍ** |

| ກະກຽມປິດລາຍງານໂດຍ | |
|---|---|
| **ຊື່:** | **ອົງການຈັດຕັ້ງ:** |
| **ຂໍ້ມູນຕິດຕໍ່ພົວພັນ:** | **ລາຍເຊັນ:** |

| ຕື່ມຂໍ້ມູນໃສ່ໂດຍຜູ້ຊີ້ນຳ | |
|---|---|
| ຊື່: | ອົງການຈັດຕັ້ງ: |
| ຕຳແໜ່ງ | ທີ່ຢູ່ |
| ຂໍ້ມູນຕິດຕໍ່ພົວພັນ | ລາຍເຊັນ |

## 11. ຄຳແນະນຳສຳລັບການໄປຢ້ຽມຢາມເຮືອນ

### ຄຳແນະນຳ ສຳລັບການ ໄປຢ້ຽມຢາມເຮືອນ

### ມາລະຍາດທົ່ວໄປ

- ຖ້າເປັນໄປໄດ້ ໃຫ້ເອົາອັນໃດອັນໜຶ່ງໄປນຳເພື່ອໃຫ້ເດັກມີສ່ວນຮ່ວມ ເຊັ່ນ: ເກມ ຫຼື ປຶ້ມອ່ານ.
- ແນະນຳຕົວເອງ.
- ໃຫ້ຄອບຄົວຮູ້ວ່າທ່ານແມ່ນໃຜ ແລະ ໃຫ້ຮູ້ບົດບາດຂອງທ່ານວ່າເປັນ ຕປດ.
  ລໍຖ້າຖືກເຊີນກ່ອນ ຈິ່ງເຂົ້າໄປໃນເຮືອນ.
- ຮູ້ກົດລະບຽບຢູ່ໃນເຮືອນ (ເຊັ່ນ: ປົດເກີບໄວ້ທາງນອກປະຕູເຮືອນ).
- ສ້າງຄວາມໝັ້ນໃຈໃຫ້ຄອບຄົວຮູ້ວ່າ ທ່ານໄປຫາເຂົາເຈົ້າເພື່ອສະໜັບສະໜູນ ແລະ ຊ່ວຍໃຫ້ເຂົາເຈົ້າ ປະສົບຜົນສຳເລັດໃນຄອບຄົວ.
- ພິຈາລະນາຄວາມປອດໄພ. ຕົວຢ່າງ, ມີສິ່ງໃດໃນເຮືອນທີ່ເຮັດໃຫ້ທ່ານຮູ້ສຶກບໍ່ປອດໄພບໍ?
- ມີສ່ວນຮ່ວມຕະຫຼອດ - ທຸກຄັ້ງທີ່ເຈົ້າໄປຢ້ຽມຢາມເຮືອນ ແມ່ນທ່ານກຳລັງສ້າງສາຍສຳພັນທີ່ໄວ້ວາງໃຈ, ສະນັ້ນຕ້ອງເວົ້າ/ລົມກັບຄອບຄົວ.
- ຢ່າຢູ່ດົນເກີນໄປ. ກຳນົດຂອບເຂດເວລາສຳລັບການໄປຢ້ຽມຢາມເຮືອນ.

### ໃນລະຫວ່າງການຢ້ຽມຢາມເຮືອນ

- ເຄົາລົບ ຮີດຄອງປະເພນີ, ວັດທະນະທຳ ແລະ ຄວາມເຊື່ອຂອງຄອບຄົວ ຢ່າງເຄັ່ງຄັດ
- ໃຊ້ຄວາມຮູ້ຂອງທ່ານກ່ຽວກັບຊຸມຊົນ ແລະ ສະມາຊິກໃນຊຸມຊົນ ເພື່ອຊ່ວຍເດັກ ແລະ ຄອບຄົວແກ້ໄຂຄວາມຕ້ອງການ ແລະ ບັນຫາ.
- ເຊື່ອໃນສັນຊາດຕະຍານຂອງທ່ານ, ຖ້າຮູ້ສຶກວ່າບາງສິ່ງບາງຢ່າງບໍ່ເຫມາະສົມ.
    - ຖາມຄຳຖາມໄດ້ ແຕ່ບໍ່ແມ່ນການຕຳນິ.
    - ອອກຈາກເຮືອນໄດ້ ຖ້າທ່ານຮູ້ສຶກວ່າບໍ່ປອດໄພ.
    - ຕິດຕໍ່ກັບອຳນາດການປົກຄອງທ້ອງຖິ່ນ/ຈຸດພົວພັນປະສານງານ ຫຼື ຜູ້ຊ່ຽວຊານດ້ານສະຫວັດດີການເດັກ ຖ້າທ່ານມີຄວາມກັງວົນກ່ຽວກັບສະຖານະການຫຼັງຈາກທີ່ໄດ້ໄປຢ້ຽມຢາມເຮືອນ.

### ເປັນຜູ້ສັງເກດ

- ສັງເກດວ່າເດັກ ແລະ ຄົນໃນຄອບຄົວແຕ່ລະຄົນເຂົ້າກັນໄດ້ດີຫຼືບໍ່
- ສັງເກດເບິ່ງຮອຍບວມຊ້ຳ ຫຼື ອາການບໍ່ສະບາຍຂອງເດັກ
- ສັງເກດເບິ່ງການປ່ຽນແປງໃນພຶດຕິກຳ ເຊັ່ນ ການແຍກຕົວ ຫຼື ການຢູ່ໂດດດ່ຽວ
- ສັງເກດເບິ່ງວ່າພໍ່ແມ່ປະຕິບັດວິໄນ/ລົງໂທດເດັກແນວໃດ
- ສັງເກດເບິ່ງວ່າມີຄວາມສາມັກຄີກັນໃນຄອບຄົວບໍ່? ຄອບຄົວສາມັກຄີ ແລະ ຊ່ວຍເຫຼືອກັນ ແລະ ກັນບໍ່?
- ສັງເກດເບິ່ງວ່າມີຄວາມຕ້ອງການດ້ານການປິ່ນປົວ, ຄວາມຕ້ອງການອາຫານ/ໂພຊະນາການ, ການປ່ຽນແປງລາຍໄດ້, ບັນຫາດ້ານຄວາມປອດໄພໃນເຮືອນມີຫຍັງແດ່?
- ກຽມພ້ອມທີ່ຈະຮັບຟັງ. ຢ່າແປັນຜູ້ເວົ້າຝ່າຍດຽວ
- ກຽມພ້ອມທີ່ຈະໃຫ້ຄຳແນະນຳກ່ຽວກັບແຫຼ່ງຊັບພະຍາກອນ ແລະ ການສະໜັບສະໜູນໃນຊຸມຊົນ/ບ້ານ ແລະ ຜູ້ທີ່ສາມາດຕິດຕໍ່ໄດ້



## 12. ສິ່ງທີ່ຄວນເຮັດ ແລະ ສິ່ງທີ່ບໍ່ຄວນເຮັດ

### ຫຼັງຈາກການຢ້ຽມຢາມເຮືອນ

- ມີຄວາມສະໝໍ່າສະເໝີ: ຖ້າເປັນໄປໄດ້ ໃຫ້ໄປຢ້ຽມຢາມຢ່າງເປັນປົກກະຕິ ແລະ ເຄົາລົບຂອບເຂດຂອງຄອບຄົວ ເຊັ່ນ: ຫຼີກລ່ຽງການໄປຢ້ຽມຢາມໃນເວລາຄໍ່າ ຫຼື ໃນເວລາທີ່ຄອບຄົວມີແຂກ.
- ໃຊ້ຫຼັກຈັນຍາບັນທີ່ດີ: ຕົວຢ່າງ ບໍ່ເປີດເຜີຍຂໍ້ມູນກັບຄອບຄົວຂອງຕົນເອງ, ໝູ່ເພື່ອນ ຫຼື ຄົນອື່ນ; ບໍ່ຮັບເອົາຂອງຂວັນ; ບໍ່ໃຫ້ເງິນ.
- ຕິດຕາມ: ຖ້າທ່ານໃຫ້ຂໍ້ມູນກ່ຽວກັບແຫຼ່ງຊັບພະຍາກອນ ຫຼື ການຊ່ວຍເຫຼືອ, ໃຫ້ຕິດຕາມນໍາຄອບຄົວເພື່ອເບິ່ງວ່າເຂົາເຈົ້າສາມາດເຂົ້າເຖິງແຫຼ່ງຊັບພະຍາກອນ. ຂໍ້ມູນທີ່ໃຫ້ໄປນັ້ນມີປະໂຫຍດບໍ່? ຈໍາເປັນຕ້ອງຊອກຫາແຫຼ່ງຊັບພະຍາກອນອື່ນ ຫຼື ການສະໜັບສະໜູນທາງສັງຄົມຕື່ມຫຼືບໍ່?

### ສິ່ງຄວນເຮັດ

- ຢູ່ໃນຄວາມສະຫງົບ.
- ຮັບຟັງ ແລະ ຟັງສິ່ງທີ່ເຂົາເຈົ້າເວົ້າ.
- ໃຫ້ເວລາເພື່ອໃຫ້ເຂົາເຈົ້າສາມາດເວົ້າສິ່ງທີ່ເຂົາເຈົ້າຕ້ອງການເວົ້າ.
- ສ້າງຄວາມໝັ້ນໃຈໃຫ້ເດັກ (ຫຼືບຸກຄົນອື່ນໆ) ວ່າເຂົາເຈົ້າໄດ້ເຮັດສິ່ງທີ່ຖືກຕ້ອງເພື່ອລາຍງານສະຖານະການນີ້.
- ບັນທຶກເປັນລາຍລັກອັກສອນກ່ຽວກັບການລາຍງານການລະເມີດ/ທາລຸນຕ່າງໆ
- ສົ່ງຕໍ່ກໍລະນີໄປຫາຜູ້ໃຫ້ບໍລິການທີ່ເໝາະສົມ.
- ມີການຕິດຕາມຢ່າງເປັນປົກກະຕິ.

### ສິ່ງທີ່ບໍ່ຄວນເຮັດ

- ບໍ່ຕ້ອງຕົກໃຈ.
- ບໍ່ຕັດສິນ ຫຼື ເວົ້າດູຖູກເດັກ ຫຼື ພໍ່ແມ່.
- ບໍ່ໃຫ້ເດັກເລົ່າເລື່ອງຄືນໂດຍທີ່ບໍ່ຈໍາເປັນ.
- ບໍ່ພະຍາຍາມຈື່ຈໍາທຸກສິ່ງທຸກຢ່າງແລ້ວມາຂຽນໃນພາຍຫລັງ. ໃຫ້ຂຽນທຸກຢ່າງໃນຂະນະທີ່ເຂົາເຈົ້າກໍາລັງບອກເລົ່າກ່ຽວກັບສະຖານະການ.
- ບໍ່ພະຍາຍາມແກ້ໄຂສະຖານະການລະເມີດພຽງຜູ້ດຽວ.
- ບໍ່ເອົາເດັກເຂົ້າໄປໃນເຮືອນຂອງທ່ານເອງ. ໃຫ້ຫຼີກລ້ຽງການພົບກັບເດັກໃນສະຖານທີ່ໆບໍ່ເໝາະສົມ (ໂຮງແຮມ, ບາ ແລະ ອື່ນໆ). ໃນກໍລະນີທີ່ຕ້ອງໄດ້ຍ້າຍເດັກອອກຈາກເຮືອນຂອງລາວຢ່າງຮີບດ່ວນ, ຕປດ ຈໍາເປັນຕ້ອງໄດ້ຕິດຕໍ່ກັບອໍານາດການປົກຄອງທ້ອງຖິ່ນ, ສຍລ ແລະ ຣສສ ໃນຂັ້ນເມືອງ ແລະ ຂັ້ນແຂວງທີ່ສາມາດແນະນໍາໃຫ້ເອົາເດັກໄປຢູ່ໃນບ່ອນທີ່ປອດໄພສຸກເສີນ.

## 13. ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງ ຕປດ

ພາລະບົດບາດ ແລະ ຄວາມຮັບຜິດຊອບທີ່ແນະນຳໃນການເກັບກຳຂໍ້ມູນ ແລະ ການຄຸ້ມຄອງບໍລິຫານກໍລະນີ ສຳລັບຕາໜ່າງປົກປ້ອງເດັກ (ຕປດ):

| ຜູ້ຮັບຜິດຊອບ | ໜ້າວຽກ |
|---|---|
| ສະມາຊິກ ຕປດ ຜູ້ໃດຜູ້ໜຶ່ງ | ໄປຢ້ຽມຢາມເຮືອນ |
| ສະມາຊິກ ຕປດ ຜູ້ໃດຜູ້ໜຶ່ງ | ຕື່ມຂໍ້ມູນໃສ່ໃນແບບຟອມກໍລະນີ |
| ສະມາຊິກ ຕປດ ຜູ້ໃດຜູ້ໜຶ່ງ | ປະສານງານ ແລະ ຄຸ້ມຄອງບໍລິຫານກໍລະນີ, ລວມທັງການສົ່ງຕໍ່. ແຈ້ງໃຫ້ອຳນາດການປົກຄອງບ້ານຮູ້ກ່ຽວກັບກໍລະນີ |
| ຫົວໜ້າ ຕປດ | ຕື່ມຂໍ້ມູນໃສ່ໃນແບບຟອມສະຫຼຸບສັງລວມ ເພື່ອບັນທຶກໄວ້ |
| ຫົວໜ້າ ຕປດ | ຕື່ມຂໍ້ມູນໃສ່ໃນແບບຟອມສະຫຼຸບສັງລວມ ເພື່ອຍື່ນສະເໜີ |
| ນາຍບ້ານ (ໃນກໍລະນີທີ່ນາຍບ້ານເປັນຫົວໜ້າ ຕປດ, ຂັ້ນຕອນນີ້ບໍ່ເຮັດກໍໄດ້) | ກວດກາເບິ່ງແບບຟອມກໍລະນີ |
| ນາຍບ້ານ (ໃນກໍລະນີທີ່ນາຍບ້ານເປັນຫົວໜ້າ ຕປດ, ຂັ້ນຕອນນີ້ບໍ່ເຮັດກໍໄດ້) | ກວດກາເບິ່ງແບບຟອມສະຫຼຸບສັງລວມ ເພື່ອຍື່ນສະເໜີ |
| ນາຍບ້ານ<br>ສຳຮອງ: ຫົວໜ້າ ຕປດ | ສົ່ງແບບຟອມກໍລະນີ ແລະ ແບບຟອມປະຈຳໄຕມາດ/ເຄິ່ງປີ/ປະຈຳປີ ໄປຫາແຮງງານ ແລະ ສະຫວັດດີການສັງຄົມຂັ້ນເມືອງ |

## 14. ຫຼັກຈັນຍາບັນ

ຂ້າພະເຈົ້າຂໍຢັ້ງຢືນວ່າ ຂ້າພະເຈົ້າໄດ້ອ່ານ ແລະ ເຂົ້າໃຈຫຼັກຈັນຍາບັນສະບັບນີ້. ຖ້າຫາກຂ້າພະເຈົ້າບໍ່ປະຕິບັດຕາມ, ອົງການຈັດຕັ້ງທີ່ກ່ຽວຂ້ອງສາມາດດໍາເນີນການຕາມຄວາມເໝາະສົມ.

ໃນການພົວພັນກັບເດັກ ແລະ ຄອບຄົວ ແລະ ໃນການປະຕິບັດຄວາມຮັບຜິດຊອບຂອງຕົນ ບຸກຄະລາກອນສັງຄົມສົງເຄາະ, ລວມທັງຕາໜ່າງປົກປ້ອງເດັກຂັ້ນບ້ານ (ຕປດ) ຕ້ອງມີມາດຕະຖານສູງທີ່ສຸດສະເໝີ ແລະ ຄວນເປັນແບບຢ່າງທີ່ດີໃນການປະພຶດ ສໍາລັບສະມາຊິກອື່ນໆຂອງຊຸມຊົນ.

ມາດຕະຖານຕໍ່ໄປນີ້ ແນະນໍາວິທີການປະຕິບັດກົດຈັນຍາບັນ. ເຊິ່ງກວມເອົາທັງ ຄວາມສໍາພັນກັບເດັກ ແລະ ຄອບຄົວ ແລະ ແນະນໍາກ່ຽວກັບການຈັດຕັ້ງປະຕິບັດ ຄວາມຮັບຜິດຊອບຢ່າງກວ້າງຂວາງຂອງສະມາຊິກຂອງ ຕປດ. ບໍ່ມີບັນຊີລາຍການທີ່ລະອຽດຄົບຖ້ວນ, ແຕ່ຄວນນໍາຫຼັກການພື້ນຖານຂອງຫຼັກຈັນຍາບັນໄປນໍາໃຊ້ກັບສິ່ງທ້າທາຍໃຫມ່ທີ່ເກີດຂຶ້ນ.

**ຜົນປະໂຫຍດອັນສູງສຸດຂອງເດັກ** - ຕະຫຼອດເວລາ ບຸກຄະລາກອນສັງຄົມສົງເຄາະ ລວມທັງສະມາຊິກ ຕປດ ຄວນເຮັດວຽກເພື່ອຜົນປະໂຫຍດອັນສູງສຸດຂອງເດັກແຕ່ລະຄົນທີ່ໄດ້ຮັບຄວາມເດືອດຮ້ອນ ຫຼື ມີຄວາມສ່ຽງຕໍ່ການຖືກທາລຸນ.

**ພຶດຕິກໍາສ່ວນບຸກຄົນ** - ພຶດຕິກໍາສ່ວນຕົວຂອງສະມາຊິກ ຕປດ ຄວນສອດຄ່ອງກັບຫຼັກການ ແລະ ຈັນຍາບັນຂອງການບໍລິການປົກປ້ອງເດັກ, ໂດຍສະເພາະໃນແງ່ຂອງຄວາມສໍາພັນລະຫວ່າງສະມາຊິກ ຕປດ ກັບເດັກ ແລະ ການປົ່ນປົວເດັກ. ມາດຕະຖານເຫຼົ່ານີ້ແມ່ນໃຊ້ໄດ້ກັບທຸກການພົວພັນຂອງສະມາຊິກ ຕປດ ກັບເດັກ, ລວມທັງການພົວພັນພາຍໃນຄອບຄົວຂອງສະມາຊິກເອງ, ບໍ່ແມ່ນສະເພາະແຕ່ທີ່ກ່ຽວຂ້ອງກັບການເຮັດວຽກຂອງເຂົາເຈົ້າກັບ ຕປດ ເທົ່ານັ້ນ.

**ການຮັກສາເປັນຄວາມລັບ** - ສະມາຊິກ ຕປດ ຕ້ອງປະຕິບັດຕໍ່ຂໍ້ມູນສ່ວນຕົວທີ່ລາວເຂົ້າເຖິງໄດ້ ໃຫ້ເປັນຄວາມລັບ ແລະ ບໍ່ເປີດເຜີຍຂໍ້ມູນເຫຼົ່ານັ້ນໃຫ້ແກ່ບຸກຄົນທີສາມທີ່ບໍ່ແມ່ນສະມາຊິກ ຕປດ ເຊິ່ງບໍ່ມີສ່ວນກ່ຽວຂ້ອງ ແລະ ບໍ່ມີໜ້າທີ່ໃນການເຂົ້າເຖິງຂໍ້ມູນຕາມລະບຽບກົດໝາຍ, ບໍ່ວ່າຈະເປັນຂໍ້ມູນຂອງເດັກ, ຂອງບຸກຄົນອື່ນທີ່ລາຍງານກ່ຽວກັບບັນຫາ/ສິ່ງທີ່ເປັນກັງວົນຂອງເຂົາເຈົ້າ, ຜູ້ຖືກກ່າວຫາວ່າກະທໍາຄວາມຜິດ ຫຼື ເພື່ອນຮ່ວມງານຄົນອື່ນໆ.

**ການເຄົາລົບ ແລະ ການຮ່ວມມື** - ສະມາຊິກ ຕປດ ຄວນປະຕິບັດຕໍ່ສະມາຊິກອື່ນໆ ຫຼື ບຸກຄົນທີ່ລາຍງານກ່ຽວກັບບັນຫາ/ຄວາມກັງວົນຂອງເຂົາເຈົ້າໃຫ້ ຕປດ ດ້ວຍຄວາມເຄົາລົບ ແລະ ເຮັດວຽກກັບເຂົາເຈົ້າດ້ວຍຈິດວິນຍານຂອງການຮ່ວມມື.

**ຄວາມສະເໝີພາບ** - ສະມາຊິກ ຕປດ ຕ້ອງປະຕິບັດຕໍ່ທຸກໆຄົນທີ່ມີສ່ວນຮ່ວມໃນທີມຢ່າງສະເໝີພາບ, ໂດຍບໍ່ຄໍານຶງເຖິງດ້ານສາສະໜາ, ເພດ, ຄວາມພິການ, ຊົນເຜົ່າ, ພື້ນຖານເສດຖະກິດສັງຄົມ, ແລະ ອື່ນໆ.

**ຄວາມຊື່ສັດ** - ຕະຫຼອດເວລາ ສະມາຊິກ ຕປດ ຕ້ອງປະຕິບັດໜ້າທີ່ຂອງຕົນດ້ວຍຄວາມຊື່ສັດ.

**ຄວາມດຸໝັ່ນຂະຫຍັນພຽນ** - ສະມາຊິກ ຕປດ ຕ້ອງປະຕິບັດໜ້າທີ່ຂອງຕົນຢ່າງສຸດຄວາມສາມາດ ແລະ ພະຍາຍາມເຮັດທຸກໜ້າທີ່ຮັບຜິດຊອບຂອງຕົນ.

**ຜົນປະໂຫຍດເຊື່ອງຊ້ອນ** - ສະມາຊິກ ຕປດ ຕ້ອງພະຍາຍາມຕະຫຼອດເວລາເພື່ອຫຼີກເວັ້ນຜົນປະໂຫຍດເຊື່ອງຊ້ອນ. ຫາກມີຄວາມເປັນໄປໄດ້ທີ່ຈະເກີດຜົນປະໂຫຍດເຊື່ອງຊ້ອນ, ສະມາຊິກ ຕປດ ຕ້ອງໄດ້ລາຍງານທັນທີ ແລະ ປຶກສາຫາລືເລື່ອງນີ້ກັບນາຍບ້ານ ຫຼື ຮສສ ເມືອງ ຫຼື ຮສສ ແຂວງ ຫຼື ປຶກສາກັບພະນັກງານສັງຄົມສົງເຄາະທີ່ເປັນມືອາຊີບ. ໃນສະພາບການແບບນີ້, ສະມາຊິກ ຕປດ ບໍ່ຄວນມີສ່ວນກ່ຽວຂ້ອງໃນການແກ້ໄຂເຫດການ ຫຼື ການໃຊ້ຄວາມຮຸນແຮງ ທີ່ຜູ້ຖືກເຄາະຮ້າຍ ຫຼື ຜູ້ກະທໍາຜິດແມ່ນສະມາຊິກຂອງຄອບຄົວ ຫຼື ເພື່ອນສະໜິດຂອງເຂົາເຈົ້າ.

**ການປ້ອງກັນການຂູດຮີດ ແລະ ການລະເມີດທາງເພດ** - ຫ້າມກະທໍາການໃດໆ ຫຼື ກະທໍາຮູບແບບການລະເມີດທາງເພດໃດໆ ທີ່ອາດສົ່ງຜົນເສຍຫາຍທາງຮ່າງກາຍ, ທາງເພດ ຫຼື ທາງດ້ານຈິດໃຈຕໍ່ບຸກຄົນອື່ນ, ໂດຍສະເພາະແມ່ນແມ່ຍິງ ແລະ ເດັກ. ຫ້າມມີສ່ວນຮ່ວມກັບຜູ້ໄດ້ຮັບຜົນປະໂຫຍດໃນການຂູດຮີດທາງເພດ ຫຼື ການລະເມີດທາງເພດ ບໍ່ວ່າຈະເປັນກໍລະນີໃດໆກໍ່ຕາມ. ບໍ່ຄວນໃຊ້ຂໍ້ອ້າງທີ່ວ່າ ສະມາຊິກ ຕປດ ມີຄວາມເຂົ້າໃຈຜິດກ່ຽວກັບອາຍຸຂອງເດັກ ເພື່ອເປັນຂໍ້ອ້າງໃນການປົກປ້ອງຕົນເອງ. ຫ້າມມີການແລກປ່ຽນເປັນເງິນ, ການຈ້າງງານ, ສິນຄ້າ ຫຼື ການບໍລິການກັບບຸກຄົນໃດໆ. ໃຫ້ລາຍງານກໍລະນີການຂູດຮີດທາງເພດ ແລະ ການລະເມີດທາງເພດຕໍ່ເຈົ້າໜ້າທີ່ຕໍາຫຼວດ, ສຍລ ແລະ ອໍານາດການປົກຄອງບ້ານໃນ

ທັນທີໂດຍມີການຮັກສາເປັນຄວາມລັບ.

**ລາຍງານກ່ຽວກັບບັນຫາ/ສິ່ງທີ່ໜ້າເປັນຫ່ວງ** ຖ້າສະມາຊິກ ຕປດ ຫາກມີຄວາມເປັນຫ່ວງກ່ຽວກັບພຶດຕິກຳຂອງສະມາຊິກ ຕປດ ຄົນອື່ນ ແລະ/ຫຼື ເຊື່ອວ່າສະມາຊິກ ຕປດ ຄົນນັ້ນໄດ້ລະເມີດກົດຈັນຍາບັນນີ້, ຄວນມີການລາຍງານກ່ຽວກັບບັນຫາ/ສິ່ງທີ່ໜ້າເປັນຫ່ວງດັ່ງກ່າວໃຫ້ແກ່ນາຍບ້ານ ຫຼື ຮສສ ເມືອງ ຫຼື ຮສສ ແຂວງ ຢ່າງເປັນຄວາມລັບ. ຖ້າຫາກວ່າບໍ່ສາມາດລາຍງານໄດ້, ສະມາຊິກ ຕປດ ຄວນລາຍງານກ່ຽວກັບບັນຫາ/ສິ່ງທີ່ໜ້າເປັນຫ່ວງຂອງເຂົາເຈົ້າຕໍ່ ກຊ ຮສສ ໃນຂັ້ນສູນກາງ.

**ວັນທີ:** ......................................................

**ຊື່:** ...........................................................

**ຕຳແໜ່ງ:** ....................................................

**ສະຖານທີ່:** ..................................................

**ລາຍເຊັນ:** ....................................................

## ຄຳແນະນຳ

- ຫົວໜ້າ ຕປດ ຄວນກະກຽມ ແລະ ສົ່ງແບບຟອມລາຍງານຫນຶ່ງສະບັບຕໍ່ບ້ານ ເປັນປະຈຳເດືອນ, ໄຕມາດ ແລະ ປະຈຳປີ ໃຫ້ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມຂັ້ນເມືອງ.
- ແບບຟອມຄວນໄດ້ຮັບການກວດກາຄືນໂດຍນາຍບ້ານກ່ອນທີ່ສົ່ງໃຫ້ ຮສສ ເມືອງ. ຖ້າຫົວໜ້າ ຕປດ ເປັນບຸກຄົນດຽວກັນກັບນາຍບ້ານ, ໃຫ້ລົງເຊັນໃສ່ທັງສອງບ່ອນ ຫົວໜ້າ ຕປດ ແລະ ນາຍບ້ານ .
- ໃຫ້ຈົດບັນທຶກຊື່ ແລະ ຂໍ້ມູນພື້ນຖານຂອງເດັກທີ່ມີຄວາມສ່ຽງ ແລະ ໝາຍກາ √ ໃສ່ບ່ອນຄວາມສ່ຽງທີ່ເດັກມີ.
- ເດັກອາດມີຄວາມສ່ຽງຫຼາຍກວ່າໜຶ່ງອັນ, ຖ້າເປັນແນວນັ້ນ, ໃຫ້ໝາຍໃສ່ທຸກບ່ອນຄວາມສ່ຽງທີ່ເດັກມີ.
- ຖ້າເດັກບໍ່ມີຄວາມສ່ຽງຕາມທີ່ໄດ້ຂຽນໄວ້ຢູ່ໃນບັນຊີລາຍການຄວາມສ່ຽງ, ໃຫ້ໝາຍ √ ໃສ່ບ່ອນຄຳວ່າ ອື່ນໆ ແລະໃຫ້ອະທິບາຍໃສ່ບ່ອນ ຂໍສັງເກດ .
- ຮູບແບບຂອງການໝາຍເລກທີຂອງກໍລະນີຄວນເປັນແບບນີ້: ເລກທີ.1/2021 . ກະລຸນາເບິ່ງແບບຟອມການເກັບຮັກສາບົດສະຫຼຸບຂອງບ້ານ(ໜ້າທີ 74) ເພື່ອໃຫ້ແນ່ໃຈວ່າມີການໝາຍເລກທີຂອງກໍລະນີ ທີ່ຖືກຕ້ອງໃນແຕ່ລະໄຕມາດ.

## ຄຳນິຍາມ

**ເດັກກຳພອຍ** ໝາຍເຖິງ ເດັກທີ່ທັງພໍ່ ແລະ ແມ່ເສຍຊີວິດທັງໝົດ.

**ເດັກກຳພ້າ** ໝາຍເຖິງ ເດັກທີ່ພໍ່ ຫຼື ແມ່ໄດ້ເສຍຊີວິດ.

**ການປ່ອຍປະລະເລີຍ** ໝາຍເຖິງພໍ່ແມ່ ຫຼື ຜູ້ປົກຄອງລົ້ມເຫຼວໃນການຕອບສະໜອງຄວາມຕ້ອງການທາງຮ່າງກາຍ ຫຼືທາງຈິດໃຈຂັ້ນພື້ນຖານຂອງເດັກຢ່າງຕໍ່ເນື່ອງ.

**ການປະຖິ້ມ** ໝາຍເຖິງການຕັດສິນໃຈຂອງພໍ່ແມ່ ຫຼື ຜູ້ປົກຄອງທີ່ຈະຢຸດຕິບົດບາດຂອງເຂົາເຈົ້າຢ່າງຖາວອນໃນຊີວິດຂອງເດັກ.

**ເດັກທີ່ຖືກທາລຸນທາງຮ່າງກາຍ** ໝາຍເຖິງເດັກທີ່ຖືກພໍ່ແມ່, ຜູ້ປົກຄອງ ຫຼື ຜູ້ອື່ນທຸບຕີ ຫຼື ທໍລະມານ.

**ເດັກທີ່ຖືກລະເມີດທາງເພດ** ໝາຍເຖິງເດັກທີ່ຖືກຂົ່ມຂືນ, ຫຼື ຕົກເປັນຜູ້ເຄາະຮ້າຍຈາກຄວາມສຳພັນທາງເພດ ຫຼື ການລາມົກອານາຈານ.

**ເດັກພິການ** ໝາຍເຖິງເດັກທີ່ມີຄວາມບົກຜ່ອງທາງກາຍ, ຈິດໃຈ, ສະຕິປັນຍາ ຫຼື ຄວາມຮູ້ສຶກໃນໄລຍະຍາວ ເຊິ່ງອາດຂັດຂວາງການມີສ່ວນຮ່ວມຢ່າງເຕັມສ່ວນ ແລະ ປະສິດທິພາບຂອງການມີສ່ວນຮ່ວມໃນສັງຄົມບົນພື້ນຖານຄວາມສະເໝີພາບກັບຜູ້ອື່ນ.

**ເດັກທີ່ເປັນຜູ້ເຄາະຮ້າຍຈາກການຄ້າມະນຸດ** ໝາຍເຖິງ ເດັກຜູ້ທີ່ໄດ້ຮັບຄວາມເດືອດຮ້ອນໂດຍກົງທາງດ້ານສຸຂະພາບກາຍ ຫຼື ຈິດໃຈ, ກຽດສັກສີ, ເສລີພາບ ຫຼື ຊັບສິນຂອງຕົນ ທີ່ເກີດຈາກການຄ້າມະນຸດທຸກຮູບແບບ.

**ເດັກທີ່ໄດ້ຮັບຜົນກະທົບຈາກເຊື້ອເອັສໄອວີ/ເອດ** ໝາຍເຖິງ ເດັກທີ່ຕິດເຊື້ອເອັສໄອວີ/ເອດ, ເດັກທີ່ເປັນກຳພ້າ, ກຳພອຍເນື່ອງມາຈາກເຊື້ອເອັສໄອວີ/ເອດ ຫຼື ເດັກທີ່ອາໄສຢູ່ກັບສະມາຊິກຄອບຄົວທີ່ເປັນໂຣກເອດ ຫລື ຕິດເຊື້ອເອັສ.

**ແຮງງານເດັກ** ໝາຍເຖິງເດັກທີ່ມີອາຍຸຕໍ່າກວ່າສິບສອງປີ ທີ່ເຮັດວຽກໃນບ່ອນທີ່ບໍ່ເປັນອັນຕະລາຍ ຫຼື ເປັນອັນຕະລາຍ; ແລະໃຫ້ເດັກເຮັດວຽກຫຼາຍກວ່າຊົ່ວໂມງເຮັດວຽກຕາມທີ່ໄດ້ກຳນົດໄວ້ໃນກົດໝາຍແຮງງານ ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງ.

**ການແຕ່ງງານເດັກ** ແມ່ນການແຕ່ງງານຂອງເດັກຍິງ ແລະ ເດັກຊາຍກ່ອນອາຍຸ 18 ປີ.

**ການຖືພາກ່ອນໄວອັນຄວນ** ຫມາຍເຖິງເດັກຍິງທີ່ມີການຖືພາກ່ອນອາຍຸ 18 ປີ.

**ເດັກກະທຳຜິດ** ໝາຍເຖິງເດັກທີ່ຖືກດຳເນີນຄະດີທາງອາຍາ: ໃນຖານະເປັນຜູ້ຖືກຫາ, ເປັນຈຳເລີຍ ຫຼື ຜູ້ຖືກສານຕັດສິນວ່າມີຄວາມຜິດທາງອາຍາ.

**ເດັກບໍ່ເຂົ້າໂຮງຮຽນ** ໝາຍເຖິງ ເດັກທີ່ມີເກນອາຍຸເຂົ້າຮຽນ ແຕ່ບໍ່ໄດ້ເຂົ້າໂຮງຮຽນ.

## 15. ແບບຟອມເກັບກຳຂໍ້ມູນ ແລະ ການລາຍງານຂອງຂັ້ນເມືອງ ແລະ ແຂວງ

| ເລກທີ ກໍລະນີ | ຊື່ ແລະ ນາມສະກຸນ ເດັກ | ອາຍຸ | ເພດ | ຊົນເຜົ່າ | ປະເພດບັນຫາ | | | | | | | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | | | | ເດັກກຳພອຍ | ເດັກກຳພ້າ | ເດັກທີ່ຖືກປະລະ | ເດັກທີ່ຖືກປະຖິ້ມ | ເດັກທີ່ຖືກທຳຮ້າຍຮ່າງກາຍ | ເດັກທີ່ຖືກລ່ວງລະເມີດທາງເພດ | ເດັກພິການ | ເດັກຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ | ເດັກທີ່ຖືກຜົນກະທົບຈາກໂລກເອສ ຫຼື ເຊື້ອເອັສໄອວີ | ການໃຊ້ແຮງງານເດັກ | ເດັກແຕ່ງງານ | ຖືພາເດັກ | ເດັກກະທຳຜິດ | ເດັກບໍ່ໄດ້ເຂົ້າໂຮງຮຽນ | ອື່ນໆ (ກະລຸນາລະບຸ) | |
| ເລກທີ 1/2021 | (ຕົວຢ່າງ) ນາງ ນ້ອຍ ແສງໄຊ | 13 | ຍິງ | ລາວ-ໄຕ | | | | | | V | | | | | | | | V | | ໄດ້ສິ່ງຕໍ່ໄປ ຫາສາທາ ເມືອງ ແລະ ສຍລ |
| ເລກທີ 2/2021 | (ຕົວຢ່າງ) ທ້າວ ສັກ ທອງດີ | 6 | ຊາຍ | ລາວ-ໄຕ | | V | V | | | | | | | | | | | | V | ຂາດສານ ອາຫານ, ພໍ່ ເສຍຊີວິດ ແລະ ແມ່ ບໍ່ມີວຽກ ເຮັດງານທຳ |
| | | | | | | | | | | | | | | | | | | | | |
| | | | | | | | | | | | | | | | | | | | | |

## 16. ແບບຟອມການເກັບຮັກສາປຶ້ມສະຫຼຸບຂອງບ້ານ

### ຄໍາແນະນໍາ

- ແບບຟອມນີ້ແມ່ນ**ເພື່ອບັນທຶກຂໍ້ມູນໃນຂັ້ນບ້ານ.**
- ຫົວໜ້າ ຕປດ ໃນບ້ານຄວນສະຫຼຸບຈໍານວນທັງຫມົດໃນໄຕມາດ ຫຼື ໃນປີໂດຍອີງໃສ່ "ແບບຟອມເກັບກໍາຂໍ້ມູນ ຕປດ ກ່ຽວກັບເດັກນ້ອຍທີ່ມີຄວາມສ່ຽງ". ໃຫ້ຮັບປະກັນຄວາມສອດຄ່ອງຂອງຂໍ້ມູນ "ຈໍານວນ ຂອງເດັກທັງໝົດໃນບ້ານ" ແລະ "ຈໍານວນ ເດັກທີ່ມີຄວາມສ່ຽງໃນບ້ານ" ລະຫວ່າງແບບຟອມເກັບຮັກສາປຶ້ມສະຫຼຸບຂອງບ້ານ ແລະ ແບບຟອມເກັບກໍາຂໍ້ມູນ ຕປດ ກ່ຽວກັບເດັກທີ່ມີຄວາມສ່ຽງ.
- ສໍາລັບ "ຄວາມຖີ່ຂອງການລາຍງານ", ໃສ່ "ປະຈໍາເດືອນ/ໄຕມາດ/ປະຈໍາປີ".

| ໄລຍະເວລາຂອງການລາຍງານ | ຄວາມຖີ່ຂອງການລາຍງານ | ຈໍານວນເດັກໃນບ້ານ | | ຈໍານວນເດັກທີ່ມີຄວາມສ່ຽງໃນບ້ານ | | | ລາຍງານໂດຍ |
|---|---|---|---|---|---|---|---|
| | | ລວມ | ຍິງ/ຊາຍ | ເລກທີກໍລະນີ | ລວມ | ເດັກຍິງ/ເດັກຊາຍ | |
| [ຕົວຢ່າງ] ມັງກອນ ມີນາ 2021 | ປະຈໍາໄຕມາດ | 230 | 130/100 | ເລກທີ.1/2021 - ເລກທີ.2/2021 | 2 | 1 / 1 | ຊື່/ຕໍາແໜ່ງ |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |

KOICA
People Peace Prosperity Planet

IPCREA

Australian Aid

unicef
ເພື່ອເດັກທຸກໆຄົນ

United For Every Child: 50th Anniversary of UNICEF in Lao PDR
ສາມັກຄີຮ່ວມໃຈ ເພື່ອເດັກທຸກໆຄົນ: 50 ປີ ຂອງ ອົງການ ຢູນິເຊັບ ແຫ່ງ ສປປ ລາວ